? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ໂຄງການ Medi-Cal Rx ຈະບໍລິການຈັດການ ການຄຸ້ມຄອງຢາຕາມໃບສັ່ງແພດສຳລັບຄົນເຈັບນອກ. ເພື່ອຮຽນຮູ້ເພີ່ມຕື່ມ, ໃຫ້ອ່ານຫົວຂໍ້ "ບັນດາໂຄງການ ແລະ ການບໍລິການອື່ນໆຂອງ Medi-Cal" ໃນພາກທີ 4.

ແພດປະຈຳ (PCP)

ແພດປະຈຳ (PCP) ຂອງທ່ານ ແມ່ນຜູ້ໃຫ້ບໍລິການທີ່ມີໃບ ອະນຸຍາດ ທີ່ທ່ານຈະໄປປຶ່ນປົວສຸຂະພາບສ່ວນໃຫຍ່ຂອງທ່ານ. ນອກຈາກນັ້ນ, PCP ຂອງທ່ານ ກໍຍັງຈະຊ່ວຍໃຫ້ທ່ານໄດ້ຮັບ ການດູແລປະເພດອື່ນໆທີ່ທ່ານຕ້ອງການອີກດ້ວຍ. ທ່ານຕ້ອງ ເລືອກ PCP ພາຍໃນ 30 ວັນ ນັບຈາກເວລາທີ່ທ່ານລົງທະບຽນ ເຂົ້າຮ່ວມ Anthem ແລ້ວ. ທ່ານສາມາດເລືອກແພດທົ່ວໄປ, ແພດປະສູດ/ແພດພະຍາດຍິງ (OB/GYN), ແພດປະຈຳຄອບຄົວ, ອາຍຸລະແພດ ຫຼື ແພດເດັກເປັນ PCP ຂອງທ່ານໄດ້ ໂດຍຂຶ້ນກັບ ອາຍຸ ແລະ ເພດຂອງທ່ານ.

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ພະຍານຊ່ຽວຊານ (NP), ຜູ້ຊ່ວຍແພດ (PA) ຫຼື ໝໍພະດຸງຄັນທີ່ມີໃບຮັບຮອງ ກໍສາມາດເຮັດໜ້າທີ່ເປັນ PCP ຂອງທ່ານໄດ້. ຖ້າທ່ານເລືອກ NP, PA ຫຼື ໝໍພະດຸງຄັນທີ່ມີໃບຮັບຮອງ, ທ່ານສາມາດຈະໄດ້ຮັບການມອບໝາຍທ່ານໝໍຄົນໜຶ່ງ ເພື່ອຄວບຄຸມຕິດຕາມການດູແລຂອງທ່ານ. ຖ້າທ່ານຢູ່ໃນທັງ Medicare ແລະ Medi-Cal ຫຼື ຖ້າທ່ານ ມີປະກັນໄພການດູແລສຸຂະພາບແບບຄົບຖ້ວນອື່ນ, ທ່ານບໍ່ຈຳເປັນຕ້ອງເລືອກ PCP.

ທ່ານສາມາດເລືອກ ຜູ້ໃຫ້ບໍລິການເບິ່ງແຍງດູແລສຸຂະພາບອິນເດຍ (IHCP), ສູນສຸຂະພາບທີ່ຜ່ານການຮັບຮອງຈາກລັດຖະບານກາງ (FQHC) ຫຼື ຄລີນິກສຸຂະພາບຊົນນະບົດ (RHC) ເປັນ PCP ຂອງທ່ານໄດ້. ທ່ານອາດຈະສາມາດເລືອກ PCP ໜຶ່ງຄົນສຳລັບຕົວທ່ານເອງ ຫຼື ສຳລັບສະມາຊິກຄອບຄົວຄົນອື່ນຂອງທ່ານທີ່ເປັນສະມາຊິກຂອງ Anthem, ຕາບໃດທີ່ PCP ຍັງໃຫ້ບໍລິການຢູ່ ໂດຍຂຶ້ນຢູ່ກັບປະເພດຂອງຜູ້ໃຫ້ບໍລິການ.

ໝາຍເຫດ: ຄົນອາເມລິກາເຊື້ອສາຍອິນເດຍສາມາດເລືອກ IHCP ເປັນ PCP ຂອງຕົນໄດ້, ເຖິງແມ່ນວ່າ IHCP ຈະບໍ່ຢູ່ໃນເຄືອຂ່າຍຂອງ Anthem ກໍຕາມ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານບໍ່ເລືອກ PCP ພາຍໃນ 30 ວັນ ນັບຈາກການ ລົງທະບຽນ, Anthem ຈະກຳນົດ PCP ຄົນໃດໜຶ່ງໃຫ້ແກ່ທ່ານ. ຖ້າທ່ານໄດ້ຮັບການມອບໝາຍໄປຍັງ PCP ຄົນໜຶ່ງ ແລະ ທ່ານຕ້ອງການຈະປ່ຽນ, ໃຫ້ໂທຫາ **1-800-407-4627 (TTY 711)**. ການປ່ຽນຈະມີຜົນບັງຄັບໃຊ້ໃນມື້ທຳອິດຂອງ ເດືອນຕໍ່ໄປ.

PCP ຂອງທ່ານຈະ:

- ທຳຄວາມຮູ້ຈັກປະຫວັດ ແລະ ຄວາມຕ້ອງການດ້ານ ສຸຂະພາບຂອງທ່ານ
- ຮັກສາບັນທຶກສຸຂະພາບຂອງທ່ານ
- ໃຫ້ການດູແລເຊີງປ້ອງກັນ ແລະ ການດູແລຕາມປົກກະຕິ ທີ່ທ່ານຕ້ອງການ
- ສົ່ງຕໍ່ (ນຳສົ່ງ) ທ່ານໄປຫາຜູ້ຊ່ຽວຊານສະເພາະທາງ ຖ້າທ່ານຕ້ອງການ
- ຈັດຫາການດູແລຢູ່ໃນໂຮງໝໍ ຖ້າທ່ານຕ້ອງການ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ທ່ານສາມາດເບິ່ງໃນສະໝຸດລາຍຊື່ຜູ້ໃຫ້ບໍລິການ ເພື່ອຊອກຫາ PCP ໃນເຄືອຂ່າຍຂອງ Anthem. ສະໝຸດລາຍຊື່ຜູ້ໃຫ້ບໍລິການ ມີລາຍຊື່ຂອງບັນດາ IHCP, FQHC ແລະ RHC ທີ່ເຮັດວຽກ ກັບ Anthem.

ທ່ານສາມາດເບິ່ງສະໝຸດລາຍຊື່ຜູ້ໃຫ້ບໍລິການຂອງ Anthem ໄດ້ທາງອອນລາຍ ທີ່ **anthem.com/ca/medi-cal**. ຫຼື ທ່ານສາມາດຂໍໃຫ້ສົ່ງສະໝຸດລາຍຊື່ຜູ້ໃຫ້ບໍລິການໃຫ້ທ່ານທາງ ໄປສະນີໄດ້ ໂດຍການໂທຫາເບີ **1-800-407-4627 (TTY 711)**. ນອກຈາກນັ້ນ ທ່ານກໍຍັງສາມາດໂທເພື່ອສອບຖາມວ່າ PCP ທີ່ທ່ານຕ້ອງການ ຍັງຮັບຄົນເຈັບໃໝ່ຢູ່ ຫຼື ບໍ່.

ຕົວເລືອກທ່ານໝໍ ແລະ ຜູ້ໃຫ້ບໍລິການອື່ນໆ

ທ່ານເປັນຜູ້ຮູ້ເຖິງຄວາມຕ້ອງການດ້ານການດູແລສຸຂະພາບ ຂອງທ່ານດີທີ່ສຸດ, ສະນັ້ນ ມັນຈະດີທີ່ສຸດຖ້າທ່ານເປັນຄົນເລືອກ PCP ຂອງທ່ານ. ມັນຈະດີທີ່ສຸດໃນການຢູ່ກັບ PCP ຄົນດຽວ ເພື່ອໃຫ້ພວກເຂົາສາມາດຮູ້ຈັກຄວາມຕ້ອງການດ້ານການດູແລ ສຸຂະພາບຂອງທ່ານ. ຖ້າທ່ານຕ້ອງການປ່ຽນ PCP ໃໝ່, ທ່ານ

ສາມາດປ່ຽນໄດ້ທຸກເວລາ. ທ່ານຕ້ອງເລືອກ PCP ທີ່ຢູ່ໃນເຄືອຂ່າຍຜູ້ໃຫ້ບໍລິການຂອງ Anthem ແລະ ກຳລັງຮັບເອົາຄົນເຈັບໃໝ່.

ຜູ້ທີ່ທ່ານເລືອກໃໝ່ຈະກາຍເປັນ PCP ຂອງທ່ານໃນມື້ທຳອິດຂອງເດືອນຕໍ່ໄປ ຫຼັງຈາກທີ່ທ່ານໄດ້ປ່ຽນແປງ.

ເພື່ອປ່ຽນ PCP ຂອງທ່ານ, ໃຫ້ໂທຫາເບີ **1-800-407-4627 (TTY 711)** ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ ຫຼື ເຂົ້າໄປທີ່ **anthem.com/ca/medi-cal**.

Anthem ສາມາດປ່ຽນ PCP ຂອງທ່ານ ຖ້າ PCP ບໍ່ຮັບຄົນເຈັບໃໝ່ແລ້ວ, ໄດ້ອອກຈາກເຄືອຂ່າຍຂອງ Anthem ໄປແລ້ວ, ບໍ່ໄດ້ໃຫ້ການດູແລຄົນເຈັບໃນໄວອາຍຸຂອງທ່ານ ຫຼື ຖ້າຫາກວ່າມີຂໍ້ກັງວົນກ່ຽວກັບຄຸນນະພາບກັບ PCP ທີ່ຍັງບໍ່ໄດ້ຮັບການແກ້ໄຂ. Anthem ຫຼື PCP ຂອງທ່ານກໍຍັງອາດຈະຂໍໃຫ້ທ່ານປ່ຽນໄປເປັນ PCP ຄົນໃໝ່ອີກດ້ວຍ ຖ້າທ່ານບໍ່ສາມາດເຂົ້າກັນໄດ້ກັບ ຫຼື ບໍ່ເຫັນດີນຳ PCP ຂອງທ່ານ ຫຼື ຖ້າທ່ານບໍ່ໄປ ຫຼື ໄປລ້າຊ້າ ໄປ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ຍັງການນັດໝາຍ. ຖ້າ Anthem ຕ້ອງການປ່ຽນ PCP ຂອງທ່ານ, Anthem ຈະແຈ້ງບອກທ່ານເປັນລາຍລັກອັກສອນ.

ຖ້າທ່ານປ່ຽນ PCP, ທ່ານຈະໄດ້ຮັບຈົດໝາຍ ແລະ ບັດ ID ສະມາຊິກ Anthem ໃໝ່ທາງໄປສະນີ. ບັດໃໝ່ນີ້ຈະມີຊື່ PCP ໃໝ່ຂອງທ່ານ. ໂທຫາ ສູນດູແລລູກຄ້າ ຖ້າທ່ານມີຄຳຖາມກ່ຽວກັບການໄດ້ຮັບບັດ ID ໃໝ່.

ບາງຢ່າງທີ່ຕ້ອງໄດ້ຄຳນຶງເຖິງ ເມື່ອເລືອກ PCP ຂອງທ່ານ:

- PCP ໃຫ້ການດູແລເດັກບໍ?
- PCP ເຮັດວຽກຢູ່ຄລີນິກທີ່ຂ້ອຍມັກໃຊ້ບໍລິການບໍ?
- ຫ້ອງການຂອງ PCP ຢູ່ໃກ້ເຮືອນ, ບ່ອນເຮັດວຽກ ຫຼື ໂຮງຮຽນຂອງລູກຂ້ອຍບໍ?
- ຫ້ອງການຂອງ PCP ຢູ່ໃກ້ບ່ອນທີ່ຂ້ອຍອາໄສຢູ່ ແລະ ໄປຫາຫ້ອງການຂອງ PCP ໄດ້ງ່າຍບໍ?
- ທ່ານໝໍ ແລະ ພະນັກງານສາມາດເວົ້າໄດ້ພາສາຂອງຂ້ອຍບໍ?

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- PCP ເຮັດວຽກກັບໂຮງໝໍທີ່ຂ້ອຍມັກໃຊ້ບໍລິການບໍ?
- PCP ໃຫ້ການບໍລິການທີ່ຂ້ອຍຕ້ອງການບໍ?
- ຊົ່ວໂມງເຮັດວຽກຂອງ PCP ເໝາະກັບຕາຕະລາງຂອງ ຂ້ອຍບໍ?
- PCP ເຮັດວຽກກັບຜູ້ຊ່ຽວຊານທີ່ຂ້ອຍໃຊ້ບໍລິການບໍ?

ການນັດໝາຍປະເມີນສຸຂະພາບເບື້ອງຕົ້ນ (IHA)

Anthem ຂໍແນະນຳວ່າ ໃນຖານະເປັນສະມາຊິກໃໝ່, ທ່ານຕ້ອ ງໄປພົບ PCP ໃໝ່ຂອງທ່ານພາຍໃນ 120 ວັນ ເພື່ອການນັດໝ າຍປະເມີນສຸຂະພາບເບື້ອງຕົ້ນ (IHA). ຈຸດປະສົງຂອງ IHA ແ ມ່ນເພື່ອຊ່ວຍໃຫ້ PCP ສຶກສາເຖິງປະຫວັດ ແລະ ຄວາມຕ້ອງກ ານໃນການດູແລສຸຂະພາບຂອງທ່ານ. PCP ຂອງທ່ານອາດຈະ ຖາມທ່ານບາງຄຳຖາມກ່ຽວກັບປະຫວັດສຸຂະພາບຂອງທ່ານ ຫຼື ຂໍໃຫ້ທ່ານເຮັດແບບສອບຖາມ. ນອກຈາກນັ້ນ, PCP ຂອງທ່ານ ກໍຍັງຈະບອກທ່ານກ່ຽວກັບການໃຫ້ຄຳປຶກສາ ແລະ ຫ້ອງຮຽນຮູ້ ກ່ຽວກັບສຸຂະພາບທີ່ອາດຈະຊ່ວຍທ່ານໄດ້.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ເມື່ອທ່ານໂທຫາເພື່ອກຳນົດເວລາການນັດໝາຍ IHA ຂອງທ່ານ, ໃຫ້ບອກບຸກຄົນທີ່ຮັບສາຍວ່າ ທ່ານແມ່ນສະມາຊິກຂອງ Anthem. ໃຫ້ໝາຍເລກບັດ ID ຂອງ Anthem ຂອງທ່ານ.

ຖືບັດປະຈຳຕົວ BIC ແລະ ບັດ ID ຂອງ Anthem ຂອງທ່ານໄປ ຍັງການນັດໝາຍຂອງທ່ານ ມັນເປັນການດີໃນການເອົາບັນຊີ ລາຍການຢາ ແລະ ຄຳຖາມຂອງທ່ານໄປນຳ ໃນເວລາທີ່ທ່ານໄປ ພົບແພດ. ກຽມຕົວໃຫ້ພ້ອມໃນການໂອ້ລົມກັບ PCP ຂອງທ່ານ ກ່ຽວກັບຄວາມຕ້ອງການດ້ານການດູແລສຸຂະພາບ ແລະ ຂໍ້ກັງວົນ ຕ່າງໆຂອງທ່ານ.

ຢ່າລືມໂທຫາຫ້ອງການຂອງ PCP ຂອງທ່ານ ຖ້າທ່ານຈະໄປຊ້າ ຫຼື ບໍ່ສາມາດໄປຕາມການນັດໝາຍໄດ້.

ຖ້າທ່ານມີຄຳຖາມກ່ຽວກັບ IHA, ໃຫ້ໂທຫາເບີ **1-800-407-4627 (TTY 711)**.

ການດູແລຕາມປົກກະຕິ

ການດູແລຕາມປົກກະຕິ ແມ່ນການດູແລສຸຂະພາບແບບເປັນ ປົກກະຕິ. ມັນປະກອບດ້ວຍ ການດູແລເຊີງປ້ອງກັນ, ເຊິ່ງຍັງ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ເອີ້ນອີກຢ່າງໜຶ່ງວ່າ: ການດູແລເພື່ອຄວາມສະຫວັດດີພາບ ຫຼື ເພື່ອສຸຂະພາບທີ່ດີ. ມັນຈະຊ່ວຍທ່ານມີສຸຂະພາບແຂງແຮງ ແລະ ຊ່ວຍປ້ອງກັນບໍ່ໃຫ້ທ່ານເຈັບປ່ວຍ. ການດູແລເຊີງປ້ອງກັນ ປະກອບດ້ວຍ ການກວດສຸຂະພາບປົກກະຕິ ແລະ ການໃຫ້ຄວາມຮູ້ ແລະ ໃຫ້ຄຳປຶກສາກ່ຽວກັບສຸຂະພາບ.

Anthem ຂໍແນະນຳເປັນພິເສດໃຫ້ເດັກນ້ອຍ ເຂົ້າຮັບການດູແລຕາມປົກກະຕິ ແລະ ການດູແລເຊີງປ້ອງກັນ. ບັນດາສະມາຊິກຂອງ Anthem ສາມາດເຂົ້າຮັບການບໍລິການເຊີງປ້ອງກັນແຕ່ເບື້ອງຕົ້ນທຸກຢ່າງທີ່ໄດ້ຮັບການແນະນຳໂດຍ ສະຖາບັນແພດເດັກອາເມລິກາ ແລະ ສູນບໍລິການ Medicare ແລະ Medicaid. ການກວດກັ່ນຕອງເຫຼົ່ານີ້ ລວມມີການກວດຫູ ແລະ ສາຍຕາ, ເຊິ່ງສາມາດຊ່ວຍຮັບປະກັນການພັດທະນາການ ແລະ ການຮຽນຮູ້ທີ່ມີສຸຂະພາບແຂງແຮງດີ. ສຳລັບບັນຊີລາຍການການບໍລິການທີ່ໄດ້ຮັບການແນະນຳຈາກແພດເດັກ, ກະລຸນາອ່ານຄຳແນະນຳກ່ຽວກັບ “ອະນາຄົດທີ່ສົດໃສ (Bright Futures)” ຈາກສະຖາບັນແພດເດັກອາເມລິກາ ທີ່

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

https://downloads.aap.org/AAP/PDF/periodicity_schedule.pdf.

ນອກຈາກນັ້ນ ການດູແລຕາມປົກກະຕິ ກໍຍັງລວມເຖິງການດູແລໃນເວລາທີ່ທ່ານເຈັບປ່ວຍອີກດ້ວຍ. Anthem ຄຸ້ມຄອງການດູແລຕາມປົກກະຕິຈາກ PCP ຂອງທ່ານ.

PCP ຂອງທ່ານຈະ:

- ໃຫ້ການດູແລຕາມປົກກະຕິສ່ວນໃຫຍ່ຂອງທ່ານ, ລວມທັງການກວດສຸຂະພາບຕາມປົກກະຕິ, ການສັກຢາ, ການປິ່ນປົວ, ໃບສັ່ງແພດ ແລະ ຄຳແນະນຳທາງການແພດ
- ຮັກສາບັນທຶກສຸຂະພາບຂອງທ່ານ
- ນຳສົ່ງ (ສົ່ງຕໍ່) ທ່ານໄປຫາຜູ້ຊ່ຽວຊານສະເພາະທາງ ຖ້າຈຳເປັນ
- ສັ່ງສ່ອງລັງສີ, ການຖ່າຍພາບລັງສີເຕົ້ານົ່ມ ຫຼື ການກວດໃນຫ້ອງແລັບ ຖ້າທານມີຄວາມຕ້ອງການ

ເມື່ອທ່ານຕ້ອງການການດູແລຕາມປົກກະຕິ, ທ່ານຈະຕ້ອງໂທຫາທ່ານໝໍຂອງທ່ານເພື່ອນັດພົບ. ຢ່າລືມໂທຫາ PCP ຂອງ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ທ່ານ ກ່ອນທີ່ທ່ານຈະຮັບການດູແລທາງການແພດ, ເວັ້ນເສຍ ແຕ່ວ່າເປັນເຫດສຸກເສີນເທົ່າ. ສຳລັບເຫດສຸກເສີນ, ໃຫ້ໂທຫາ **911** ຫຼື ໄປຫາຫ້ອງສຸກເສີນທີ່ຢູ່ໃກ້ສຸດ.

ເພື່ອຮຽນຮູ້ເພີ່ມຕື່ມກ່ຽວກັບການດູແລສຸຂະພາບ ແລະ ການບໍລິການທີ່ແຜນປະກັນຂອງທ່ານຄຸ້ມຄອງ ແລະ ສິ່ງທີ່ບໍ່ຄຸ້ມຄອງ, ກະລຸນາອ່ານພາກທີ 4 ວ່າດ້ວຍ "ສິດທິປະໂຫຍດ ແລະ ການບໍລິການຕ່າງໆ" ແລະ ພາກທີ 5 "ການດູແລເພື່ອຄວາມສະຫວັດດີພາບຂອງເດັກນ້ອຍ ແລະ ໄວໜຸ່ມ" ໃນປຶ້ມຄູ່ມືຫົວນີ້.

ຜູ້ໃຫ້ບໍລິການຂອງ Anthem ທັງໝົດສາມາດໃຊ້ເຄື່ອງມື ຊວຍເຫຼືອ ແລະ ການບໍລິການຕ່າງໆ ເພື່ອສື່ສານກັບຄົນ ພິການໄດ້. ນອກຈາກນັ້ນ ພວກເຂົາກໍຍັງສາມາດສື່ສານ ກັບທ່ານເປັນພາສາ ຫຼື ຮູບແບບອື່ນອີກດ້ວຍ. ບອກຜູ້ໃຫ້ ບໍລິການຂອງທ່ານ ຫຼື Anthem ຮູ້ເຖິງສິ່ງທີ່ທ່ານ ຕ້ອງການ.

ເຄືອຂ່າຍຜູ້ໃຫ້ບໍລິການ

Anthem ເຮັດວຽກຮ່ວມກັບທ່ານໝໍ, ຜູ້ຊ່ຽວຊານ, ໂຮງໝໍ ແລະ ຜູ້ໃຫ້ບໍລິການດູແລສຸຂະພາບ ຈຳນວນຫຼວງຫຼາຍ. ຜູ້ໃຫ້ບໍລິການເຫຼົ່ານີ້ບາງລາຍ ເຮັດວຽກຢູ່ພາຍໃນເຄືອຂ່າຍ, ບາງຄັ້ງເອີ້ນວ່າ ກຸ່ມແພດ ຫຼື ສະມາຄົມວິຊາຊີບອິດສະຫຼະ (IPA). ຜູ້ໃຫ້ບໍລິການເຫຼົ່ານີ້ ກໍອາດຈະເຮັດສັນຍາໂດຍກົງກັບ Anthem ອີກດ້ວຍ. ແພດປະຈຳ (PCP) ຂອງທ່ານຈະນຳສົ່ງທ່ານໄປຍັງຜູ້ຊ່ຽວຊານ ແລະ ການບໍລິການທີ່ເຊື່ອມໂຍງກັບກຸ່ມແພດ, IPA ຂອງເຂົາເຈົ້າ ຫຼື ກັບ Anthem. ຖ້າທ່ານກຳລັງໄປຫາຜູ້ຊ່ຽວຊານຄົນໜຶ່ງຢູ່ແລ້ວ, ໃຫ້ລົມກັບ PCP ຂອງທ່ານ ຫຼື ໂທຫາ ສູນດູແລລູກຄ້າ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ທີ່ເບີ **1-800-407-4627 (TTY 711)**. ສູນດູແລລຸກຄ້າ ຈະຊ່ວຍໃຫ້ທ່ານໄດ້ໄປພົບຜູ້ໃຫ້ບໍລິການນັ້ນ ຖ້າທ່ານມີສິດໄດ້ຮັບການສືບຕໍ່ການເບິ່ງແຍງດູແລ. ສຳລັບຂໍ້ມູນເພີ່ມຕື່ມ, ໃຫ້ໄປທີ່ຂໍ້ວ່າດ້ວຍ ການສືບຕໍ່ການເບິ່ງແຍງ ດູແລ ຢູ່ໃນປຶ້ມຄູ່ມືຫົວນີ້.

ເຄືອຂ່າຍຜູ້ໃຫ້ບໍລິການຂອງ Medi-Cal ແມ່ນກຸ່ມທ່ານໝໍ, ໂຮງ ໝໍ ແລະ ຜູ້ໃຫ້ບໍລິການອື່ນໆ ທີ່ເຮັດວຽກກັບ Anthem ເພື່ອ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ສະໜອງການບໍລິການທີ່ໄດ້ຮັບການຄຸ້ມຄອງຂອງ Medi-Cal ໃຫ້ແກ່ບັດສະມາຊິກຂອງ Medi-Cal.

Anthem ແມ່ນແຜນການດູແລສຸຂະພາບ ແບບມີການຄຸ້ມຄອງ. ເມື່ອທ່ານເລືອກແຜນ Medi-Cal ຂອງພວກເຮົາ, ເທົ່າກັບວ່າ ທ່ານກຳລັງເລືອກທີ່ຈະ ເຂົ້າຮັບການດູແລຂອງທ່ານ ໂດຍຜ່ານ ໂຄງການການດູແລທາງການແພດຂອງພວກເຮົາ. ທ່ານຕ້ອງ ເຂົ້າຮັບການບໍລິການທີ່ໄດ້ຮັບການຄຸ້ມຄອງສ່ວນໃຫຍ່ຂອງທ່ານ ຜ່ານ Anthem ຈາກບັນດາຜູ້ໃຫ້ບໍລິການໃນເຄືອຂ່າຍຂອງພວກ ເຮົາ. ທ່ານສາມາດໄປຫາຜູ້ໃຫ້ບໍລິການນອກເຄືອຂ່າຍໄດ້ໂດຍບໍ່ມີ ການນຳສົ່ງຕໍ່ ຫຼືການອະນຸມັດລ່ວງໜ້າ ສຳລັບການດູແລສຸກເສີນ ຫຼື ການບໍລິການວາງແຜນຄອບຄົວ. ນອກຈາກນັ້ນ ທ່ານກໍຍັງ ສາມາດໄປຫາຜູ້ໃຫ້ບໍລິການນອກເຄືອຂ່າຍ ເພື່ອຮັບການດູແລຮີບ ດ່ວນຢູ່ນອກພື້ນທີ່ ໃນເວລາທີ່ທ່ານຢູ່ໃນພື້ນທີ່ທີ່ພວກເຮົາບໍ່ໄດ້ ໃຫ້ບໍລິການ. ທ່ານຕ້ອງມີການນຳສົ່ງຕໍ່ ຫຼື ການອະນຸມັດລ່ວງໜ້າ ສຳລັບການບໍລິການນອກເຄືອຂ່າຍອື່ນໆທັງໝົດ, ບໍ່ດັ່ງນັ້ນ ການ ບໍລິການເຫຼົ່ານັ້ນຈະບໍ່ໄດ້ຮັບການຄຸ້ມຄອງ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ໝາຍເຫດ: ຄົນອາເມລິກາເຊື້ອສາຍອິນເດຍສາມາດເລືອກ IHCP ເປັນ PCP ຂອງຕົນໄດ້, ເຖິງແມ່ນວ່າ IHCP ຈະບໍ່ຢູ່ໃນເຄືອຂ່າຍຂອງ Anthem ກໍຕາມ.

ຖ້າ PCP, ໂຮງໝໍ ຫຼື ຜູ້ໃຫ້ບໍລິການອື່ນຂອງທ່ານ ມີການຄັດຄ້ານທາງດ້ານສິນທຳຕໍ່ການໃຫ້ການບໍລິການທີ່ໄດ້ຮັບການຄຸ້ມຄອງໃຫ້ແກ່ທ່ານ ເຊັ່ນ: ການວາງແຜນຄອບຄົວ ຫຼື ການລຸລູກ, ໃຫ້ໂທຫາ ເບີ **1-800-407-4627 (TTY 711)**. ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບການຄັດຄ້ານດ້ານສິນທຳ, ໃຫ້ອ່ານຫົວຂໍ້ "ການຄັດຄ້ານດ້ານສິນທຳ" ຕໍ່ໄປໃນພາກນີ້.

ຖ້າຜູ້ໃຫ້ບໍລິການຂອງທ່ານມີການຄັດຄ້ານດ້ານສິນທຳຕໍ່ການໃຫ້ການບໍລິການດູແລສຸຂະພາບທີ່ໄດ້ຮັບການຄຸ້ມຄອງໃຫ້ແກ່ທ່ານ, ເຂົາເຈົ້າຈະສາມາດຊ່ວຍທ່ານໃນການຊອກຫາຜູ້ໃຫ້ບໍລິການອື່ນທີ່ຈະໃຫ້ການບໍລິການທີ່ທ່ານຕ້ອງການແກ່ທ່ານໄດ້. ນອກຈາກນັ້ນ, Anthem ກໍຍັງສາມາດຊ່ວຍທ່ານໃນການຊອກຫາຜູ້ໃຫ້ບໍລິການທີ່ຈະດຳເນີນການບໍລິການດັ່ງກ່າວໄດ້ອີກດ້ວຍ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ຜູ້ໃຫ້ບໍລິການໃນເຄືອຂ່າຍ

ທ່ານຈະໃຊ້ຜູ້ໃຫ້ບໍລິການໃນເຄືອຂ່າຍ Anthem ສຳລັບຄວາມຕ້ອງການດ້ານການດູແລສຸຂະພາບສ່ວນໃຫຍ່ຂອງທ່ານ. ທ່ານຈະໄດ້ຮັບການດູແລຕາມປົກກະຕິ ແລະ ການດູແລເຊີງປ້ອງກັນຈາກບັນດາຜູ້ໃຫ້ບໍລິການໃນເຄືອຂ່າຍ. ນອກຈາກນັ້ນ, ທ່ານຈະສາມາດໃຊ້ຜູ້ຊ່ຽວຊານ, ໂຮງໝໍ ແລະ ຜູ້ໃຫ້ບໍລິການອື່ນໆ ຢູ່ໃນເຄືອຂ່າຍຂອງ Anthem ນຳອີກ.

ເພື່ອຂໍສະໝຸດຊີລາຍຊື່ຜູ້ໃຫ້ບໍລິການໃນເຄືອຂ່າຍ, ໃຫ້ໂທຫາເບີ **1-800-407-4627 (TTY 711)**. ນອກຈາກນັ້ນ, ທ່ານຍັງສາມາດເບິ່ງສະໝຸດລາຍຊື່ຜູ້ໃຫ້ບໍລິການໄດ້ທາງອອນລາຍອີກດ້ວຍທີ່ **anthem.com/ca/medi-cal**. ເພື່ອຂໍສຳເນົາລາຍຊື່ຢາໃນສັນຍາ, ໃຫ້ໂທຫາ Medi-Cal Rx ທີ່ເບີ **1-800-977-2273 (TTY 1-800-977-2273) ແລະ ກົດ 7 ຫຼື 711**. ຫຼື ໄປທີ່ເວັບໄຊ ຂອງ Medi-Cal Rx ທີ່ https://medi-calrx.dhcs.ca.gov/home/.

ທ່ານຈະຕ້ອງໄດ້ຮັບການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ຈາກ Anthem ກ່ອນທີ່ທ່ານຈະໄປຫາຜູ້ໃຫ້ບໍລິການນອກ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ເຄືອຂ່າຍຂອງ Anthem, ລວມທັງພາຍໃນພື້ນທີ່ບໍລິການຂອງ Anthem, ຍົກເວັ້ນໃນສະຖານະການດັ່ງຕໍ່ໄປນີ້:

- ຖ້າທ່ານຕ້ອງການດູແລສຸກເສີນ, ໃຫ້ໂທຫາ 911 ຫຼື ໄປໂຮງໝໍທີ່ຢູ່ໃກ້ທີ່ສຸດ.
- ທ່ານຢູ່ນອກພື້ນທີ່ບໍລິການຂອງ Anthem ແລະ ຕ້ອງການການດູແລຮີບດ່ວນ, ໃຫ້ໄປຫາສະຖານພະຍາບານທີ່ດູແລແບບຮີບດ່ວນໃດກໍໄດ້.
- ຖ້າທ່ານຕ້ອງການການບໍລິການວາງແຜນຄອບຄົວ, ໃຫ້ໄປຫາຜູ້ໃຫ້ບໍລິການ Medi-Cal ໃດກໍ
ໄດ້ ໂດຍບໍ່ຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ).
- ທ່ານຕ້ອງການການບໍລິການດ້ານສຸຂະພາບຈິດ, ໃຫ້ໄປຫາຜູ້ໃຫ້ບໍລິການໃນເຄືອຂ່າຍ ຫຼື ຜູ້ໃຫ້ບໍລິການຂອງແຜນສຸຂະພາບຈິດຂອງຄາວຕີ້ ໂດຍບໍ່ຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ).

ຖ້າທ່ານບໍ່ຕົກຢູ່ໃນກໍລະນີໃດໜຶ່ງທີ່ລະບຸໄວ້ຂ້າງເທິງນັ້ນ ແລະ ທ່ານບໍ່ໄດ້ຮັບການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ)

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ກ່ອນຈະເຂົ້າຮັບການດູແລຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ, ທ່ານອາດຈະຕ້ອງໄດ້ຮັບຜິດຊອບຈ່າຍຄ່າແກ່ການດູແລທີ່ທ່ານໄດ້ຮັບຈາກຜູ້ໃຫ້ບໍລິການຢູ່ນອກເຄືອຂ່າຍ.

ຜູ້ໃຫ້ບໍລິການນອກເຄືອຂ່າຍທີ່ຢູ່ໃນພື້ນທີ່ໃຫ້ບໍລິການ

ຜູ້ໃຫ້ບໍລິການນອກເຄືອຂ່າຍ ແມ່ນບັນດາຜູ້ໃຫ້ບໍລິການທີ່ບໍ່ມີສັນຍາເຮັດວຽກກັບ Anthem. ທ່ານອາດຈະຈຳເປັນຕ້ອງໄດ້ຈ່າຍຄ່າການດູແລທີ່ທ່ານໄດ້ຮັບຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ ຍົກເວັ້ນສຳລັບການດູແລສຸກເສີນ. ຖ້າທ່ານຕ້ອງການການບໍລິການດູແລສຸຂະພາບທີ່ຈຳເປັນທາງການແພດ, ທ່ານອາດຈະສາມາດເຂົ້າຮັບການບໍລິການດັ່ງກ່າວຈາກຜູ້ໃຫ້ບໍລິການນອກເຄືອຂ່າຍໄດ້ໂດຍບໍ່ເສຍຄ່າ.

Anthem ອາດຈະອະນຸມັດໃຫ້ນຳສົ່ງຕໍ່ໄປຍັງຜູ້ໃຫ້ບໍລິການນອກເຄືອຂ່າຍໄດ້ ຖ້າການບໍລິການທີ່ທ່ານຕ້ອງການບໍ່ມີໃນເຄືອຂ່າຍ ຫຼື ຢູ່ໄກຈາກເຮືອນຂອງທ່ານຫຼາຍ. ຖ້າພວກເຮົານຳສົ່ງທ່ານໄປຍັງຜູ້ໃຫ້ບໍລິການນອກເຄືອຂ່າຍ, ພວກເຮົາຈະຈ່າຍຄ່າການດູແລແກ່ທ່ານ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ສຳລັບການດູແລແບບຮີບດ່ວນໃນພື້ນທີ່ບໍລິການຂອງ Anthem, ທ່ານຈະຕ້ອງໄປພົບຜູ້ໃຫ້ບໍລິການດູແລຮີບດ່ວນໃນເຄືອຂ່າຍຂອງ Anthem. ທ່ານບໍ່ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ເພື່ອເຂົ້າຮັບການດູແລຮີບດ່ວນຈາກຜູ້ໃຫ້ບໍລິການໃນເຄືອຂ່າຍ. ຖ້າທ່ານບໍ່ໄດ້ຮັບການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ເພື່ອເຂົ້າຮັບການດູແລແບບຮີບດ່ວນ ຈາກຜູ້ໃຫ້ບໍລິການນອກເຄືອຂ່າຍໃນພື້ນທີ່ບໍລິການຂອງ Anthem.

ຖ້າທ່ານເຂົ້າຮັບການດູແລຮີບດ່ວນຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ ພາຍໃນພື້ນທີ່ບໍລິການຂອງ Anthem, ທ່ານອາດຈະຕ້ອງໄດ້ຈ່າຍຄ່າສຳລັບການດູແລນັ້ນ. ທ່ານສາມາດອ່ານເພີ່ມຕື່ມກ່ຽວກັບການດູແລສຸກເສີນ, ການດູແລຮີບດ່ວນ ແລະ ການບໍລິການ ການດູແລທີ່ລະອຽດອ່ອນໄດ້ໃນພາກນີ້.

ໝາຍເຫດ: ຖ້າທ່ານເປັນຄົນອາເມລິກາເຊື້ອສາຍອິນເດຍ, ທ່ານສາມາດຮັບການດູແລໄດ້ຢູ່ທີ່ IHCP ທີ່ຢູ່ນອກເຄືອຂ່າຍຜູ້ໃຫ້ບໍລິການຂອງພວກເຮົາ ໂດຍບໍ່ຕ້ອງມີການສົ່ງຕໍ່. ນອກນັ້ນແລ້ວ, IHCP ຢູ່ນອກເຄືອຂ່າຍ ກໍຍັງ ສາມາດນຳສົ່ງສະມາຊິກທີ່ເປັນຄົນອາເມລິກາເຊື້ອສາຍອິນເດຍໄປຍັງຜູ້ໃຫ້ບໍລິການໃນເຄືອ

ຂ່າຍໄດ້ອີກດ້ວຍ ໂດຍບໍ່ຈຳເປັນຕ້ອງມີການນຳສົ່ງຈາກ PCP ໃນເຄືອຂ່າຍກ່ອນ.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອດ້ານການບໍລິການນອກເຄືອຂ່າຍ, ໃຫ້ໂທຫາເບີ **1-800-407-4627 (TTY 711)**.

ນອກພື້ນທີ່ໃຫ້ບໍລິການ

ຖ້າທ່ານຢູ່ນອກພື້ນທີ່ບໍລິການຂອງ Anthem ແລະ ຕ້ອງການການດູແລທີ່**ບໍ່**ແມ່ນເຫດສຸກເສີນ ຫຼື ຮີບດ່ວນ, ໃຫ້ໂທຫາ PCP ຂອງທ່ານໃນທັນທີ. ຫຼື ໂທຫາເບີ **1-800-407-4627 (TTY 711)**.

ສຳລັບການດູແລສຸກເສີນ, ໃຫ້ໂທຫາ **911** ຫຼື ໄປຫາຫ້ອງສຸກເສີນທີ່ຢູ່ໃກ້ສຸດ. Anthem ຄຸ້ມຄອງການດູແລສຸກເສີນຢູ່ນອກເຄືອຂ່າຍ. ຖ້າທ່ານເດີນທາງໄປການາດາ ຫຼື ເມັກຊິກໂກ ແລະ ຕ້ອງການການດູແລສຸກເສີນທີ່ຈຳເປັນຕ້ອງໄດ້ເຂົ້ານອນໂຮງໝໍ, Anthem ຈະຄຸ້ມຄອງການດູແລຂອງທ່ານ. ຖ້າທ່ານກຳລັງເດີນທາງໄປຕ່າງປະເທດຢູ່ນອກປະເທດການາດາ ຫຼື ເມັກຊິກໂກ ແລະ ຕ້ອງການການດູແລສຸກເສີນ, ການດູແລຮີບດ່ວນ ຫຼື ການບໍລິການດູແລສຸຂະພາບໃດໜຶ່ງ Anthem ຈະ**ບໍ່**ຄຸ້ມຄອງການດູແລຂອງທ່ານ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານໄດ້ຈ່າຍຄ່າສໍາລັບການດູແລສຸກເສີນທີ່ຈໍາເປັນຕ້ອງໄດ້ເຂົ້ານອນ�โรງໝໍຢູ່ປະເທດການາດາ ແລະ ເນັກຊິກໂກໄປແລ້ວ, ທ່ານສາມາດຂໍໃຫ້ Anthem ຈ່າຍເງິນຄືນໃຫ້ທ່ານ. Anthem ຈະກວດສອບຄໍາຮ້ອງຂໍຂອງທ່ານ.

ຖ້າທ່ານຢູ່ໃນລັດອື່ນ ຫຼື ໃນເຂດແຄ້ວນຕ່າງໆຂອງສະຫະລັດອາເມລິກາ ເຊັ່ນ: ອາເມລິກາຊາມົວ, ກວາມ, ໝູ່ເກາະມາຣິນາເໜືອ, ປໂຕຣິໂກ ແລະ ໝູ່ເກາະເວີຈິນຂອງສະຫະລັດ, ທ່ານຈະໄດ້ຮັບການຄຸ້ມຄອງສໍາລັບການດູແລສຸກເສີນ. ແຕ່ບໍ່ແມ່ນວ່າທຸກ�โรງໝໍ ແລະ ທ່ານໝໍທຸກຄົນ ຈະຮັບ Medicaid. (Medi-Cal ແມ່ນຊື່ທີ່ໃຊ້ເອີ້ນ Medicaid ໃນລັດ California ເທົ່ານັ້ນ.) ຖ້າທ່ານຕ້ອງການການດູແລສຸກເສີນຢູ່ນອກ California, ໃຫ້ແຈ້ງບອກ�โรງໝໍ ຫຼື ທ່ານໝໍຫ້ອງສຸກເສີນໃນທັນທີທີ່ສາມາດເຮັດໄດ້ວ່າ ທ່ານມີ Medi-Cal ແລະ ເປັນສະມາຊິກຂອງ Anthem.

ຂໍໃຫ້�โรງໝໍອັດສໍາເນົາບັດ ID ຂອງ Anthem ຂອງທ່ານໄວ້. ບອກ�โรງໝໍ ແລະ ທ່ານໝໍໃຫ້ສົ່ງໃບບິນເກັບເງິນໃຫ້ແກ່ Anthem. ຖ້າທ່ານໄດ້ຮັບໃບບິນເກັບເງິນຄ່າບໍລິການທີ່ທ່ານໄດ້ເຂົ້າຮັບໃນ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ລັດອື່ນ, ໃຫ້ໂທຫາ Anthem ທັນທີ. ພວກເຮົາຈະເຮັດວຽກກັບ ໂຮງໝໍ ແລະ/ຫຼື ທ່ານໝໍເພື່ອກຽມໃຫ້ Anthem ເປັນຜູ້ຈ່າຍຄ່າ ການດູແລຂອງທ່ານ.

ຖ້າທ່ານຢູ່ນອກ California ແລະ ມີຄວາມຈຳເປັນສຸກເສີນໃນ ການຮັບຢາຕາມໃບສັ່ງແພດໃນຖານະຄົນເຈັບນອກ, ກະລຸນາຂໍ ໃຫ້ຮ້ານຂາຍຢາໂທຫາ Medi-Cal Rx ທີ່ເບີ **1-800-977-2273**.

ໝາຍເຫດ: ຄົນອາເມລິກາເຊື້ອສາຍອິນເດຍ ສາມາດເຂົ້າຮັບ ການບໍລິການນຳ IHCP ທີ່ຢູ່ນອກເຄືອຂ່າຍໄດ້.

ຖ້າທ່ານມີຄຳຖາມກ່ຽວກັບການດູແລຢູ່ນອກເຄືອຂ່າຍ ຫຼື ຢູ່ນອກ ພື້ນທີ່ບໍລິການ, ໂທຫາເບີ **1-800-407-4627 (TTY 711)**. ຖ້າ ທ້ອງການປິດ ແລະ ທ່ານຕ້ອງການຄວາມຊ່ວຍເຫຼືອຈາກຜູ້ຕາງ ໜ້າໃດໜຶ່ງ, ໂທຫາາເບີ **1-800-224-0336 (TTY 711)**.

ຖ້າທ່ານຕ້ອງການການດູແລຮີບດ່ວນຢູ່ນອກພື້ນທີ່ບໍລິການຂອງ Anthem, ໃຫ້ໄປຫາສະຖານການດູແລຮີບດ່ວນທີ່ຢູ່ໃກ້ທີ່ສຸດ. ຖ້າ ທ່ານກຳລັງເດີນທາງອອກນອກສະຫະລັດ ແລະ ຕ້ອງການການ ດູແລຮີບດ່ວນ, Anthem ຈະບໍ່ຄຸ້ມຄອງການດູແລຂອງທ່ານ. ສຳ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ລັບຂໍ້ມູນເພີ່ມຕື່ມກ່ຽວກັບການດູແລຮີບດ່ວນ, ໃຫ້ອ່ານຫົວຂໍ້ "ການດູແລຮີບດ່ວນ" ໃນຫົວຂໍ້ຕໍ່ໄປໃນບົດນີ້.

ການສ້າງເປັນແພດປະຈຳ

Anthem ເຮັດວຽກຮ່ວມກັບທ່ານໝໍ, ຜູ້ຊ່ຽວຊານ, ໂຮງໝໍ ແລະ ຜູ້ໃຫ້ບໍລິການດູແລສຸຂະພາບ ຈຳນວນຫຼວງຫຼາຍ. ຜູ້ໃຫ້ບໍລິການເຫຼົ່ານີ້ບາງລາຍ ເຮັດວຽກຢູ່ພາຍໃນເຄືອຂ່າຍ, ບາງຄັ້ງເອີ້ນວ່າ ກຸ່ມແພດ ຫຼື ສະມາຄົມວິຊາຊີບອິດສະຫຼະ (IPA). ຜູ້ໃຫ້ບໍລິການເຫຼົ່ານີ້ ກໍອາດຈະເຮັດສັນຍາໂດຍກົງກັບ Anthem ອີກດ້ວຍ. ແພດປະຈຳ (PCP) ຂອງທ່ານຈະນຳສົ່ງທ່ານໄປຍັງຜູ້ຊ່ຽວຊານ ແລະ ການບໍລິການທີ່ເຊື່ອມໂຍງກັບກຸ່ມແພດ, IPA ຂອງເຂົາເຈົ້າ ຫຼື ກັບ Anthem. ຖ້າທ່ານກຳລັງໄປຫາຜູ້ຊ່ຽວຊານຄົນໜຶ່ງຢູ່ແລ້ວ, ໃຫ້ລົມກັບ PCP ຂອງທ່ານ ຫຼື ໂທຫາ ສູນດູແລລູກຄ້າ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ ໂດຍການໂທຟຣີທີ່ເບີ **1-800-407-4627 (TTY 711)**. ສູນດູແລ ລູກຄ້າ ຈະຊ່ວຍໃຫ້ທ່ານໄດ້ໄປພົບຜູ້ໃຫ້ບໍລິການນັ້ນ ຖ້າທ່ານມີສິດ ໄດ້ຮັບການສືບຕໍ່ການເບິ່ງແຍງດູແລ. ສຳລັບຂໍ້ມູນເພີ່ມຕື່ມ, ໃຫ້ໄປ ທີ່ຂໍ້ວ່າດ້ວຍ ການສືບຕໍ່ການເບິ່ງແຍງດູແລ ຢູ່ໃນປຶ້ມຄູ່ມືຫົວນີ້.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຫຼັກການເຮັດວຽກຂອງການດູແລແບບມີການຄຸ້ມຄອງ

Anthem ແມ່ນແຜນການດູແລແບບມີການຄຸ້ມຄອງ. Anthem ໃຫ້ການດູແລແກ່ບັນດາສະມາຊິກທີ່ອາໄສຢູ່ ຫຼື ເຮັດວຽກຢູ່ໃນ Alpine, Amador, Calaveras, El Dorado, Fresno, Inyo, Kern, Kings, Madera, Mono, Sacramento, San Francisco, Santa Clara, Tulare ແລະ Tuolumne ຄາວຕີ້. ໃນການດູແລແບບມີການຄຸ້ມຄອງ, PCP ຂອງທ່ານ, ຜູ້ຊ່ຽວຊານ, ຄລີນິກ, ໂຮງໝໍ ແລະ ຜູ້ໃຫ້ບໍລິການອື່ນໆ ຈະເຮັດວຽກຮ່ວມກັນເພື່ອດູແລທ່ານ.

Anthem ເຮັດສັນຍາກັບກຸ່ມແພດ ເພື່ອສະໜອງການດູແລໃຫ້ແກ່ບັນດາສະມາຊິກຂອງ Anthem. ກຸ່ມແພດ ແມ່ນປະກອບດ້ວຍບັນດາທ່ານໝໍທີ່ເປັນ PCP ແລະ ຜູ້ຊ່ຽວຊານ. ກຸ່ມແພດ ເຮັດວຽກກັບບັນດາຜູ້ໃຫ້ບໍລິການອື່ນໆ ເຊັ່ນ: ຫ້ອງທົດລອງ ແລະ ຜູ້ສະໜອງອຸປະກອນການແພດທີ່ທົນທານ. ນອກຈາກນັ້ນ ກຸ່ມແພດກໍຍັງເຊື່ອມຕໍ່ກັບບັນດາໂຮງໝໍແຫ່ງຕ່າງໆອີກດ້ວຍ. ເບິ່ງໃນບັດ ID Anthem ຂອງທ່ານ ສຳລັບລາຍຊື່ PCP, ກຸ່ມແພດ ແລະ ຜູ້ຊ່ຽວຊານ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ເມື່ອທ່ານເຂົ້າຮ່ວມ Anthem, ທ່ານຈະໄດ້ເລືອກເອງ ຫຼື ໄດ້ຮັບການມອບໝາຍໃຫ້ PCP ຄົນໜຶ່ງ. PCP ຂອງທ່ານ ແມ່ນເປັນສະມາຊິກຂອງກຸ່ມແພດ. PCP ແລະ ກຸ່ມແພດຂອງທ່ານ ເປັນຜູ້ຊີ້ນຳການດູແລສຳລັບຄວາມຕ້ອງການທາງການແພດທັງໝົດຂອງທ່ານ. PCP ຂອງທ່ານອາດຈະນຳສົ່ງທ່ານໄປຍັງຜູ້ຊ່ຽວຊານ ຫຼື ສັ່ງການກວດໃນຫ້ອງທົດລອງ ແລະ ການສ່ອງລັງສີ. ຖ້າທ່ານຕ້ອງການການບໍລິການທີ່ຕ້ອງມີການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ), Anthem ຫຼື ກຸ່ມແພດຂອງທ່ານ ຈະກວດສອບການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ແລະ ຕັດສິນໃຈວ່າຈະໃຫ້ອະນຸມັດແກ່ການບໍລິການ ຫຼື ບໍ່.

ໃນກໍລະນີສ່ວນໃຫຍ່, ທ່ານຕ້ອງໄປຫາຜູ້ຊ່ຽວຊານ ແລະ ຜູ້ຊ່ຽວຊານດ້ານສຸຂະພາບອື່ນໆ ທີ່ເຮັດວຽກນຳກຸ່ມແພດດຽວກັນກັບ PCP ຂອງທ່ານ. ນອກເໜືອໄປຈາກກໍລະນີສຸກເສີນແລ້ວ, ທ່ານຍັງຕ້ອງໄດ້ເຂົ້າຮັບການດູແລໃນໂຮງໝໍຈາກໂຮງໝໍທີ່ເຊື່ອມໂຍງກັບກຸ່ມແພດຂອງທ່ານອີກດ້ວຍ.

ບາງຄັ້ງ, ທ່ານອາດຈະຕ້ອງການການບໍລິການທີ່ບໍ່ມີໃຫ້ບໍລິການຈາກຜູ້ໃຫ້ບໍລິການໃນກຸ່ມແພດ. ໃນກໍລະນີນັ້ນ, PCP ຂອງທ່ານຈະນຳສົ່ງທ່ານໄປຍັງຜູ້ໃຫ້ບໍລິການທີ່ຢູ່ໃນກຸ່ມແພດອື່ນ ຫຼື ຢູ່ນອກ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ເຄືອຂ່າຍ. PCP ຂອງທ່ານຈະຮ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ໃຫ້ທ່ານ ເພື່ອໄປຫາຜູ້ໃຫ້ບໍລິການ ລາຍນີ້.

ໃນກໍລະນີສ່ວນໃຫຍ່, ທ່ານຕ້ອງໄດ້ຮັບການອະນຸຍາດລ່ວງໜ້າ ຈາກ PCP, ກຸ່ມແພດ ຫຼື Anthem ກ່ອນທີ່ທ່ານຈະສາມາດໄປ ຫາຜູ້ໃຫ້ບໍລິການນອກເຄືອຂ່າຍ ຫຼື ຜູ້ໃຫ້ບໍລິການທີ່ບໍ່ໄດ້ຢູ່ໃນກຸ່ມ ແພດຂອງທ່ານ. ທ່ານບໍ່ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ສຳລັບການບໍລິການສຸກເສີນ, ການບໍ ລິການວາງແຜນຄອບຄົວ ຫຼື ການບໍລິການສຸຂະພາບຈິດໃນເຄືອ ຂ່າຍ.

ບັນດາສະມາຊິກທີ່ມີທັງ Medicare ແລະ Medi-Cal

ເນື່ອງຈາກວ່າທ່ານມີການຄຸ້ມຄອງຂອງ Medicare, ການດູແລ ຕາມປົກກະຕິ (ກະທັນທັນ) ຂອງທ່ານ ຈຶ່ງໄດ້ຮັບການຄຸ້ມຄອງ ຜ່ານແຜນ Medicare ຂອງທ່ານ. ທ່ານເລືອກ ແພດປະຈຳ ດ້ວຍ ແຜນ Medicare ຂອງທ່ານ. ກະລຸນາເບິ່ງ ຫຼັກຖານສະແດງການ ຄຸ້ມຄອງ ສຳລັບແຜນ Medicare ຂອງທ່ານ ເພື່ອໃຫ້ເຂົ້າໃຈເຖິງ ບົດບາດຂອງ ແພດປະຈຳ, ຜູ້ທີ່ຈະສາມາດເປັນ ແພດປະຈຳ ໄດ້,

ວິທີການປ່ຽນ ແພດປະຈຳ ຂອງທ່ານ ແລະ ວິທີເຂົ້າຮັບການດູແລ. ນອກຈາກນັ້ນ ຫຼັກຖານສະແດງການຄຸ້ມຄອງຂອງ Medicare MCO ກໍຍັງຈະມີລາຍລະອຽດຕ່າງໆກ່ຽວກັບ Medicare ແລະ ຜົນປະໂຫຍດສຳລັບຢາຕາມໃບສັ່ງແພດ ແລະ ວິທີການເຮັດວຽກ ຂອງເຂົາເຈົ້າຮ່ວມກັນກັບສິດທິປະໂຫຍດຂອງ Medicaid ຂອງ ທ່ານ. ຖ້າທ່ານມີການຄຸ້ມຄອງຂອງ Medicare ກັບບໍລິສັດປະກັນ ໄພ Medicare ອື່ນ, ໃຫ້ເບິ່ງປື້ມຄູ່ມື ແລະ ຂໍ້ມູນທີ່ເຂົາເຈົ້າສົ່ງມາ ໃຫ້ທ່ານ.

ສິ່ງທີ່ຂ້າພະເຈົ້າຈຳເປັນຕ້ອງຖືໄປຍັງການນັດໝາຍພົບທ່ານໝໍ ຂອງຕົນ ແມ່ນມີຫຍັງແດ?

ໃນເວລາທີ່ທ່ານໄປທີ່ຫ້ອງການຂອງທ່ານໝໍ ຕາມການນັດໝ າຍຂອງທ່ານ, ໃຫ້ຖື:

- ບັດ ID ຂອງ Medicare ຫຼື ບັດ ID ຂອງແຜນ Medicare Advantage ຂອງທ່ານ
- ຖ້າແຜນ Medicare ຂອງທ່ານ ແມ່ນແຜນ MCO Advantage, ໃຫ້ສະແດງບັດ ID ຂອງ MCO Advantage

---

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ບັດ ID ຂອງ Medi-Cal ຂອງທ່ານ
- ຢາທຸກຢ່າງທີ່ທ່ານກຳລັງກິນ
- ບັນທຶກການສັກຢາຂອງທ່ານ

ທ່ານໝໍ

ທ່ານຈະເລືອກທ່ານໝໍຈາກສະໝຸດລາຍຊື່ຜູ້ໃຫ້ບໍລິການຂອງ Anthem ເປັນ PCP ຂອງທ່ານ. ທ່ານໝໍທີ່ທ່ານເລືອກຈະຕ້ອງເປັນຜູ້ໃຫ້ບໍລິການໃນເຄືອຂ່າຍ. ເພື່ອຂໍສະບັບສຳເນົາຂອງສະໝຸດລາຍຊື່ຜູ້ໃຫ້ບໍລິການຂອງ Anthem, ໂທຫາເບີ **1-800-407-4627 (TTY 711)**. ຫຼື ຂອກຫາທາງອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານກຳລັງຈະເລືອກ PCP ຄົນໃໝ່, ທ່ານກໍຄວນຈະໂທຫາ PCP ທີ່ທ່ານຕ້ອງການອີກດ້ວຍ ເພື່ອເຮັດໃຫ້ແນ່ໃຈວ່າຜູ້ກ່ຽວຍັງຈະຮັບຄົນເຈັບໃໝ່ຢູ່.

ຖ້າທ່ານມີທ່ານໝໍຢູ່ແລ້ວ ກ່ອນທີ່ທ່ານຈະມາເປັນສະມາຊິກຂອງ Anthem ແລະ ທ່ານໝໍຄົນນັ້ນບໍ່ໄດ້ເຂົ້າຮ່ວມເຄືອຂ່າຍຂອງ Anthem, ທ່ານອາດຈະສາມາດຮັກສາທ່ານໝໍນັ້ນໄວ້ໄດ້ໃນໄລຍະເວລາຈຳກັດ. ນີ້ແມ່ນເອີ້ນວ່າ ການສືບຕໍ່ການເບິ່ງແຍງດູແລ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ທ່ານສາມາດອ່ານເພີ່ມຕື່ມກ່ຽວກັບ ການສືບຕໍ່ການເບິ່ງແຍງດູແລ ໄດ້ໃນປື້ມຄູ່ມືຫົວນີ້. ເພື່ອສຶກສາເພີ່ມຕື່ມ, ໃຫ້ໂທຫາ **1-800-407-4627 (TTY 711)**.

ຖ້າທ່ານຕ້ອງການຜູ້ຊ່ຽວຊານ, PCP ຂອງທ່ານຈະນຳສົ່ງທ່ານໄປຫາຜູ້ຊ່ຽວຊານໃນເຄືອຂ່າຍຂອງ Anthem. ຜູ້ຊ່ຽວຊານບາງຄົນບໍ່ຈຳເປັນຕ້ອງມີການສົ່ງຕໍ່. ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບການນຳສົ່ງຕໍ່, ໃຫ້ອ່ານຫົວຂໍ້ "ການນຳສົ່ງຕໍ່" ໃນຫົວຂໍ້ຕໍ່ໄປໃນພາກນີ້.

ຢ່າລືມວ່າ, ຖ້າທ່ານບໍ່ເລືອກ PCP, Anthem ຈະເລືອກຄົນໜຶ່ງໃຫ້ແກ່ທ່ານ, ຍົກເວັ້ນແຕ່ວ່າທ່ານຈະມີການຄຸ້ມຄອງສຸຂະພາບທີ່ຄົບຖ້ວນອື່ນໆ ນອກເໜືອຈາກໄປ Medi-Cal ແລ້ວເທົ່ານັ້ນ. ທ່ານຮູ້ຈັກຄວາມຕ້ອງການດ້ານການດູແລສຸຂະພາບຂອງທ່ານດີທີ່ສຸດ, ສະນັ້ນມັນຈະດີທີ່ສຸດ ຖ້າທ່ານເປັນຄົນເລືອກເອງ. ຖ້າທ່ານຢູ່ໃນທັງ Medicare ແລະ Medi-Cal ຫຼື ຖ້າທ່ານມີການປະກັນການດູແລສຸຂະພາບອື່ນໆ, ທ່ານກໍບໍ່ຈຳເປັນຕ້ອງເລືອກ PCP ຈາກ Anthem

ຖ້າທ່ານຕ້ອງການປ່ຽນ PCP ຂອງທ່ານ, ທ່ານຕ້ອງເລືອກ PCP ຈາກສະໝຸດລາຍຊື່ຜູ້ໃຫ້ບໍລິການຂອງ Anthem. ກວດໃຫ້ແນ່ໃຈ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ວ່າ PCP ຄົນດັ່ງກ່າວຈະຮັບຄົນເຈັບໃໝ່ ຫຼື ບໍ່. ເພື່ອປ່ຽນ PCP ຂອງທ່ານ, ໂທຫາເບີ **1-800-407-4627 (TTY 711)** ຫຼື ເຂົ້າໄປທີ່ **anthem.com/ca/medi-cal**.

ໂຮງໝໍ

ໃນກໍລະນີສຸກເສີນ, ໃຫ້ໂທຫາ **911** ຫຼື ໄປຍັງໂຮງໝໍທີ່ໃກ້ທີ່ສຸດ. ຖ້າມັນບໍ່ແມ່ນເຫດສຸກເສີນ ແລະ ທ່ານຕ້ອງການການດູແລຢູ່ໂຮງໝໍ, PCP ຂອງທ່ານຈະຕັດສິນວ່າທ່ານຕ້ອງໄປໂຮງໝໍໃດ. ທ່ານຈະຕ້ອງໄດ້ໄປໂຮງໝໍທີ່ PCP ຂອງທ່ານໃຊ້ ແລະ ທີ່ຢູ່ໃນເຄືອຂ່າຍຜູ້ໃຫ້ບໍລິການຂອງ Anthem. ສະໝຸດລາຍຊື່ຜູ້ໃຫ້ບໍລິການ ຈະລະບຸລາຍຊື່ໂຮງໝໍທີ່ຢູ່ໃນເຄືອຂ່າຍຂອງ Anthem.

ຜູ້ຊ່ຽວຊານສຸຂະພາບແມ່ຍິງ

ທ່ານສາມາດໄປຫາຜູ້ຊ່ຽວຊານສຸຂະພາບແມ່ຍິງໃນເຄືອຂ່າຍຂອງ Anthem ສຳລັບການດູແລທີ່ໄດ້ຮັບການຄຸ້ມຄອງທີ່ຈຳເປັນ ເພື່ອສະໜອງການບໍລິການດູແລຕາມປົກກະຕິແກ່ແມ່ຍິງ. ທ່ານບໍ່ຈຳເປັນຕ້ອງມີການນຳສົ່ງຈາກ ຫຼື ການອະນຸຍາດຈາກ PCP

ຂອງທ່ານ ເພື່ອໄປຮັບການບໍລິການເຫຼົ່ານີ້. ສໍາລັບຄວາມ ຊ່ວຍເຫຼືອໃນການຂອກຫາຜູ້ຊ່ຽວຊານສຸຂະພາບແມ່ຍິງ, ທ່ານ ສາມາດໂທຫາເບີ **1-800-407-4627 (TTY 711)**. ນອກຈາກ ນັ້ນ ທ່ານກໍຍັງສາມາດໂທຫາ ສາຍພະຍາບານ 24/7 ໄດ້ອີກດ້ວຍ ທີ່ເບີ **1-800-224-0336 (TTY 711)**.

ສະໝຸດລາຍຊື່ຜູ້ໃຫ້ບໍລິການ

ສະໝຸດລາຍຊື່ຜູ້ໃຫ້ບໍລິການຂອງ Anthem ມີລາຍຊື່ຂອງບັນດາ ຜູ້ໃຫ້ບໍລິການ ທີ່ເຂົ້າຮ່ວມໃນເຄືອຂ່າຍ Anthem. ເຄືອຂ່າຍແມ່ນ ກຸ່ມຜູ້ໃຫ້ບໍລິການທີ່ເຮັດວຽກກັບ Anthem.

ສະໝຸດລາຍຊື່ຜູ້ໃຫ້ບໍລິການຂອງ Anthem ລະບຸລາຍຊື່ໂຮງໝໍ, PCP, ຜູ້ຊ່ຽວຊານ, ຜູ້ປະກອບວິຊາຊີບພະຍາບານ, ພະຍາບານ ຜະດຸງຄັນ, ຜູ້ຊ່ວຍແພດ, ຜູ້ໃຫ້ບໍລິການວາງແຜນຄອບຄົວ, FQHC, ຜູ້ໃຫ້ບໍລິການການຄຸ້ມຄອງການດູແລແບບຍົກລະດັບ (EMC), ຜູ້ໃຫ້ບໍລິການ ການບໍລິການການສະໜັບສະໜູນຊຸມ ຊົນ (CS), ຜູ້ໃຫ້ບໍລິການພະນັກງານສາທາລະນະສຸກຊຸມຊົນ, ຊ່ຽວຊານດູແລການຕັ້ງຄັນ, ຜູ້ໃຫ້ບໍລິການສຸຂະພາບຈິດສໍາລັບ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຄົນເຈັບນອກ, ການບໍລິການ ແລະ ການສະໜັບສະໜູນໄລຍະຍາວແບບມີການຄຸ້ມຄອງ (MLTSS), ສູນການເກີດອິດສະຫຼະ (FBC), IHCP ແລະ RHC.

ສະໝຸດລາຍຊື່ຜູ້ໃຫ້ບໍລິການມີຊື່, ຄວາມຊ່ຽວຊານສະເພາະດ້ານ, ທີ່ຢູ່, ເບີໂທລະສັບ, ຊົ່ວໂມງເຮັດວຽກ ແລະ ພາສາທີ່ເວົ້າຂອງຜູ້ໃຫ້ບໍລິການໃນເຄືອຂ່າຍຂອງ Anthem. ສະໝຸດນີ້ ຈະບອກທ່ານວ່າຜູ້ໃຫ້ບໍລິການຍັງຈະຮັບຄົນເຈັບໃໝ່ ຫຼື ບໍ່. ນອກຈາກນັ້ນ, ກໍຍັງຈະບອກຊ່ອງທາງການເຂົ້າເຖິງຕົກອາຄານອີກດ້ວຍ ເຊັ່ນ: ບ່ອນຈອດລົດ, ທາງເນີນ, ຂັ້ນໄດທີ່ມີຮາວຈັບ ແລະ ຫ້ອງນ້ຳທີ່ມີປະຕູກວ້າງ ແລະ ຮາວຈັບ. ເພື່ອສຶກສາເພີ່ມຕື່ມກ່ຽວກັບຂໍ້ມູນການສຶກສາ, ການຝຶກອົບຮົມ ແລະ ໃບຢັ້ງຢືນຈາກຄະນະກຳມະການຂອງທ່ານໝໍ, ໂທຫາເບີ **1-800-407-4627 (TTY 711)**.

ທ່ານສາມາດເບິ່ງສະໝຸດລາຍຊື່ຜູ້ໃຫ້ບໍລິການໄດ້ທາງອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານຕ້ອງການສະໝຸດລາຍຊື່ຜູ້ໃຫ້ບໍລິການທີ່ພິມອອກມາແລ້ວ, ໂທຫາເບີ **1-800-407-4627 (TTY 711)**. ທ່ານສາມາດຂອກຫາບັນຊີລາຍຊື່ຮ້ານຂາຍຢາທີ່ເຮັດວຽກຮ່ວມກັບ Medi-Cal

Rx ໄດ້ຢູ່ໃນສະໝຸດລາຍຊື່ຮ້ານຂາຍຢາຂອງ Medi-Cal Rx ທີ່ https://medi-calrx.dhcs.ca.gov/home/. ນອກຈາກນັ້ນ ທ່ານກໍຍັງສາມາດຂອກຫາຮ້ານຂາຍຢາທີ່ຢູ່ໃກ້ທ່ານ ໂດຍການໂທຫາ Medi-Cal Rx ໄດ້ອີກດ້ວຍທີ່ເບີ 1-800-977-2273 (TTY 1-800-977-2273) **ແລະ ກົດ** 7 **ຫຼື** 711.

ການເຂົ້າເຖິງການດູແລຢ່າງທັນເວລາ

ຜູ້ໃຫ້ບໍລິການໃນເຄືອຂ່າຍຂອງທ່ານຕ້ອງສະໜອງການເຂົ້າເຖິງການດູແລຢ່າງທັນເວລາ ໂດຍອີງຕາມຄວາມຕ້ອງການໃນການດູແລສຸຂະພາບຂອງທ່ານ. ຢ່າງໜ້ອຍສຸດ, ພວກເຂົາຕ້ອງສະໜອງການນັດໝາຍທີ່ໄດ້ລະບຸໄວ້ໃນກອບເວລາໃນຕາຕະລາງຂ້າງລຸ່ມນີ້.

ປະເພດການນັດໝາຍ	ທ່ານຄວນຈະໄດ້ຮັບການນັດໝາຍພາຍໃນ:
ການນັດໝາຍສຳລັບການດູແລຮີບດ່ວນທີ່ບໍ່ຈຳເປັນຕ້ອງມີການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ)	48 ຊົ່ວໂມງ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ການນັດໝາຍສຳລັບການດູແລແບບຮີບດ່ວນທີ່ຈຳເປັນຕ້ອງມີການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ)	96 ຊົ່ວໂມງ
ການນັດໝາຍສຳລັບການດູແລຂັ້ນຕົ້ນທີ່ບໍ່ຮີບດ່ວນ (ແບບປົກກະຕິ)	10 ວັນລົດຖະການ
ການນັດໝາຍສຳລັບການດູແລຈາກຜູ້ຊ່ຽວຊານທີ່ບໍ່ຮີບດ່ວນ (ແບບປົກກະຕິ)	15 ວັນລົດຖະການ
ການນັດໝາຍສຳລັບການດູແລຈາກຜູ້ໃຫ້ບໍລິການສຸຂະພາບຈິດ (ບໍ່ແມ່ນທ່ານໝໍ) ແບບທີ່ບໍ່ຮີບດ່ວນ (ແບບປົກກະຕິ)	10 ວັນລົດຖະການ
ການນັດໝາຍຕິດຕາມດູແລກັບຜູ້ໃຫ້ບໍລິການດ້ານສຸຂະພາບຈິດ (ບໍ່ແມ່ນແພດ) ທີ່ບໍ່ຮີບດ່ວນ (ແບບປົກກະຕິ)	10 ວັນລົດຖະການ ນັບຈາກການນັດໝາຍຄັ້ງຫຼ້າສຸດ
ການນັດໝາຍແບບບໍ່ຮີບດ່ວນ (ແບບປົກກະຕິ) ສຳລັບບໍລິການເສີມ (ການສະໜັບສະໜູນ) ສຳລັບການກວດມະຕິພະຍາດ ຫຼື ການປິ່ນປົວອາການບາດເຈັບ, ຄວາມເຈັບປ່ວຍ ຫຼື ສະພາວະສຸຂະພາບອື່ນໆ	15 ວັນລົດຖະການ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ມາດຕະຖານເວລາລໍຖ້າອື່ນໆ	ທ່ານຄວນຈະສາມາດໄດ້ຮັບການເຊື່ອມຕໍ່ໄດ້ພາຍໃນ:
ເວລາລໍຖ້າ ສູນດູແລລູກຄ້າ ທາງ�โທລະສັບໃນລະຫວ່າງໂມງເຂົ້າການປົກກະຕິ	10 ນາທີ
ເວລາລໍຖ້າ�โທລະສັບສໍາລັບ ສາຍພະຍາບານ 24/7	30 ນາທີ (ໄດ້ເຊື່ອມຕໍ່ກັບພະຍາບານ)

ບາງຄັ້ງ ການລໍຖ້າການນັດໝາຍທີ່ດົນຂຶ້ນ ຈະບໍ່ແມ່ນບັນຫາ. ຜູ້ໃຫ້ບໍລິການຂອງທ່ານອາດຈະໃຫ້ລໍຖ້າດົນຂຶ້ນ ຖ້າມັນບໍ່ເປັນອັນຕະລາຍຕໍ່ສຸຂະພາບຂອງທ່ານ. ເຊິ່ງຕ້ອງໄດ້ຂຽນໄວ້ໃນບັນທຶກຂອງທ່ານວ່າ ການລໍຖ້າທີ່ດົນຂຶ້ນຈະບໍ່ເປັນອັນຕະລາຍຕໍ່ສຸຂະພາບຂອງທ່ານ. ນອກຈາກນັ້ນ, ຖ້າທ່ານຕ້ອງການລໍຖ້າການນັດໝາຍໃນພາຍຫຼັງທີ່ຈະເໝາະສົມກັບຕາຕະລາງເວລາຂອງທ່ານຍິ່ງຂຶ້ນ ຫຼື ໄປຫາຜູ້ໃຫ້ບໍລິການອື່ນຕາມທີ່ທ່ານເລືອກ, ຜູ້ໃຫ້ບໍລິການຂອງທ່ານ ຫຼື Anthem ຈະເຄົາລົບຄວາມປະສົງຂອງທ່ານ.

? �โທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການ�โທແມ່ນບໍ່ເສຍຄ່າ. ຫຼື �โທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ທ່ານໝໍຂອງທ່ານອາດຈະແນະນຳຕາຕະລາງສະເພາະ ສຳລັບການບໍລິການເຊີງປ້ອງກັນ, ການດູແລຕິດຕາມຜົນສຳລັບສະພາວະເຈັບເປັນຕໍ່ເນື່ອງ ຫຼື ການນຳສົ່ງຕໍ່ແບບໝັ້ນຄົງໄປຍັງຜູ້ຊ່ຽວຊານ, ເຊິ່ງຂຶ້ນຢູ່ກັບຄວາມຕ້ອງການຂອງທ່ານ.

ແຈ້ງບອກພວກເຮົາ ຖ້າທ່ານຕ້ອງການບໍລິການລ່ານແປພາສາ ເມື່ອທ່ານໂທຫາ Anthem ຫຼື ເມື່ອທ່ານຂໍຮັບການບໍລິການທີ່ໄດ້ຮັບການຄຸ້ມຄອງ. ການບໍລິການລ່ານແປພາສາ, ລວມທັງພາສາມື ແມ່ນມີໃຫ້ທ່ານໂດຍບໍ່ເສຍຄ່າ. ພວກເຮົາບໍ່ຊຸກຍູ້ເປັນຢ່າງຍິ່ງໃຫ້ໃຊ້ເດັກ ຫຼື ສະມາຊິກໃນຄອບຄົວເປັນລ່ານແປພາສາ. ເພື່ອຮຽນຮູ້ເພີ່ມຕື່ມກ່ຽວກັບການບໍລິການລ່ານແປພາສາ, ໃຫ້ໂທຫາເບີ **1-800-407-4627 (TTY 711)**.

ຖ້າທ່ານຕ້ອງການການບໍລິການລ່ານແປພາສາ, ລວມທັງພາສມີ ຢູ່ທີ່ຮ້ານຂາຍຢາຂອງ Medi-Cal Rx, ໃຫ້ໂທຫາຝ່າຍບໍລິການລູກຄ້າຂອງ Medi-Cal Rx ທີ່ເບີ **1-800-977-2273**, 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ.ບັນດາຜູ້ໃຊ້ TTY ສາມາດໂທຫາເບີ 711, ວັນຈັນ ເຖິງ ວັນສຸກ, ແຕ່ 8 ໂມງເຊົ້າຫາ 5 ໂມງແລງ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ເວລາເດີນທາງ ຫຼື ໄລຍະທາງໄປຮັບການດູແລ

Anthem ຕ້ອງປະຕິບັດຕາມມາດຕະຖານເວລາເດີນທາງ ແລະ ໄລຍະທາງສຳລັບການໄປຮັບການດູແລຂອງທ່ານ. ມາດຕະຖານເຫຼົ່ານັ້ນ ຊ່ວຍຮັບປະກັນໃຫ້ທ່ານສາມາດໄດ້ຮັບການດູແລໂດຍບໍ່ຕ້ອງເດີນທາງໄກເກີນໄປຈາກບ່ອນທີ່ທ່ານອາໄສຢູ່. ມາດຕະຖານເວລາ ຫຼື ໄລຍະທາງໃນການເດີນທາງ ແມ່ນຂຶ້ນຢູ່ກັບຄາວຕີ້ທີ່ທ່ານອາໄສຢູ່.

ຖ້າ Anthem ບໍ່ສາມາດໃຫ້ການດູແລທ່ານ ພາຍໃນມາດຕະຖານເວລາ ຫຼື ໄລຍະທາງໃນການເດີນທາງເຫຼົ່ານີ້ໄດ້, DHCS ອາດຈະອະນຸຍາດໃຫ້ໃຊ້ມາດຕະຖານອື່ນ ເຊິ່ງເອີ້ນວ່າ: ມາດຕະຖານການເຂົ້າເຖິງທາງເລືອກ. ສຳລັບມາດຕະຖານເວລາ ແລະ ໄລຍະທາງຂອງ Anthem ສຳລັບບ່ອນທີ່ທ່ານອາໄສຢູ່, ກະລຸນາເຂົ້າເບິ່ງທີ່ **anthem.com/ca**. ຫຼື ໂທຫາເບີ **1-800-407-4627 (TTY 711)**.

ຖ້າທ່ານຕ້ອງການການດູແລຈາກຜູ້ໃຫ້ບໍລິການ ແລະ ຜູ້ໃຫ້ບໍລິການນັ້ນຕັ້ງຢູ່ໄກຈາກບ່ອນທີ່ທ່ານອາໄສຢູ່, ກະລຸນາຕິດຕໍ່ຝ່າຍບໍລິການສະມາຊິກທີ່ເບີ **1-800-407-4627 (TTY 711)**.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ພວກເຂົາສາມາດຊ່ວຍທ່ານຊອກຫາການດູແລກັບຜູ້ໃຫ້ບໍລິການທີ່ຢູ່ໃກ້ກັບທ່ານກວ່າ. ຖ້າ Anthem ບໍ່ສາມາດຊອກຫາການດູແລໃຫ້ທ່ານກັບຜູ້ໃຫ້ບໍລິການທີ່ຢູ່ໃກ້ກັບທ່ານໄດ້, ທ່ານສາມາດຂໍໃຫ້ Anthem ຈັດກຽມການເດີນທາງ ເພື່ອໃຫ້ທ່ານໄປຫາຜູ້ໃຫ້ບໍລິການຂອງທ່ານ, ເຖິງວ່າຜູ້ໃຫ້ບໍລິການນັ້ນ ຈະຢູ່ໄກຈາກບ່ອນທີ່ທ່ານອາໄສຢູ່ກໍຕາມ.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອກັບຜູ້ໃຫ້ບໍລິການທີ່ເປັນຮ້ານຂາຍຢາ, ກະລຸນາໂທຫາ Medi-Cal Rx ທີ່ເບີ **1-800-977-2273 (TTY 1-800-977-2273) ແລະ ກົດ 7 ຫຼື 711**.

ຈະຖືວ່າຢູ່ໄກ ຖ້າທ່ານບໍ່ສາມາດໄປຫາຜູ້ໃຫ້ບໍລິການນັ້ນໄດ້ພາຍໃນມາດຕະຖານເວລາ ແລະ ໄລຍະທາງໃນການເດີນທາງຂອງ Anthem ສຳລັບເຂດປົກຄອງຂອງທ່ານ, ໂດຍບໍ່ກ່ຽວກັບມາດຕະຖານການເຂົ້າເຖິງທາງເລືອກໃດໆທີ່ Anthem ອາດຈະໃຊ້ສຳລັບລະຫັດໄປສະນີຂອງທ່ານ.

ການນັດໝາຍ

ເມື່ອທ່ານຕ້ອງການການດູແລສຸຂະພາບ:

- ໂທຫາ PCP ຂອງທ່ານ
- ກຽມໝາຍເລກ ID ຂອງ Anthem ຂອງທ່ານໃຫ້ພ້ອມ ໃນເວລາໂທ
- ຝາກຂໍ້ຄວາມພ້ອມກັບຊື່ ແລະ ເບີໂທລະສັບຂອງທ່ານ ຖ້າຫ້ອງການປິດ
- ຖືບັດປະຈຳຕົວ BIC ແລະ ບັດ ID ຂອງ Anthem ຂອງທ່ານໄປຍັງການນັດໝາຍຂອງທ່ານ
- ຂໍເອົາການຮັບສົ່ງເພື່ອໄປຕາມການນັດໝາຍຂອງທ່ານ, ຖ້າຈຳເປັນ
- ຂໍການຊ່ວຍເຫຼືອດ້ານພາສາ ຫຼື ການບໍລິການລ່ານແປ ພາສາທີ່ຕ້ອງການ ກ່ອນການນັດໝາຍຂອງທ່ານ ເພື່ອ ໃຫ້ໄດ້ຮັບການບໍລິການໃນເວລາເຂົ້າພົບຂອງທ່ານ
- ໄປໃຫ້ກົງເວລາການນັດໝາຍຂອງທ່ານ, ໄປຮອດກ່ອນ ສອງສາມນາທີເພື່ອລົງທະບຽນ, ຕື່ມແບບຟອມ ແລະ ຕອບຄຳຖາມທີ່ PCP ຂອງທ່ານອາດຈະມີ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ໂທແຈ້ງໃນທັນທີ ຖ້າທ່ານບໍ່ສາມາດໄປຕາມການນັດໝາຍຂອງທ່ານ ຫຼື ຈະໄປຊ້າ
- ກຽມຄຳຖາມ ແລະ ຢາຂອງທ່ານໃຫ້ພ້ອມ

ຖ້າທ່ານມີເຫດສຸກເສີນ, ໃຫ້ໂທຫາ **911** ຫຼື ໄປຫາຫ້ອງສຸກເສີນທີ່ຢູ່ໃກ້ທີ່ສຸດ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຕັດສິນໃຈວ່າທ່ານຕ້ອງການການດູແລຢ່າງຮີບດ່ວນພຽງໃດ ແຕ່ບໍ່ສາມາດຕິດຕໍ່ PCP ຂອງທ່ານເພື່ອປຶກສາໄດ້, ໃຫ້ໂທຫາ ສາຍພະຍາບານ 24/7.

ການໄປຍັງການນັດໝາຍຂອງທ່ານ

ຖ້າທ່ານບໍ່ມີຊ່ອງທາງໃນການໄປ ແລະ ກັບຈາກການນັດໝາຍຂອງທ່ານສຳລັບການບໍລິການທີ່ໄດ້ຮັບການຄຸ້ມຄອງ, Anthem ຈະສາມາດຊ່ວຍຈັດແຈງການຂົນສົ່ງໃຫ້ທ່ານໄດ້. ທ່ານອາດຈະມີເງື່ອນໄຂໄດ້ຮັບການຂົນສົ່ງທາງການແພດ ຫຼື ການຂົນສົ່ງທີ່ບໍ່ແມ່ນທາງການແພດໄດ້ ໂດຍຂຶ້ນຢູ່ກັບສະຖານະການຂອງທ່ານ.

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການບໍລິການຂົນສົ່ງເຫຼົ່ານີ້ ບໍ່ແມ່ນສໍາລັບກໍລະນີສຸກເສີນ ແລະ ອາດມີໃຫ້ທ່ານໂດຍບໍ່ໄດ້ເສຍຄ່າ.

ຖ້າທ່ານມີເຫດການສຸກເສີນ, ໃຫ້ໂທຫາ **911**. ການຂົນສົ່ງທາງ ແມ່ນມີໃຫ້ການບໍລິການ ແລະ ການນັດໝາຍທີ່ບໍ່ກ່ຽວຂ້ອງກັບ ການດູແລສຸກເສີນ. ການຂົນສົ່ງເຫຼົ່ານີ້ອາດຈະມີໃຫ້ທ່ານໂດຍບໍ່ ໄດ້ເສຍຄ່າ.

ເພື່ອສຶກສາເພີ່ມຕື່ມ, ໃຫ້ໄປອ່ານຫົວຂໍ້ "ສິດທິປະໂຫຍດໃນການ ຂົນສົ່ງສໍາລັບສະຖານະການທີ່ບໍ່ແມ່ນ ເຫດສຸກເສີນ" ຂ້າງລຸ່ມນີ້.

ການຍົກເລີກ ແລະ ການກໍານົດເວລາໃໝ່

ຖ້າທ່ານບໍ່ສາມາດໄປຕາມການນັດໝາຍຂອງທ່ານ, ໃຫ້ໂທ ແຈ້ງ ຫ້ອງການຂອງຜູ້ໃຫ້ບໍລິການຂອງທ່ານທັນທີ. ທ່ານໝໍສ່ວນໃຫຍ່ ຂໍໃຫ້ທ່ານໂທຫາ 24 ຊົ່ວໂມງ (1 ວັນລັດຖະການ) ກ່ອນການນັດ ໝາຍຂອງທ່ານ ຖ້າທ່ານຕ້ອງໄດ້ຍົກເລີກມັນ. ຖ້າທ່ານບໍ່ໄປຍັງ ການນັດໝາຍຊໍ້າແລ້ວຊໍ້າອີກ, ທ່ານໝໍຂອງທ່ານອາດຈະຢຸດ ເຊົາການໃຫ້ການດູແລແກ່ທ່ານ ແລະ ທ່ານຈະຕ້ອງໄດ້ຂອກຫາ ທ່ານໝໍຄົນໃໝ່.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທ ແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການຊຳລະເງິນ

ທ່ານ**ບໍ່**ຈຳເປັນຕ້ອງຈ່າຍເງິນສຳລັບການບໍລິການທີ່ໄດ້ຮັບການຄຸ້ມຄອງ ເວັ້ນເສຍແຕ່ທ່ານຈະມີສ່ວນແບ່ງຄ່າໃຊ້ຈ່າຍ ສຳລັບການດູແລໄລຍະຍາວເທົ່ານັ້ນ. ເພື່ອສຶກສາເພີ່ມຕື່ມ, ໃຫ້ອ່ານຫົວຂໍ້ "ສຳລັບສະມາຊິກທີ່ມີການດູແລໄລຍະຍາວ ແລະ ມີສ່ວນແບ່ງຄ່າໃຊ້ຈ່າຍ" ໃນພາກທີ 2. ໃນກໍລະນີຫຼາຍສ່ວນໃຫຍ່, ທ່ານຈະບໍ່ໄດ້ຮັບໃບບິນເກັບເງິນຈາກຜູ້ໃຫ້ບໍລິການ. ທ່ານຕ້ອງສະແດງບັດ ID ຂອງ Anthem ແລະ ບັດ BIC ຂອງ Medi-Cal ຂອງທ່ານ ໃນເວລາທ່ານເຂົ້າຮັບການບໍລິການດູແລສຸຂະພາບ ຫຼື ໃບສັ່ງແພດ, ເພື່ອໃຫ້ຜູ້ໃຫ້ບໍລິການຂອງທ່ານຮູ້ວ່າໃຜຈະຮຽກເກັບເງິນນຳໃຜ. ທ່ານສາມາດຂໍ ຄຳອະທິບາຍກ່ຽວກັບສິດທິປະໂຫຍດ (EOB) ຫຼື ຄຳຖະແຫຼງ ຈາກຜູ້ໃຫ້ບໍລິການໄດ້. EOBs ແລະ ຄຳຖະແຫຼງ ບໍ່ຈະບໍ່ໄດ້ເສຍຄ່າ.

ຖ້າທ່ານໄດ້ຮັບໃບບິນ, ໃຫ້ໂທຫາ **1-800-407-4627 (TTY 711)**. ຖ້າທ່ານໄດ້ຮັບບິນສຳລັບຢາທີ່ແພດສັ່ງ, ໃຫ້ໂທຫາ Medi-Cal Rx ທີ່ເບີ **1-800-977-2273 (TTY 1-800-977-2273) ແລະ ກົດ**

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

7 ຫຼື 711. ຫຼື ເຂົ້າເບິ່ງເວັບໄຊຂອງ Medi-Cal Rx ທີ່ https://medi-calrx.dhcs.ca.gov/home/.

ແຈ້ງບອກ Anthem ກ່ຽວກັບຈຳນວນເງິນທີ່ຮຽກເກັບຈາກທ່ານ, ວັນທີ່ໃຫ້ການບໍລິການ ແລະ ເຫດຜົນສຳລັບໃບບິນ. ທ່ານບໍ່ຈຳເປັນຕ້ອງຈ່າຍເງິນໃຫ້ຜູ້ໃຫ້ບໍລິການ ສຳລັບຈຳນວນເງິນໃດໆກໍຕາມທີ່ໄດ້ຮັບການຄຸ້ມຄອງຈາກ Anthem ສຳລັບການບໍລິການທີ່ໄດ້ຮັບການຄຸ້ມຄອງ. ທ່ານຈະຕ້ອງໄດ້ຮັບການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ຈາກ Anthem ກ່ອນທີ່ທ່ານຈະໄປຫາຜູ້ໃຫ້ບໍລິການນອກເຄືອຂ່າຍ, ຍົກເວັ້ນໃນເມື່ອ:

- ທ່ານຕ້ອງການການບໍລິການສຸກເສີນ, ໃນກໍລະນີນີ້ໃຫ້ໂທຫາ 911 ຫຼື ໄປໂຮງໝໍທີ່ຢູ່ໃກ້ທີ່ສຸດ.
- ທ່ານຕ້ອງການການບໍລິການວາງແຜນຄອບຄົວ ຫຼື ການບໍລິການທີ່ກ່ຽວຂ້ອງກັບການກວດການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ, ໃນກໍລະນີນີ້ທ່ານສາມາດໄປຫາຜູ້ໃຫ້ບໍລິການຂອງ Medi-Cal ໃດກໍໄດ້ ໂດຍບໍ່ຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ).

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ທ່ານຕ້ອງການການບໍລິການດ້ານສຸຂະພາບຈິດ, ໃນກໍລະນີນີ້ ທ່ານສາມາດໄປຫາຜູ້ໃຫ້ບໍລິການໃນເຄືອຂ່າຍ ຫຼື ຜູ້ໃຫ້ບໍລິການຂອງແຜນສຸຂະພາບຈິດຂອງຄາວຕີ້ ໂດຍບໍ່ຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ).

ຖ້າທ່ານບໍ່ໄດ້ຮັບການດູແລຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ ແລະ ທ່ານບໍ່ໄດ້ຮັບການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ຈາກ Anthem, ທ່ານອາດຈະຕ້ອງໄດ້ຈ່າຍຄ່າແກ່ການດູແລທີ່ທ່ານໄດ້ຮັບ. ຖ້າທ່ານຕ້ອງການການດູແລທີ່ຈຳເປັນທາງການແພດ ຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ ຍ້ອນວ່າບໍ່ມີໃຫ້ຢູ່ໃນເຄືອຂ່າຍຂອງ Anthem, ທ່ານຈະບໍ່ໄດ້ຈ່າຍຄ່າ ຕາບໃດທີ່ການດູແລດັ່ງກ່າວແມ່ນການບໍລິການທີ່ໄດ້ຮັບການຄຸ້ມຄອງຂອງ Medi-Cal ແລະ ທ່ານໄດ້ຮັບການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ຈາກ Anthem ສຳລັບການບໍລິການນັ້ນແລ້ວ. ເພື່ອສຶກສາເພີ່ມຕື່ມກ່ຽວກັບການດູແລສຸກເສີນ, ການດູແລແບບຮີບດ່ວນ ແລະ ການດູແລທີ່ລະອຽດອ່ອນ, ໃຫ້ໄປອ່ານທີ່ຫົວຂໍ້ນັ້ນໆໃນພາກນີ້.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານໄດ້ຮັບໃບບິນເກັບເງິນ ຫຼື ຖືກຂໍໃຫ້ຈ່າຍຄ່າຮ່ວມຈ່າຍທີ່ທ່ານຄິດວ່າ ທ່ານບໍ່ຈຳເປັນຕ້ອງຈ່າຍ, ໃຫ້ໂທຫາເບີ **1-800-407-4627 (TTY 711)**. ຖ້າທ່ານໄດ້ຈ່າຍບິນ, ທ່ານສາມາດຍື່ນແບບຟອມຮຽກຫວງນຳ Anthem ໄດ້. ທ່ານຈະຈຳເປັນຕ້ອງແຈ້ງບອກ Anthem ເປັນລາຍລັກອັກສອນວ່າ ຍ້ອນຫຍັງທ່ານຈຶ່ງຈຳເປັນຕ້ອງຈ່າຍຄ່າລາຍການ ຫຼື ການບໍລິການນັ້ນ. Anthem ຈະອ່ານຄຳຮຽກຫວງຂອງທ່ານ ແລະ ຕັດສິນວ່າທ່ານຈະສາມາດໄດ້ຮັບເງິນຄືນ ຫຼື ບໍ່.

ຖ້າມີຄຳຖາມ ຫຼື ເພື່ອຂໍແບບຟອມຮຽກຫວງ ໂທຫາເບີ **1-800-407-4627 (TTY 711)**. ຖ້າທ່ານໄດ້ຮັບການບໍລິການໃນລະບົບວຽກງານນັກຮົບເກົ່າ ຫຼື ການບໍລິການທີ່ບໍ່ໄດ້ຮັບການຄຸ້ມຄອງ ຫຼື ບໍ່ໄດ້ຮັບການອະນຸຍາດຢູ່ນອກ California, ທ່ານອາດຈະຕ້ອງໄດ້ຮັບຜິດຊອບຈ່າຍຄ່າໃຊ້ຈ່າຍ.

Anthem ຈະບໍ່ຈ່າຍເງິນຄືນໃຫ້ທ່ານ ຖ້າຫາກว่า:

- ການບໍລິການບໍ່ໄດ້ຮັບການຄຸ້ມຄອງຈາກ Medi-Cal ເຊັ່ນ: ການບໍລິການດ້ານຄວາມງາມ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ທ່ານຍັງຈ່າຍຈຳນວນສ່ວນແບ່ງຄ່າໃຊ້ຈ່າຍຂອງ Medi-Cal ບໍ່ທັນຄົບ
- ທ່ານໄດ້ໄປພົບທ່ານໝໍທີ່ບໍ່ຮັບ Medi-Cal ແລະ ທ່ານໄດ້ເຊັນແບບຟອມທີ່ລະບຸວ່າ ແນວໃດທ່ານກຳຈະເຂົ້າພົບ ແລະ ທ່ານຈະຈ່າຍຄ່າບໍລິການດ້ວຍຕົວທ່ານເອງ
- ທ່ານຂໍໃຫ້ຈ່າຍເງິນຄືນໃຫ້ແກ່ຄ່າຈ່າຍຮ່ວມ ສຳລັບໃບສັ່ງແພດທີ່ໄດ້ຮັບການຄຸ້ມຄອງຈາກແຜນ Medicare ພາກ D ຂອງທ່ານ

ການນຳສົ່ງຕໍ່

ຖ້າທ່ານຕ້ອງການຜູ້ຊ່ຽວຊານສຳລັບການດູແລຂອງທ່ານ, PCP ຂອງທ່ານ ຫຼືຜູ້ຊ່ຽວຊານຄົນອື່ນ ຈະນຳສົ່ງທ່ານໄປຍັງຄົນໜຶ່ງ. ຜູ້ຊ່ຽວຊານ ແມ່ນຜູ້ໃຫ້ບໍລິການທີ່ລົງເລິກໃສ່ປະເພດການບໍລິການດູແລສຸຂະພາບໃດໜຶ່ງ. ທ່ານໝໍທີ່ນຳສົ່ງທ່ານຈະເຮັດວຽກກັບທ່ານ ເພື່ອເລືອກຜູ້ຊ່ຽວຊານ. ເພື່ອຊ່ວຍຮັບປະກັນໃຫ້ທ່ານສາມາດໄປຫາຜູ້ຊ່ຽວຊານໄດ້ທັນເວລາ, DHCS ໄດ້ກຳນົດກອບເວລາສຳ

ລັບສະມາຊິກ ເພື່ອໃຫ້ໄດ້ຮັບການນັດໝາຍ. ກອບເວລາເຫຼົ່ານີ້ ໄດ້ລະບຸໄວ້ໃນຫົວຂໍ້ "ການເຂົ້າເຖິງການດູແລຢ່າງທັນເວລາ" ໃນ ປຶ້ມຄູ່ມືຫົວນີ້. ຫ້ອງການຂອງ PCP ຂອງທ່ານ ສາມາດຊ່ວຍທ່ານ ຕັ້ງນັດໝາຍກັບຜູ້ຊ່ຽວຊານໄດ້.

ການບໍລິການອື່ນໆທີ່ອາດຈະຕ້ອງການການນຳສົ່ງຕໍ່ ປະກອບ ດ້ວຍ ຂັ້ນຕອນການປິ່ນປົວໃນຫ້ອງການ, ການສ່ງລັງສີ, ການ ກວດໃນຫ້ອງທົດລອງ.

PCP ຂອງທ່ານ ອາດຈະໃຫ້ແບບຟອມສະບັບໜຶ່ງໃຫ້ທ່ານຖືໄປ ໃຫ້ຜູ້ຊ່ຽວຊານ. ຜູ້ຊ່ຽວຊານຈະຕື່ມຂໍ້ມູນໃສ່ແບບຟອມດັ່ງກ່າວ ແລະ ສົ່ງກັບໄປໃຫ້ PCP ຂອງທ່ານ. ຜູ້ຊ່ຽວຊານຈະປິ່ນປົວທ່ານ ໄປໃຫ້ດົນເທົ່າທີ່ທີ່ພວກເຂົາຄິດວ່າທ່ານຍັງມີຄວາມຕ້ອງການ ການປິ່ນປົວຢູ່.

ຖ້າທ່ານມີບັນຫາສຸຂະພາບທີ່ຕ້ອງການການດູແລທາງການແພດ ພິເສດເປັນເວລາດົນ, ທ່ານອາດຈະຕ້ອງການ ການນຳສົ່ງຕໍ່ແບບ ໝັ້ນຄົງ. ນີ້ໝາຍຄວາມວ່າ ທ່ານສາມາດໄປຫາຜູ້ຊ່ຽວຊານຄົນ ດຽວກັນໄດ້ຫຼາຍກວ່າໜຶ່ງຄັ້ງ ໂດຍບໍ່ຕ້ອງຂໍການນຳສົ່ງຕໍ່ໃນແຕ່ ລະຄັ້ງ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານມີບັນຫາໃນການຂໍ ການນຳສົ່ງຕໍ່ແບບໝັ້ນຄົງ ຫຼື ເພື່ອ ຂໍສະບັບສຳເນົາຂອງນະໂຍບາຍວ່າດ້ວຍການນຳສົ່ງຕໍ່ຂອງ Anthem, ໃຫ້ໂທຫາເບີ **1-800-407-4627 (TTY 711)**.

ທ່ານ**ບໍ່**ຈຳເປັນຕ້ອງມີການນຳສົ່ງ ສຳລັບ:

- ການໄປພົບ PCP
- ການໄປພົບ ແພດປະສູດ/ແພດພະຍາດຍິງ (OB/GYN)
- ການໄປພົບສຳລັບການດູແລຮີບດ່ວນ ຫຼື ສຸກເສີນ
- ການບໍລິການທີ່ລະອຽດອ່ອນສຳລັບຜູ້ໃຫຍ່ ເຊັ່ນ: ການດູ ແລການຖືກລ່ວງລະເມີດທາງເພດ
- ບໍລິການວາງແຜນຄອບຄົວ (ເພື່ອສຶກສາເພີ່ມຕື່ມ, ກະລຸນາໂທຫາຫ້ອງການຂໍ້ມູນການວາງແຜນຄອບຄົວ ແລະ ບໍລິການນຳສົ່ງ ໄດ້ທີ່ເບີ **1-800-942-1054**
- ການກວດ ແລະ ການໃຫ້ຄຳປຶກສາກ່ຽວກັບໂລກ HIV (12 ປີຂຶ້ນໄປ)
- ການບໍລິການປິ່ນປົວການຕິດເຊື້ອພະຍາດຕິດຕໍ່ທາງ ເພດສຳພັນ (12 ປີຂຶ້ນໄປ)

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ການບໍລິການນອດຈັດກະດູກ (ອາດຈະຈຳເປັນຕ້ອງມີການນຳສົ່ງຕໍ່ ເມື່ອໃຫ້ບໍລິການໂດຍ FQHC, RHC ແລະ IHCP ນອກເຄືອຂ່າຍ)
- ການປະເມີນສຸຂະພາບຈິດເບື້ອງຕົ້ນ

ນອກຈາກນັ້ນແລ້ວ, ເດັກຍັງສາມາດເຂົ້າຮັບການບໍລິການສຸຂະພາບຈິດສຳລັບຄົນເຈັບນອກ, ການບໍລິການທີ່ລະອຽດອ່ອນບາງປະເພດ ແລະ ການບໍລິການປິ່ນປົວຄວາມຜິດປົກກະຕິຈາກການໃຊ້ສານເສບຕິດໄດ້ ໂດຍບໍ່ຕ້ອງມີຄຳຍິນຍອມຂອງພໍ່ແມ່. ເພື່ອຮຽນຮູ້ເພີ່ມຕື່ມ, ໃຫ້ອ່ານຂໍ້ "ການບໍລິການທີ່ເດັກສາມາດໃຫ້ການຍິນຍອມໄດ້" ແລະ "ການບໍລິການປິ່ນປົວຄວາມຜິດປົກກະຕິຈາກການໃຊ້ສານເສບຕິດ" ໃນພາກທີ 4 ຂອງປຶ້ມຄູ່ມືຫົວນີ້.

ການນຳສົ່ງຕໍ່ຕາມ ກົດໝາຍວ່າດ້ວຍຄວາມເທົ່າທຽມດ້ານມະເຮັງແຫ່ງລັດຄໍາລິຟໍເນຍ

ການປິ່ນປົວມະເຮັງທີ່ຊັບຊ້ອນຢ່າງມີປະສິດທິພາບ ແມ່ນຂຶ້ນກັບຫຼາຍປັດໄຈ. ປັດໄຈເຫຼົ່ານີ້ໄດ້ແກ່ ການເຂົ້າຮັບການກວດບົ່ງ

ມະພິພະຍາດທີ່ຖືກຕ້ອງ ແລະ ການເຂົ້າຮັບການປິ່ນປົວຢ່າງ ທັນເວລາ ຈາກຜູ້ຊ່ຽວຊານດ້ານມະເຮັງ ຖ້າທ່ານຖືກກວດພົບ ວ່າເປັນມະເຮັງທີ່ຊັບຊ້ອນ, ກົດໝາຍວ່າດ້ວຍຄວາມເທົ່າທຽມ ໃນການປິ່ນປົວມະເຮັງແຫ່ງລັດ California ສະບັບໃໝ່ ອະນຸຍາດໃຫ້ ທ່ານ ສາມາດຮ້ອງຂໍການນຳສົ່ງຕໍ່ ຈາກທ່ານໝໍ ຂອງທ່ານໄດ້ ເພື່ອເຂົ້າຮັບ ການປິ່ນປົວມະເຮັງ ຈາກສູນມະ ເຮັງທີ່ໄດ້ຮັບການກຳນົດໂດຍ ສະຖາບັນມະເຮັງແຫ່ງຊາດ (NCI) ທີ່ຢູ່ໃນເຄືອຂ່າຍ, ສະຖານປິ່ນປົວທີ່ເປັນສາຂາຂອງ ໂຄງການຄົ້ນຄ້ວາວິໄຈເນື້ອງອກຊຸມຊົນ (NCORP) ຂອງ NCI ຫຼື ສູນວິຊາການມະເຮັງທີ່ມີຄຸນວຸດທິ.

ຖ້າ Anthem ບໍ່ມີສູນມະເຮັງທີ່ໄດ້ຮັບການກຳນົດໂດຍ NCI-ໃນ ເຄືອຂ່າຍ, Anthem ຈະອະນຸຍາດໃຫ້ ທ່ານ ສາມາດ ຮ້ອງຂໍ ການສົ່ງຕໍ່ ເພື່ອເຂົ້າຮັບການປິ່ນປົວມະເຮັງຈາກ ໜຶ່ງໃນບັນດາ ສູນນອກເຄືອຂ່າຍເຫຼົ່ານີ້ໃນລັດ California, ຖ້າມີ ໜຶ່ງໃນ ບັນດາສູນນອກເຄືອຂ່າຍ ແລະ Anthem ສາມາດຕົກລົງໄດ້ ກ່ຽວກັບ ການຈ່າຍເງິນ, ເວັ້ນເສຍແຕ່ວ່າທ່ານຈະເລືອກຜູ້ໃຫ້ ບໍລິການປິ່ນປົວມະເຮັງລາຍອື່ນເທົ່ານັ້ນ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານໄດ້ຖືກກວດພົບວ່າເປັນມະເຮັງ, ໃຫ້ຕິດຕໍ່ Anthem ເພື່ອສອບຖາມເບິ່ງວ່າທ່ານຈະມີສິດໄດ້ຮັບການບໍລິການຈາກ ໜຶ່ງໃນບັນດາສູນມະເຮັງເຫຼົ່ານີ້ ຫຼື ບໍ່.

ທ່ານພ້ອມທີ່ຈະເຊົາສູບຢາແລ້ວບໍ? ເພື່ອສຶກສາກ່ຽວກັບການບໍລິການເປັນພາສາອັງກິດ, ໃຫ້ໂທຫາເບີ 1-800-300-8086. ສຳລັບພາສາແອັດສະປາຍ, ໃຫ້ໂທຫາເບີ 1-800-600-8191.

ເພື່ອສຶກສາເພີ່ມຕື່ມ, ໄປທີ່ www.kickitca.org.

ການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ)

ສຳລັບການດູແລບາງປະເພດ, PCP ຫຼື ຜູ້ຊ່ຽວຊານສະເພາະທາງຂອງທ່ານ ຈະຈຳເປັນຕ້ອງໄດ້ຂໍການອະນຸຍາດນຳ Anthem ແລະ/ຫຼື ກຸ່ມຜູ້ຕາງໜ້າຂອງທ່ານ ກ່ອນທີ່ທ່ານຈະໄດ້ຮັບການດູແລ. ນີ້ແມ່ນເອີ້ນວ່າ: ການຂໍອະນຸມັດລ່ວງໜ້າ ຫຼື ການອະນຸຍາດລ່ວງໜ້າ. ເຊິ່ງໝາຍຄວາມວ່າ Anthem ແລະ/

ຫຼື ກຸ່ມທີ່ໄດ້ຮັບມອບໝາຍຂອງທ່ານ ຕ້ອງໄດ້ກວດໃຫ້ແນ່ໃຈວ່າ ການດູແລດັ່ງກ່າວ ແມ່ນມີຄວາມຈຳເປັນທາງການແພດ (ຈຳເປັນຕ້ອງມີ).

ການບໍລິການທີ່ຈຳເປັນທາງດ້ານການແພດ ແມ່ນການບໍລິການ ທີ່ສົມເຫດສົມຜົນ ແລະ ມີຄວາມຈຳເປັນເພື່ອປົກປ້ອງຊີວິດຂອງ ທ່ານ, ປ້ອງກັນທ່ານຈາກການເປັນພະຍາດຮ້າຍແຮງ ຫຼື ພິການ ຫຼື ຫຼຸດຜ່ອນຄວາມເຈັບປວດຢ່າງຮຸນແຮງຈາກພະຍາດ, ການເຈັບ ປ່ວຍ ຫຼື ການບາດເຈັບ. ສຳລັບສະມາຊິກທີ່ມີອາຍຸຕ່ຳກວ່າ 21 ປີ, ການບໍລິການ Medi-Cal ລວມມີການດູແລເບິ່ງແຍງທີ່ຈຳເປັນ ທາງການແພດເພື່ອແກ້ໄຂ ຫຼື ຊ່ວຍບັນເທົາການເຈັບປ່ວຍ ຫຼື ພາວະທາງຮ່າງກາຍ ຫຼື ຈິດໃຈ.

ການບໍລິການຕໍ່ໄປນີ້ຕ້ອງໄດ້ຂໍການອະນຸມັດລ່ວງໜ້າ (ການ ຂໍອະນຸຍາດລ່ວງໜ້າ) ຢູ່ສະເໝີ, ເຖິງວ່າທ່ານຈະເຂົ້າຮັບຈາກ ຜູ້ໃຫ້ບໍລິການໃນເຄືອຂ່າຍ Anthem ກໍຕາມ:

- ການເຂົ້ານອນໂຮງໝໍ, ຖ້າບໍ່ແມ່ນເຫດສຸກເສີນ
- ການບໍລິການນອກພື້ນທີ່ໃຫ້ບໍລິການຂອງ Anthem, ຖ້າບໍ່ແມ່ນກໍລະນີສຸກເສີນ ຫຼື ຮີບດ່ວນ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ການຜ່າຕັດຄົນເຈັບນອກ
- ການດູແລໄລຍະຍາວ ຫຼື ການບໍລິການພະຍາບານທີ່ມີຄວາມຊຳນານຢູ່ສະຖານພະຍາບານ
- ການປິ່ນປົວພິເສດ, ການຖ່າຍຮູບລັງສີ, ການທົດສອບ ແລະ ການຜ່າຕັດ
- ການບໍລິການຂົນສົ່ງທາງການແພດໃນເວລາທີ່ມັນບໍ່ແມ່ນເຫດສຸກເສີນ
- ການສະໜັບສະໜູນຊຸມຊົນ (CS)

ການບໍລິການລົດໂຮງໝໍສຸກເສີນບໍ່ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ).

ພາຍໃຕ້ ປະມວນກົດໝາຍສຸຂະພາບ ແລະ ຄວາມປອດໄພ ມາດຕາ 1367.01(h)(1), Anthem ມີເວລາ 5 ວັນລັດຖະການ ນັບຈາກເວລາທີ່ Anthem ໄດ້ຮັບຂໍ້ມູນຢ່າງສົມເຫດສົມຜົນ ທີ່ຕ້ອງການນຳມາໃຊ້ເພື່ອຕັດສິນໃຈ (ອະນຸມັດ ຫຼື ປະຕິເສດ) ການຮ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ). ສຳລັບຄຳຂໍທີ່ຜູ້ໃຫ້ບໍລິການເປັນຜູ້ຮ້ອງຂໍ ຫຼື ໃນເວລາທີ່ Anthem ເຫັນວ່າ ການປະຕິບັດຕາມກອບເວລາມາດຕະຖານສາມາດເປັນ

ອັນຕະລາຍຢ່າງຮ້າຍແຮງຕໍ່ຊີວິດ ຫຼື ສຸຂະພາບ ຫຼື ຄວາມສາມາດໄດ້ຮັບ, ການຮັກສາ ຫຼື ການຟື້ນຟູໜ້າທີ່ການທຳງານສູງສຸດ, Anthem ຈະດຳເນີນການຕັດສິນໃນໃຫ້ການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ໂດຍດ່ວນ (ໄວ).

Anthem ຈະແຈ້ງໃຫ້ທ່ານຮູ້ໂດຍໄວທີ່ສຸດ ເທົ່າທີ່ພາວະສຸຂະພາບຂອງທ່ານຕ້ອງການ ແລະ ບໍ່ເກີນ 72 ຊົ່ວໂມງ ຫຼັງຈາກໄດ້ຮັບຄຳຂໍບໍລິການ.

ການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ແມ່ນໄດ້ຮັບການກວດສອບໂດຍພະນັກງານຄລີນິກ ຫຼື ແພດ ເຊັ່ນ: ທ່ານໝໍ, ພະຍາບານ ແລະ ເພສັດຊະກອນ.

Anthem ຈະບໍ່ຈ່າຍເງິນໃຫ້ແກ່ຜູ້ກວດພິຈາລະນາ ເພື່ອໃຫ້ປະຕິເສດການຄຸ້ມຄອງ ຫຼື ການບໍລິການ. ຖ້າ Anthem ບໍ່ໃຫ້ການອະນຸມັດແກ່ຄຳຂໍ, Anthem ຈະສົ່ງຈົດໝາຍແຈ້ງການກ່ຽວກັບການດຳເນີນການ (NOA) ມາໃຫ້ທ່ານ. ຈົດໝາຍແຈ້ງ NOA ຈະບອກວິທີຍື່ນອຸທອນແກ່ທ່ານ ຖ້າທ່ານບໍ່ເຫັນດີກັບການຕັດສິນໃຈດັ່ງກ່າວ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

Anthem ຈະຕິດຕໍ່ຫາທ່ານ ຖ້າ Anthem ຕ້ອງການຂໍ້ມູນເພີ່ມເຕີມ ຫຼື ເວລາເພີ່ມເຕີມເພື່ອກວດພິຈາລະນາຄຳຮ້ອງຂໍຂອງທ່ານ.

ທ່ານບໍ່ຈຳເປັນຕ້ອງໄດ້ຮັບການອະນຸມັດລ່ວງໜ້າ (ການຂໍອະນຸຍາດກ່ອນ) ສຳລັບການດູແລໃນກໍລະນີສຸກເສີນ, ເຖິງວ່າຈະຢູ່ນອກເຄືອຂ່າຍ ແລະ ນອກພື້ນທີ່ໃຫ້ບໍລິການຂອງທ່ານກໍຕາມ. ນີ້ລວມເຖິງການເຈັບທ້ອງເກີດລູກ ແລະ ການເກີດລູກ ຖ້າທ່ານຖືພາ. ທ່ານບໍ່ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ສຳລັບການບໍລິການການດູແລທີ່ລະອຽດອ່ອນບາງຢ່າງ. ເພື່ອສຶກສາເພີ່ມຕື່ມກ່ຽວກັບການບໍລິການການດູແລທີ່ລະອຽດອ່ອນ, ໃຫ້ໄປທີ່ຫົວຂໍ້ "ການດູແລທີ່ລະອຽດອ່ອນ" ໃນຫົວຂໍ້ຕໍ່ໄປໃນພາກນີ້.

ສຳລັບຄຳຖາມກ່ຽວກັບການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ), ໂທຫາເບີ **1-800-407-4627 (TTY 711).**

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຄຳເຫັນທີສອງ

ທ່ານອາດຈະຕ້ອງການຄຳເຫັນທີສອງກ່ຽວກັບການດູແລທີ່ຜູ້ໃຫ້ບໍລິການຂອງທ່ານບອກວ່າທ່ານຈຳເປັນຕ້ອງຮັບ ຫຼື ກ່ຽວກັບການບົ່ງມະຕິພະຍາດ ຫຼື ແຜນການປິ່ນປົວຂອງທ່ານ. ຕົວຢ່າງ: ທ່ານອາດຈະຕ້ອງການຄຳເຫັນທີສອງຖ້າທ່ານບໍ່ແນ່ໃຈວ່າທ່ານຈຳເປັນຕ້ອງເຮັດການປິ່ນປົວ ຫຼື ການຜ່າຕັດທີ່ແພດສັ່ງ ຫຼື ທ່ານໄດ້ລອງປະຕິບັດຕາມແຜນການປິ່ນປົວແລ້ວ ແຕ່ມັນບໍ່ໄດ້ຜົນ.

ຖ້າທ່ານຕ້ອງການຂໍຄຳເຫັນທີສອງ, ພວກເຮົາຈະນຳສົ່ງທ່ານໄປຫາຜູ້ໃຫ້ບໍລິການໃນເຄືອຂ່າຍທີ່ມີຄຸນວຸດທິ ທີ່ສາມາດໃຫ້ຄຳເຫັນທີສອງແກ່ທ່ານໄດ້. ສຳລັບການຊ່ວຍເຫຼືອໃນການເລືອກຜູ້ໃຫ້ບໍລິການ, ໂທຫາເບີ **1-800-407-4627 (TTY 711)**.

Anthem ຈະຈ່າຍຄ່າຄຳເຫັນທີສອງ ຖ້າທ່ານ ຫຼື ຜູ້ໃຫ້ບໍລິການໃນເຄືອຂ່າຍຂອງທ່ານຂໍເອົາມັນ ແລະ ທ່ານໄດ້ຮັບຄຳເຫັນທີສອງຈາກຜູ້ໃຫ້ບໍລິການໃນເຄືອຂ່າຍ. ທ່ານບໍ່ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) Anthem ເພື່ອໄປຂໍຮັບຄຳເຫັນທີສອງຈາກຜູ້ໃຫ້ບໍລິການໃນເຄືອຂ່າຍ. ຜູ້ໃຫ້ບໍລິການ

ເຄືອຂ່າຍຂອງທ່ານສາມາດຊ່ວຍໃຫ້ທ່ານໄດ້ຮັບການນຳສົ່ງ ເພື່ອໄປຂໍຄຳເຫັນທີສອງໄດ້ ຖ້າທ່ານຕ້ອງການ.

ຖ້າບໍ່ມີຜູ້ໃຫ້ບໍລິການໃນເຄືອຂ່າຍ Anthem ທີ່ຈະສາມາດໃຫ້ຄຳເຫັນທີສອງແກ່ທ່ານໄດ້, Anthem ຈະຈ່າຍຄ່າຄຳເຫັນທີສອງຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ. Anthem ຈະບອກໃຫ້ທ່ານຊາບພາຍໃນ 5 ວັນລັດຖະການວ່າຜູ້ໃຫ້ບໍລິການທີ່ທ່ານເລືອກໄປຂໍຄຳເຫັນທີສອງນັ້ນ ໄດ້ຮັບການອະນຸມັດ ຫຼື ບໍ່. ຖ້າທ່ານມີພະຍາດຊຳເຮື້ອ, ຮຸນແຮງ ຫຼື ຮ້າຍແຮງ ຫຼື ມີອັນຕະລາຍກະທັນຫັນ ແລະ ຮ້າຍແຮງຕໍ່ກັບສຸຂະພາບຂອງທ່ານ, ເຊິ່ງລວມທັງ ແຕ່ບໍ່ຈຳກັດພຽງແຕ່ ການເສຍຊີວິດ, ສູນເສຍແຂນຂາ ຫຼື ສ່ວນສຳຄັນຂອງຮ່າງກາຍ ຫຼື ໜ້າທີ່ການສຳຄັນຂອງຮ່າງກາຍ, Anthem ຈະແຈ້ງທ່ານຢ່າງເປັນລາຍລັກອັກສອນພາຍໃນ 72 ຊົ່ວໂມງ.

ຖ້າ Anthem ປະຕິເສດຄຳຂໍໄປຮັບຄຳເຫັນທີສອງຂອງທ່ານ, ທ່ານສາມາດຍື່ນຄຳຮ້ອງຮຽນໄດ້. ເພື່ອສຶກສາເພີ່ມຕື່ມກ່ຽວກັບຄຳຮ້ອງຮຽນ, ໃຫ້ໄປອ່ານຫົວຂໍ້ "ການຮ້ອງທຸກ" ໃນພາກທີ 6 ຂອງປຶ້ມຄູ່ມືນີ້.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການດູແລທີ່ລະອຽດອ່ອນ

ການບໍລິການທີ່ໄດ້ຮັບການຍິນຍອມໂດຍເດັກນ້ອຍ

ຖ້າທ່ານມີອາຍຸຕ່ຳກວ່າ 18 ປີ, ທ່ານສາມາດເຂົ້າຮັບການບໍລິການບາງຢ່າງໄດ້ ໂດຍບໍ່ມີການອະນຸຍາດຈາກພໍ່ແມ່ ຫຼື ຜູ້ປົກຄອງ. ການບໍລິການເຫຼົ່ານີ້ ເອີ້ນວ່າ: ການບໍລິການທີ່ເດັກສາມາດໃຫ້ການຍິນຍອມໄດ້.

ທ່ານອາດຈະໄດ້ຮັບການບໍລິການຕໍ່ໄປນີ້ ໂດຍບໍ່ຕ້ອງຂໍການອະນຸຍາດຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງທ່ານ:

- ການບໍລິການສຳລັບການລ່ວງລະເມີດທາງເພດ, ລວມທັງການດູແລສຸຂະພາບຈິດຂອງຄົນເຈັບນອກ
- ການຖືພາ
- ການວາງແຜນຄອບຄົວ ແລະ ການຄຸມກຳເນີດ
- ການບໍລິການລຸລູກ

ຖ້າທ່ານມີອາຍຸ 12 ປີຂຶ້ນໄປ, ທ່ານອາດຈະໄດ້ຮັບການບໍລິການເຫຼົ່ານີ້ໂດຍບໍ່ຕ້ອງຂໍການອະນຸຍາດຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງທ່ານ:

- ການດູແລສຸຂະພາບຈິດສຳລັບຄົນເຈັບນອກ ສຳລັບ:
  - ການຄຸກຄາມທາງເພດ
  - ການຮ່ວມເພດລະຫວ່າງບຸກຄົນຮ່ວມສາຍເລືອດ
  - ການຄຸກຄາມທາງດ້ານຮ່າງກາຍ
  - ການລ່ວງລະເມີດເດັກ
  - ເມື່ອທ່ານມີຄວາມຄິດທີ່ຈະທຳຮ້າຍຕົນເອງ ຫຼື ຄົນອື່ນ
- ການປ້ອງກັນ, ການກວດ ແລະ ການປິ່ນປົວ HIV/AIDS
- ການປ້ອງກັນ, ການກວດ ແລະ ການປິ່ນປົວຮັກສາກ່ຽວກັບການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ
- ການປິ່ນປົວຄວາມຜິດປົກກະຕິຈາກການໃຊ້ສານເສບຕິດ
  - ເພື່ອສຶກສາເພີ່ມຕື່ມ, ໃຫ້ໄປອ່ານ "ການບໍລິການປິ່ນປົວຄວາມຜິດປົກກະຕິຈາກການໃຊ້ສານເສບຕິດ" ໃນພາກທີ 4 ຂອງປຶ້ມຄູ່ມືນີ້.

ສຳລັບການກວດການຖືພາ, ການບໍລິການວາງແຜນຄອບຄົວ, ບໍລິການຄຸມກຳເນີດ ຫຼື ການບໍລິການສຳລັບການຕິດເຊື້ອ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ພະຍາດຕິດຕໍ່ທາງເພດສໍາພັນ, ທ່ານໝໍ ຫຼື ຄລີນິກບໍ່ຈໍາເປັນ ຕ້ອງເປັນສ່ວນໜຶ່ງຂອງເຄືອຂ່າຍ Anthem. ທ່ານສາມາດ ເລືອກຜູ້ໃຫ້ບໍລິການ Medi-Cal ໃດກໍໄດ້ ແລະ ໄປຫາພວກເຂົ້າ ສໍາລັບບໍລິການເຫຼົ່ານີ້ໄດ້ໂດຍບໍ່ຕ້ອງມີການນໍາສົ່ງ ຫຼື ການ ອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ).

ສໍາລັບການບໍລິການທີ່ໄດ້ຮັບການຍິນຍອມໂດຍເດັກນ້ອຍທີ່ບໍ່ ແມ່ນການບໍລິການດ້ານສຸຂະພາບຈິດແບບພິເສດ, ທ່ານສາມາດ ໄປຫາຜູ້ໃຫ້ບໍລິການໃນເຄືອຂ່າຍໂດຍບໍ່ຕ້ອງມີການສົ່ງຕໍ່ ແລະ ໂດຍບໍ່ຕ້ອງຂໍການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ). PCP ຂອງທ່ານບໍ່ຈໍາເປັນຕ້ອງສົ່ງຕໍ່ທ່ານ ແລະ ທ່ານບໍ່ຈໍາເປັນ ຕ້ອງໄດ້ຮັບການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ຈາກ Anthem ເພື່ອຮັບການບໍລິການທີ່ເດັກສາມາດໃຫ້ການຍິນ ຍອມໄດ້ ທີ່ໄດ້ຮັບການຄຸ້ມຄອງ.

ການບໍລິການທີ່ເດັກສາມາດໃຫ້ການຍິນຍອມໄດ້ ທີ່ເປັນການ ບໍລິການສຸຂະພາບຈິດພິເສດ ແມ່ນບໍ່ໄດ້ຮັບການຄຸ້ມຄອງ. ການ ບໍລິການສຸຂະພາບຈິດແບບພິເສດ ແມ່ນໄດ້ຮັບການຄຸ້ມຄອງໂດຍ ແຜນສຸຂະພາບຈິດຂອງຄາວຕີ້ທີ່ທ່ານອາໄສຢູ່.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ເດັກສາມາດລົມກັບພະນັກງານເປັນການສ່ວນຕົວກ່ຽວກັບຂໍ້ກັງວົນດ້ານສຸຂະພາບຂອງຕົນໄດ້ ໂດຍການໂທຫາ ສາຍພະຍາບານ 24/7 ທີ່ເບີ **1-800-224-0336 (TTY 711)**.

Anthem ຈະບໍ່ສົ່ງຂໍ້ມູນກ່ຽວກັບການໄດ້ຮັບການບໍລິການທີ່ລະອຽດອ່ອນໃຫ້ແກ່ພໍ່ແມ່ ຫຼື ຜູ້ປົກຄອງ. ເພື່ອສຶກສາເພີ່ມຕື່ມກ່ຽວກັບ ວິທີການຮ້ອງຂໍໃຫ້ມີການສື່ສານທີ່ກ່ຽວຂ້ອງກັບການບໍລິການທີ່ລະອຽດອ່ອນ ແບບປິດລັບ, ກະລຸນາອ່ານຫົວຂໍ້ "ແຈ້ງການກ່ຽວກັບ ແນວທາງການປະຕິບັດກ່ຽວກັບຄວາມເປັນສ່ວນຕົວ" ໃນພາກທີ 7 ຂອງປຶ້ມຄູ່ມືນີ້.

ການບໍລິການດູແລທີ່ລະອຽດອ່ອນຂອງຜູ້ໃຫຍ່

ໃນຖານະເປັນຜູ້ໃຫຍ່ທີ່ມີອາຍຸ 18 ປີຂຶ້ນໄປ, ທ່ານອາດຈະບໍ່ຕ້ອງການໄປຫາ PCP ຂອງທ່ານ ເພື່ອຮັບການດູແລທີ່ລະອຽດອ່ອນ ຫຼື ເປັນສ່ວນຕົວໃດໜຶ່ງ. ໃນກໍລະນີນີ້, ທ່ານສາມາດເລືອກທ່ານໝໍ ຫຼື ຄລີນິກໃດກໍໄດ້ ສຳລັບການດູແລປະເພດຕໍ່ໄປນີ້:

- ການວາງແຜນຄອບຄົວ ແລະ ການຄຸມກຳເນີດ ລວມທັງການເຮັດໝັນສຳລັບຜູ້ໃຫຍ່ 21 ປີຂຶ້ນໄປ
- ການກວດ ແລະ ການໃຫ້ຄຳປຶກສາກ່ຽວກັບການຖືພາ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ການປ້ອງກັນ ແລະ ການກວດ HIV/AIDS
- ການປ້ອງກັນ, ການກວດ ແລະ ການປິ່ນປົວຮັກສາກ່ຽວກັບການຕິດເຊື້ອພະຍາດຕິດຕໍ່ທາງເພດສໍາພັນ
- ການດູແລການຄຸກຄາມທາງເພດ
- ການບໍລິການລຸລູກສໍາລັບຄົນເຈັບນອກ

ສໍາລັບການດູແລທີ່ລະອຽດອ່ອນ, ທ່ານໝໍ ຫຼື ຄລີນິກທີ່ຈະໄປຫາ ບໍ່ຈໍາເປັນຕ້ອງຢູ່ໃນເຄືອຂ່າຍ Anthem ກໍໄດ້.ທ່ານສາມາດເລືອກ ໄປຫາຜູ້ໃຫ້ບໍລິການຂອງ Medi-Cal ໃດກໍໄດ້ ເພື່ອເຂົ້າຮັບການ ບໍລິການເຫຼົ່ານີ້ ໂດຍບໍ່ຈໍາເປັນຕ້ອງມີການນໍາສົ່ງຕໍ່ ຫຼື ການ ອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ຈາກ Anthem. ຖ້າທ່ານເຂົ້າຮັບການດູແລທີ່ບໍ່ໄດ້ລະບຸໄວ້ໃນຄູ່ມືຫົວນີ້ວ່າເປັນການ ດູແລທີ່ລະອຽດອ່ອນ ຈາກຜູ້ໃຫ້ບໍລິການນອກເຄືອຂ່າຍ, ທ່ານອາດ ຈະຕ້ອງໄດ້ຈ່າຍຄ່າສໍາລັບການດູແລນັ້ນ.

ຖ້າຕ້ອງການຄວາມຊ່ວຍເຫຼືອໃນການຊອກຫາທ່ານໝໍ ຫຼື ຄລີນິກ ທີ່ໃຫ້ການບໍລິການ ເຫຼົ່ານີ້ ຫຼື ຕ້ອງການຄວາມຊ່ວຍເຫຼືອໃນການໄປ ຮັບການບໍລິການ ເຫຼົ່ານີ້ (ລວມທັງການ ເດີນທາງ), ທ່ານສາມາດ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມ ເວລາປາຊີຟິກ. ການໂທ ແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ໂທຫາເບີ **1-800-407-4627 (TTY 711)**. ຫຼື ໂທໄປຫາ ສາຍ ພະຍາບານ 24/7 ທີ່ເບີ **1-800-224-0336 (TTY 711)**.

Anthem ຈະບໍ່ເປີດເຜີຍຂໍ້ມູນທາງການແພດທີ່ກ່ຽວຂ້ອງກັບການ ບໍລິການທີ່ລະອຽດອ່ອນໃຫ້ແກ່ສະມາຊິກຄົນອື່ນ ໂດຍບໍ່ໄດ້ຮັບການ ອະນຸຍາດເປັນລາຍລັກອັກສອນຈາກທ່ານ, ຜູ້ເຊິ່ງເປັນສະມາຊິກທີ່ ໄດ້ຮັບການດູແລດັ່ງກ່າວ. ເພື່ອສຶກສາເພີ່ມຕື່ມກ່ຽວກັບ ວິທີການ ຮ້ອງຂໍໃຫ້ມີການສື່ສານທີ່ກ່ຽວຂ້ອງກັບການບໍລິການທີ່ລະອຽດອ່ອນ ແບບປິດລັບ, ກະລຸນາອ່ານຫົວຂໍ້ "ແຈ້ງການກ່ຽວກັບ ແນວທາງ ການປະຕິບັດກ່ຽວກັບຄວາມ ເປັນສ່ວນຕົວ" ໃນພາກທີ 7.

ການຄັດຄ້ານດ້ານສິນທຳ

ຜູ້ໃຫ້ບໍລິການບາງຄົນມີການຄັດຄ້ານດ້ານສິນທຳຕໍ່ການບໍລິການ ທີ່ໄດ້ຮັບການຄຸ້ມຄອງບາງຢ່າງ. ພວກເຂົາມີສິດ**ບໍ່**ໃຫ້ການບໍລິການ ທີ່ໄດ້ຮັບການຄຸ້ມຄອງບາງຢ່າງ ຖ້າພວກເຂົາບໍ່ເຫັນດີຍ້ອນຫຼັກ ສີລະທຳຕໍ່ການບໍລິການດັ່ງກ່າວ. ຖ້າຜູ້ໃຫ້ບໍລິການຂອງທ່ານມີ ການຄັດຄ້ານດ້ານສິນທຳ, ພວກເຂົາຈະຊ່ວຍທ່ານຊອກຫາຜູ້ໃຫ້ ບໍລິການອື່ນ ສຳລັບບໍລິການທີ່ຈຳເປັນ. ນອກຈາກນັ້ນ Anthem

---

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ກໍຍັງສາມາດຈະເຮັດວຽກກັບທ່ານ ເພື່ອຂອກາຫາຜູ້ໃຫ້ບໍລິການອີກ ດ້ວຍ.

ໂຮງໝໍ ແລະ ຜູ້ໃຫ້ບໍລິການບາງລາຍ ຈະບໍ່ໃຫ້ໜຶ່ງໃນການ ບໍລິການເຫຼົ່ານີ້ ເຖິງແມ່ນວ່າຈະໄດ້ຮັບການຄຸ້ມຄອງພາຍໃຕ້ Medi-Cal ກໍຕາມ:

- ການວາງແຜນຄອບຄົວ
- ການບໍລິການຄຸມກຳເນີດ, ລວມທັງການຄຸມກຳເນີດ ສຸກເສີນ
- ການເຮັດໝັນ, ລວມທັງການເຮັດໝັນທ່ສ່ຽງໄຂ່ໃນເວລາ ຄອດລູກ ແລະ ການເກີດລູກ
- ການປິ່ນປົວການມີລູກຍາກ
- ການລຸລູກ

ເພື່ອຮັບປະກັນໃຫ້ທ່ານເລືອກຜູ້ໃຫ້ບໍລິການທີ່ສາມາດໃຫ້ການດູ ແລທີ່ທ່ານແລະ ຄອບຄົວຂອງທ່ານຕ້ອງການໄດ້, ໃຫ້ໂທຫາທ່ານ ໝໍ, ກຸ່ມແພດ, ສະມາຄົມວິຊາຊີບອິດສະຫຼະ ຫຼື ຄລີນິກທີ່ທ່ານ ຕ້ອງການ. ຫຼື ໂທຫາ Anthem ທີ່ເບີ **1-800-407-4627**

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

(TTY 711). ຖາມວ່າຜູ້ໃຫ້ບໍລິການດັ່ງກ່າວ ຈະສາມາດໃຫ້ການບໍລິການທີ່ທ່ານຕ້ອງການໄດ້ ຫຼື ບໍ່.

ບໍລິການເຫຼົ່ານີ້ແມ່ນມີພ້ອມສະໜອງໃຫ້ແກ່ທ່ານ. Anthem ຈະກວດໃຫ້ແນ່ໃຈວ່າທ່ານ ຫຼື ສະມາຊິກໃນຄອບຄົວຂອງທ່ານ ສາມາດນຳໃຊ້ຜູ້ໃຫ້ບໍລິການຕ່າງໆ (ທ່ານໝໍ, ໂຮງໝໍ ຄລີນິກ) ທີ່ຈະໃຫ້ການດູແລທີ່ທ່ານຕ້ອງການໄດ້. ຖ້າທ່ານມີຄຳຖາມ ຫຼື ຕ້ອງການຄວາມຊ່ວຍເຫຼືອໃນການຊອກຫາຜູ້ໃຫ້ບໍລິການ, ໂທຫາ Anthem ທີ່ເບີ **1-800-407-4627 (TTY 711)**.

ການດູແລຮີບດ່ວນ

ການດູແລແບບຮີບດ່ວນ**ບໍ່**ແມ່ນພາວະສຸກເສີນ ຫຼື ເປັນອັນຕະລາຍເຖິງຊີວິດໄດ້. ມັນແມ່ນສຳລັບການບໍລິການທີ່ທ່ານຕ້ອງການເພື່ອປ້ອງກັນຄວາມເສຍຫາຍຮ້າຍແຮງຕໍ່ກັບສຸຂະພາບຂອງທ່ານຈາກຄວາມເຈັບປ່ວຍ, ການບາດເຈັບ ຫຼື ອາການແຊກຊ້ອນກະທັນຫັນຂອງພະຍາດທີ່ທ່ານເປັນຢູ່ກ່ອນແລ້ວ. ການນັດໝາຍຮັບການດູແລຮີບດ່ວນສ່ວນໃຫຍ່ ບໍ່ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

(ການຂໍອະນຸຍາດລ່ວງໜ້າ). ຖ້າທ່ານຮ້ອງຂໍການນັດໝາຍເຂົ້າຮັບການດູແລຮີບດ່ວນ, ທ່ານຈະໄດ້ຮັບການນັດໝາຍພາຍໃນ 48 ຊົ່ວໂມງ. ຖ້າການບໍລິການດູແລຮີບດ່ວນທີ່ທ່ານຕ້ອງການ ຕ້ອງໄດ້ຂໍການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ), ທ່ານຈະໄດ້ຮັບການນັດໝາຍພາຍໃນ 96 ຊົ່ວໂມງ ນັບຈາກເວລາທີ່ທ່ານໄດ້ຮ້ອງຂໍ.

ສຳລັບການດູແລຮີບດ່ວນ, ໂທຫາ PCP ຂອງທ່ານ. ຖ້າທ່ານບໍ່ສາມາດຕິດຕໍ່ PCP ຂອງທ່ານໄດ້, ໃຫ້ໂທຫາ **1-800-407-4627 (TTY 711)**. ຫຼື ທ່ານສາມາດໂທໄປຫາ ສາຍພະຍາບານ 24/7 ໄດ້ທີ່ເບີ **1-800-224-0336 (TTY 711)**, ເພື່ອສອບຖາມກ່ຽວກັບລະດັບການດູແລທີ່ດີທີ່ສຸດສຳລັບທ່ານ.

ຖ້າທ່ານຕ້ອງການການດູແລຮີບດ່ວນຢູ່ນອກພື້ນທີ່ບໍລິການ, ໃຫ້ໄປຫາສະຖານດູແລຮີບດ່ວນທີ່ຢູ່ໃກ້ທີ່ສຸດ.

ສະພາວະທີ່ຕ້ອງການການດູແລຮີບດ່ວນ ອາດຈະໄດ້ແກ່:

- ເປັນຫວັດ
- ເຈັບຄໍ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ໄຂ້
- ເຈັບຫູ
- ກ້າມຊີ້ນພິກ
- ການບໍລິການສຳລັບມານດາ

ທ່ານຕ້ອງໄດ້ຮັບການບໍລິການດູແລແບບຮີບດ່ວນຈາກຜູ້ໃຫ້ບໍລິການໃນເຄືອຂ່າຍ ເມື່ອທ່ານຢູ່ໃນພື້ນທີ່ບໍລິການຂອງ Anthem. ທ່ານບໍ່ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ສຳລັບການດູແລຮີບດ່ວນຈາກຜູ້ໃຫ້ບໍລິການໃນເຄືອຂ່າຍພາຍໃນພື້ນທີ່ບໍລິການຂອງ Anthem. ຖ້າທ່ານຢູ່ນອກພື້ນທີ່ບໍລິການຂອງ Anthem, ແຕ່ຢູ່ພາຍໃນສະຫະລັດ, ທ່ານບໍ່ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ເພື່ອເຂົ້າຮັບການດູແລຮີບດ່ວນ.

ໄປຫາສະຖານທີ່ດູແລຮີບດ່ວນທີ່ຢູ່ໃກ້ທີ່ສຸດ. Medi-Cal ບໍ່ໄດ້ຄຸ້ມຄອງການບໍລິການການດູແລຮີບດ່ວນຢູ່ນອກສະຫະລັດ. ຖ້າທ່ານເດີນທາງອອກນອກສະຫະລັດ ແລະ ຕ້ອງການການດູແລຮີບດ່ວນ, ພວກເຮົາຈະບໍ່ຄຸ້ມຄອງການດູແລຂອງທ່ານ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານຕ້ອງການການດູແລສຸຂະພາບຈິດຮີບດ່ວນ, ໃຫ້ໂທຫາ ແຜນປະກັນສຸຂະພາບຈິດຂອງຄາວຕີ້ຂອງທ່ານ ຫຼື ສູນດູແລ ລູກຄ້າ ທີ່ເບີ **1-800-407-4627 (TTY 711)**. ໂທຫາແຜນ ປະກັນສຸຂະພາບຈິດຂອງຄາວຕີ້ຂອງທ່ານ ຫຼື ອົງການ ສຸຂະພາບພຶດຕິກຳຂອງ Anthem ໃນເວລາໃດກໍໄດ້ ຕະຫຼອດ 24 ຊົ່ວໂມງຕໍ່ວັນ, 7 ວັນຕໍ່ອາທິດ. ເພື່ອຊອກຫາເບີໂທຟຣີຂອງ ທັງໝົດທຸກຄາວຕີ້ທາງອອນລາຍ, ໃຫ້ໄປທີ່: http://www.dhcs.ca.gov/individuals/Pages/MHPContactList.aspx.

ຖ້າທ່ານໄດ້ຮັບຢາຈາກການເຂົ້າພົບຮັບການດູແລຮີບດ່ວນຂອງ ທ່ານ, Anthem ຈະຄຸ້ມຄອງຢານັ້ນ ໃນຖານະເປັນສ່ວນໜຶ່ງຂອງ ການເຂົ້າພົບ ແພດທີ່ໄດ້ຮັບການຄຸ້ມຄອງຂອງທ່ານ. ຖ້າຜູ້ໃຫ້ ບໍລິການດູແລຮີບດ່ວນຂອງທ່ານໃຫ້ໃບສັ່ງຢາແກ່ທ່ານໄປຊື້ຢູ່ຮ້ານ ຂາຍຢາ, Medi-Cal Rx ຈະເປັນຜູ້ຕັດສິນໃຈວ່າ ຢານັ້ນຈະໄດ້ຮັບ ການຄຸ້ມຄອງ ຫຼື ບໍ່. ເພື່ອສຶກສາເພີ່ມຕື່ມກ່ຽວກັບ Medi-Cal Rx, ໃຫ້ໄປອ່ານຫົວຂໍ້ "ຢາຕາມໃບສັ່ງ ແພດທີ່ໄດ້ຮັບການຄຸ້ມຄອງໂດຍ Medi-Cal Rx" ໃນຫົວຂໍ້ "ບັນດາໂຄງການ ແລະ ການ ບໍລິການອື່ນໆຂອງ Medi-Cal" ໃນພາກທີ 4.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມ ເວລາປາຊີຟິກ. ການໂທ ແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ການດູແລສຸກເສີນ

ສຳລັບການດູແລສຸກເສີນ, ໃຫ້ໂທຫາ **911** ຫຼື ໄປຫາຫ້ອງສຸກເສີນ (ER) ທີ່ຢູ່ໃກ້ທີ່ສຸດ. ສຳລັບການດູແລສຸກເສີນ, ທ່ານ**ບໍ່**ຈຳເປັນຕ້ອງຂໍການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ຈາກ Anthem.

ທ່ານມີສິດທີ່ຈະໃຊ້ບໍລິການໂຮງໝໍ ຫຼື ສະຖານການປິ່ນປົວອື່ນໆ ໃດກໍໄດ້ ສຳລັບການດູແລສຸກເສີນ ພາຍໃນສະຫະລັດ, ລວມທັງເຂດແຄ້ວນຕ່າງໆຂອງສະຫະລັດ.

ຖ້າທ່ານຢູ່ນອກສະຫະລັດ, ມີພຽງແຕ່ການດູແລສຸກເສີນທີ່ຕ້ອງໄດ້ເຂົ້ານອນໂຮງໝໍໃນປະເທດການາດາ ແລະ ເມັກຊິກໂກເທົ່ານັ້ນ ຈຶ່ງຈະໄດ້ຮັບການຄຸ້ມຄອງ. ການດູແລສຸກເສີນ ແລະ ການດູແລອື່ນໆ ໃນປະເທດອື່ນແມ່ນບໍ່ໄດ້ຮັບການຄຸ້ມຄອງ.

ການດູແລສຸກເສີນ ແມ່ນສຳລັບສະພາວະທາງການແພດທີ່ເປັນອັນຕະລາຍເຖິງຊີວິດໄດ້. ການດູແລນີ້ມີໄວ້ສຳລັບຄວາມເຈັບປ່ວຍ ຫຼື ການບາດເຈັບ ທີ່ບຸກຄົນທົ່ວໄປທີ່ມີສະຕິສົມບູນ (ມີເຫດຜົນ)

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

(ບໍ່ແມ່ນຜູ້ຊ່ຽວຊານດ້ານການດູແລສຸຂະພາບ) ທີ່ມີຄວາມຮູ້ປານກາງດ້ານສຸຂະພາບ ແລະ ຢາ ສາມາດຄາດການໄດ້ວ່າ ຖ້າທ່ານບໍ່ໄດ້ຮັບການດູແລໃນທັນທີ, ອາດຈະເຮັດໃຫ້ສຸຂະພາບຂອງທ່ານ (ຫຼື ສຸຂະພາບຂອງເດັກທີ່ຍັງບໍ່ທັນເກີດ) ຕົກຢູ່ໃນອັນຕະລາຍທີ່ຮ້າຍແຮງ. ນີ້ລວມທັງການມີຄວາມສ່ຽງທີ່ຮ້າຍແຮງຕໍ່ການເຮັດວຽກຂອງຮ່າງກາຍ, ອະໄວຍະວະໃນຮ່າງກາຍ ຫຼື ພາກສ່ວນຕ່າງໆຂອງຮ່າງກາຍຂອງທ່ານ. ຕົວຢ່າງອາດຈະລວມທັງ, ແຕ່ບໍ່ສະເພາະພຽງແຕ່:

- ການເກີດລູກ
- ກະດູກແຕກຫັກ
- ການເຈັບປວດຮຸນແຮງ
- ເຈັບໜ້າເອິກ
- ຫາຍໃຈຍາກ
- ຖືກໄໝ້ຢ່າງຮ້າຍແຮງ
- ໃຊ້ຢາເກີນປະລິມານ
- ເປັນລົມໝົດສະຕິ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ເລືອດອອກຮຸນແຮງ
- ພາວະສຸກເສີນທາງຈິດເຊັ່ນ: ຊຶມເສົ້າຮຸນແຮງ ຫຼື ມີຄວາມຄິດຂ້າໂຕຕາຍ (ອາດຈະໄດ້ຮັບການຄຸ້ມຄອງ ຈາກແຜນສຸຂະພາບຈິດຂອງຄາວຕີ້)

ຢ່າໄປຫ້ອງ ER ສຳລັບການດູແລຕາມປົກກະຕິ ຫຼື ການດູແລທີ່ບໍ່ມີຄວາມຕ້ອງການການດູແລໃນທັນທີ. ທ່ານຄວນເຂົ້າຮັບການດູແລຕາມປົກກະຕິຈາກ PCP ຂອງທ່ານ, ເຊິ່ງເປັນຜູ້ທີ່ຮູ້ຈັກທ່ານດີທີ່ສຸດ. ຖ້າທ່ານບໍ່ແນ່ໃຈວ່າ ພາວະທາງການແພດຂອງທ່ານແມ່ນເຫດສຸກເສີນ ຫຼື ບໍ່, ໃຫ້ໂທຫາ PCP ຂອງທ່ານ. ນອກຈາກນັ້ນ ທ່ານກໍຍັງສາມາດໂທຫາ ສາຍພະຍາບານ 24/7 ໄດ້ອີກດ້ວຍ ທີ່ເບີ **1-800-224-0336 (TTY 711)**.

ຖ້າທ່ານຈຳເປັນຕ້ອງມີການດູແລສຸກເສີນທີ່ຢູ່ໄກຈາກເຮືອນ, ໃຫ້ໄປຫາຫ້ອງສຸກເສີນ (ER), ເຖິງແມ່ນວ່າມັນບໍ່ຢູ່ໃນເຄືອຂ່າຍ Anthem ກໍຕາມ. ຖ້າທ່ານໄປທີ່ ER, ກະລຸນາຂໍໃຫ້ເຂົາເຈົ້າໂທຫາ Anthem. ທ່ານ ຫຼື ໂຮງໝໍທີ່ຮັບທ່ານເຂົ້າປິ່ນປົວຄວນໂທຫາ Anthem ພາຍໃນ 24 ຊົ່ວໂມງ ຫຼັງຈາກທີ່ທ່ານໄດ້ຮັບການດູແລ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ສຸກເສີນ. ຖ້າທ່ານກຳລັງເດີນທາງຢູ່ນອກສະຫະລັດ, ນອກຈາກ ການາດາ ຫຼື ເມັກຊິກໂກ ແລະ ຕ້ອງການການດູແລສຸກເສີນ, Anthem ຈະ**ບໍ່**ຄຸ້ມຄອງການດູແລຂອງທ່ານ.

ຖ້າທ່ານຕ້ອງການການຂົນສົ່ງສຸກເສີນ, ໃຫ້ໂທຫາ **911**. ທ່ານ ບໍ່ຈຳເປັນຕ້ອງຂໍ PCP ຂອງທ່ານ ຫຼື Anthem ກ່ອນທີ່ທ່ານ ຈະໄປຫ້ອງ ER.

ຖ້າທ່ານຕ້ອງການການດູແລຢູ່ໂຮງໝໍນອກເຄືອຂ່າຍ ຫຼັງຈາກ ເຫດສຸກເສີນຂອງທ່ານ (ການດູແລ ຫຼັງຈາກການຊົງຕົວແລ້ວ), ໂຮງໝໍຈະຕ້ອງໂທຫາ Anthem.

ຂໍ້ຄວນຈື່: ຢ່າໂທຫາ **911** ຖ້າມັນບໍ່ແມ່ນເຫດສຸກເສີນ. ເຂົ້າຮັບ ການດູແລສຸກເສີນສຳລັບເຫດສຸກເສີນເທົ່ານັ້ນ, ບໍ່ແມ່ນສຳລັບ ການດູແລຕາມປົກກະຕິ ຫຼື ການເຈັບປ່ວຍເລັກນ້ອຍ ເຊັ່ນ: ເປັນຫວັດ ຫຼື ເຈັບຄໍ. ຖ້າມັນແມ່ນເຫດສຸກເສີນ, ໃຫ້ໂທຫາ **911** ຫຼື ໄປຫາຫ້ອງສຸກເສີນທີ່ຢູ່ໃກ້ທີ່ສຸດ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ສາຍພະຍາບານ 24/7 ຂອງ Anthem ຈະໃຫ້ຂໍ້ມູນ ແລະ ຄຳແນະນຳທາງການແພດຟຣີແກ່ທ່ານ ຕະຫຼອດ 24 ຊົ່ວໂມງ, ທຸກວັນຕະຫຼອດປີ. ໂທຫາເບີ 1-800-224-0336 (TTY 711) 24 ຊົ່ວໂມງຕໍ່ມື້, 7 ມື້ຕໍ່ອາທິດ.

ສາຍພະຍາບານ 24/7

ສາຍພະຍາບານ 24/7 ຂອງ Anthem ສາມາດໃຫ້ຂໍ້ມູນ ແລະ ຄຳແນະນຳທາງການແພດຟຣີແກ່ທ່ານ ຕະຫຼອດ 24 ຊົ່ວໂມງ, ທຸກວັນຕະຫຼອດປີ. ໂທຫາເບີ **1-800-224-0336 (TTY 711)** ເພື່ອ:

- ປຶກສາກັບພະຍາບານທີ່ຈະຕອບຄຳຖາມທາງການແພດ, ໃຫ້ຄຳແນະນຳສຳລັບການດູແລ ແລະ ຊ່ວຍທ່ານໃນການຕັດສິນໃຈວ່າຄວນຈະໄປຫາຜູ້ໃຫ້ບໍລິການໃນທັນທີ ຫຼື ບໍ່
- ຂໍຄວາມຊ່ວຍເຫຼືອກ່ຽວກັບສະພາວະທາງການແພດຕ່າງໆ ເຊັ່ນ: ພະຍາດເບົາຫວານ ຫຼື ພະຍາດຫອບຫືດ, ລວມທັງຄຳ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ແນະນຳກ່ຽວກັບປະເພດຜູ້ໃຫ້ບໍລິການ ທີ່ເໝາະສົມກັບ ສະພາວະຂອງທ່ານ

ສາຍ ສາຍພະຍາບານ 24/7 **ບໍ່ສາມາດ**ຊ່ວຍໄດ້ໃນເລື່ອງການ ນັດໝາຍກັບຄລີນິກ ຫຼື ການຕື່ມຢາ. ໂທຫາຫ້ອງການຂອງຜູ້ໃຫ້ ບໍລິການຂອງທ່ານ ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອກ່ຽວ ກັບສິ່ງເຫຼົ່ານີ້.

ຄຳສັ່ງເສຍໄວ້ລ່ວງໜ້າ

ຄຳສັ່ງເສຍກ່ຽວກັບສຸຂະພາບໄວ້ລ່ວງໜ້າ ແມ່ນແບບຟອມທີ່ມີ ຜົນຕາມກົດໝາຍ. ທ່ານສາມາດລະບຸລົງໃນແບບຟອມກ່ຽວກັບ ການດູແລສຸຂະພາບທີ່ທ່ານຕ້ອງການໃນກໍລະນີທີ່ທ່ານບໍ່ ສາມາດເວົ້າໄດ້ ຫຼື ຕັດສິນໃຈໄດ້ໃນພາຍຫຼັງ. ນອກຈາກນັ້ນ, ທ່ານກໍຍັງສາມາດລະບຸການດູແລໃດທີທ່ານ**ບໍ່**ຕ້ອງການໄດ້ອີກ ດ້ວຍ. ທ່ານສາມາດກຳນົດຊື່ບຸກຄົນໃດໜຶ່ງ ເຊັ່ນ: ຄູ່ສົມລົດ ໃຫ້ ເປັນຜູ້ດຳເນີນການຕັດສິນໃຈສຳລັບການດູແລສຸຂະພາບຂອງ ທ່ານ ຖ້າທ່ານບໍ່ສາມາດເຮັດໄດ້ແລ້ວ.

ທ່ານສາມາດຂໍແບບຟອມຄຳສັ່ງເສຍໄວ້ລ່ວງໜ້າໄດ້ຢູ່ຮ້ານຂາຍ ຢາ, ໂຮງໝໍ, ຫ້ອງການກົດໝາຍ ແລະ ຫ້ອງການທ່ານໝໍ. ທ່ານອາດຈະຈຳເປັນຕ້ອງໄດ້ຈ່າຍຄ່າແບບຟອມນີ້. ນອກຈາກ ນັ້ນ ທ່ານສາມາດຊອກຫາ ແລະ ດາວໂຫຼດແບບຟອມໄດ້ໂດຍບໍ່ ເສຍຄ່າທາງອອນລາຍໄດ້ອີກດ້ວຍ. ທ່ານສາມາດຂໍໃຫ້ຄອບຄົວ ຂອງທ່ານ, PCP ຫຼື ບາງຄົນທີ່ທ່ານໄວ້ໃຈມາຊ່ວຍທ່ານຕື່ມຂໍມູນ ແບບຟອມນີ້ໄດ້.

ທ່ານມີສິດຂໍໃຫ້ເອົາຄຳສັ່ງເສຍລ່ວງໜ້າຂອງທ່ານໃສ່ໄວ້ໃນ ບັນທຶກທາງການແພດຂອງທ່ານໄດ້. ທ່ານມີສິດປ່ຽນ ຫຼື ຍົກເລີກ ຄຳສັ່ງເສຍໄວ້ລ່ວງໜ້າຂອງທ່ານໄດ້ທຸກເວລາ.

ທ່ານມີສິດຮຽນຮູ້ກ່ຽວກັບການປ່ຽນແປງຕໍ່ກັບກົດໝາຍວ່າດ້ວຍ ຄຳສັ່ງເສຍໄວ້ລ່ວງໜ້າ. Anthem ຈະແຈ້ງບອກທ່ານກ່ຽວກັບ ການປ່ຽນແປງຕໍ່ກົດໝາຍຂອງລັດ ບໍ່ເກີນ 90 ວັນ ຫຼັງຈາກມີ ການປ່ຽນແປງ.

ເພື່ອສຶກສາເພີ່ມຕື່ມ, ທ່ານສາມາດໂທຫາ Anthem ທີ່ເບີ **1-800-407-4627 (TTY 711)**.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການບໍລິຈາກອະໄວຍະວະ ແລະ ເນື້ອເຍື່ອ

ທ່ານສາມາດຊ່ວຍຊີວິດໄດ້ໂດຍການເປັນຜູ້ບໍລິຈາກອະໄວຍະວະ ຫຼື ເນື້ອເຍື່ອ. ຖ້າທ່ານມີອາຍຸລະຫວ່າງ 15 ຫາ 18 ປີ, ທ່ານສາມາດເປັນຜູ້ບໍລິຈາກໄດ້ ໂດຍມີການຍິນຍອມເຫັນດີຈາກພໍ່ແມ່ ຫຼື ຜູ້ປົກຄອງຂອງທ່ານ. ທ່ານສາມາດປ່ຽນໃຈກ່ຽວກັບການເປັນຜູ້ບໍລິຈາກອະໄວຍະວະໄດ້ທຸກເວລາ. ຖ້າທ່ານຕ້ອງການຮຽນຮູ້ເພີ່ມເຕີມກ່ຽວກັບການບໍລິຈາກອະໄວຍະວະ ຫຼື ເນື້ອເຍື່ອ, ໃຫ້ໂອ້ລົມກັບ PCP ຂອງທ່ານ. ນອກຈາກນັ້ນ, ທ່ານກໍຍັງສາມາດເຂົ້າໄປເບິ່ງເວັບໄຊຂອງ ກະຊວງສາທາລະນະສຸກ ແລະ ບໍລິການມະນຸດຂອງສະຫະລັດ ໄດ້ອີກດ້ວຍທີ່ **www.organdonor.gov**.

4. ສິດທິປະໂຫຍດ ແລະ ການບໍລິການ ຕ່າງໆ

ສິ່ງທີ່ແຜນປະກັນສຸຂະພາບຂອງທ່ານຄຸ້ມຄອງ

ພາກນີ້ອະທິບາຍເຖິງການບໍລິການໄດ້ຮັບການຄຸ້ມຄອງຂອງທ່ານໃນຖານະເປັນສະມາຊິກຂອງ Anthem. ການບໍລິການທີ່ໄດ້ຮັບການຄຸ້ມຄອງຂອງທ່ານແມ່ນບໍ່ເສຍຄ່າ ຕາບໃດທີ່ມີຄວາມຈຳເປັນທາງການແພດ ແລະ ສະໜອງໃຫ້ໂດຍຜູ້ໃຫ້ບໍລິການໃນເຄືອຂ່າຍ. ທ່ານຈະຕ້ອງຂໍການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ຈາກພວກເຮົາ ຖ້າການດູແລແມ່ນຢູ່

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ນອກເຄືອຂ່າຍ ຍົກເວັ້ນການບໍລິການທີ່ລະອຽດອ່ອນ ແລະ ການດູແລສຸກເສີນບາງຢ່າງເທົ່ານັ້ນ. ແຜນສຸຂະພາບຂອງທ່ານ ອາດຈະຄຸ້ມຄອງການບໍລິການທີ່ມີຄວາມຈຳເປັນທາງການແພດ ຈາກຜູ້ໃຫ້ບໍລິການນອກເຄືອຂ່າຍນຳ, ແຕ່ທ່ານຕ້ອງໄດ້ຂໍ Anthem ເພື່ອໃຫ້ການອະນຸມັດລ່ວງໜ້າ (ການຂໍອະນຸຍາດ ລ່ວງໜ້າ) ສຳລັບສິ່ງນີ້.

ການບໍລິການທີ່ຈຳເປັນທາງດ້ານການແພດ ແມ່ນການບໍລິການ ທີ່ສົມເຫດສົມຜົນ ແລະ ມີຄວາມຈຳເປັນເພື່ອປົກປ້ອງຊີວິດຂອງ ທ່ານ, ປ້ອງກັນທ່ານຈາກການເປັນພະຍາດຮ້າຍແຮງ ຫຼື ພິການ ຫຼື ຫຼຸດຜ່ອນຄວາມເຈັບປວດຢ່າງຮຸນແຮງຈາກພະຍາດ, ການເຈັບ ປ່ວຍ ຫຼື ການບາດເຈັບ. ສຳລັບສະມາຊິກທີ່ມີອາຍຸຕ່ຳກວ່າ 21 ປີ, ການບໍລິການຂອງ Medi-Cal ຈະປະກອບດ້ວຍການດູແລທີ່ມີ ຄວາມຈຳເປັນທາງການແພດເພື່ອຮັກສາ ຫຼື ຊ່ວຍບັນເທົາການ ເຈັບປ່ວຍ ຫຼື ພາວະທາງດ້ານຮ່າງກາຍ ຫຼື ຈິດໃຈ. ສຳລັບຂໍ້ມູນ ເພີ່ມຕື່ມກ່ຽວກັບການບໍລິການທີ່ໄດ້ຮັບການຄຸ້ມຄອງຂອງທ່ານ, ໃຫ້ໂທຫາເບີ **1-800-407-4627 (TTY 711)**.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ສະມາຊິກທີ່ອາຍຸຕ່ຳກວ່າ 21 ປີ ຈະໄດ້ຮັບສິດທິປະໂຫຍດ ແລະ ການບໍລິການ ເພີ່ມຕື່ມ. ເພື່ອຮຽນຮູ້ເພີ່ມຕື່ມ, ໃຫ້ອ່ານພາກທີ 5 ວ່າດ້ວຍ "ການດູແລ ເພື່ອຄວາມສະຫວັດດີພາບຂອງ ເດັກນ້ອຍ ແລະ ໄວໜຸ່ມ."

ຂໍ້ສະ ເໜີສິດທິປະໂຫຍດດ້ານສຸຂະພາບພື້ນຖານ ຈຳນວນໜຶ່ງ ຂອງ Anthem ແມ່ນມີຢູ່ລຸ່ມນີ້. ສິດທິປະໂຫຍດ ທີ່ມີ ເຄື່ອງໝາຍ ດາວ (*) ແມ່ນຕ້ອງມີການ ອະນຸມັດ ລ່ວງໜ້າ (ການ ອະນຸ ຍາດ ລ່ວງ ໜ້າ).

- ການຝັງເຂັ້ມ*
- ການບຳບັດ ແລະ ການບໍລິການທາງສຸຂະພາບແບບກະທັນຫັນ (ການປິ່ນປົວໄລຍະສັ້ນ) ຢູ່ເຮືອນ*
- ການສ້າງພູມຄຸ້ມກັນພະຍາດຜູ້ໃຫຍ່ (ສັກຢາ)
- ການກວດ ແລະ ການສັກຢາກັນອາການພູມແພ້
- ການບໍລິການລົດໂຮງໝໍສຳລັບກໍລະນີສຸກເສີນ
- ການບໍລິການຜູ້ຊ່ຽວຊານການວາງຢາລະງັບປະສາດ
- ການປ້ອງກັນພະຍາດຫອບຫືດ
- ໂສຕະວິທະຍາ*
- ການປິ່ນປົວສຸຂະພາບພຶດຕິກຳ*
- ການກວດສານຊີ້ບອກທາງຊີວະພາບ
- ການຟື້ນຟູຫົວໃຈ
- ການບໍລິການບຳບັດດ້ວຍການຈັດກະດູກ*
- ການບຳບັດດ້ວຍເຄມີ ແລະ ລັງສີ
- ການປະເມີນສຸຂະພາບດ້ານການຮັບຮູ້
- ການບໍລິການພະນັກງານສາທາລະນະສຸກຊຸມຊົນ
- ການບໍລິການສຳລັບຜູ້ໃຫຍ່ໃນຊຸມຊົນ*
- ການສະໜັບສະໜູນຊຸມຊົນ*

- ການບໍລິການດ້ານທັນຕະກຳ - ແບບຈຳກັດ (ດຳເນີນການໂດຍຜູ້ຊ່ຽວຊານດ້ານການແພດ/ແພດປະຈຳ (PCP) ໃນຫ້ອງການແພດ)*
- ການບໍລິການຟອກໝາກໄຂ່ຫຼັງ/ການຟອກເລືອດ
- ການບໍລິການຜູ້ຊ່ຽວຊານດູແລຄັນ
- ອຸປະກອນການແພດທີ່ໃຊ້ໄດ້ຍາວນານ (DME)*
- ການບໍລິການດູແລແບບຄູ່ກັນ
- ການເຂົ້າຫ້ອງສຸກເສີນ
- ການຈັດການການດູແລແບບຍົກລະດັບ
- ການໃຫ້ອາຫານຜ່ານສາຍຢາງທີ່ຕໍ່ເຂົ້າກັບລຳໄສ້ ແລະ ເສັ້ນເລືອດ*
- ການໄປຫາ ແລະ ການຮັບຄຳປຶກສາຈາກຫ້ອງການວາງແຜນຄອບຄົວ (ທ່ານສາມາດໄປຫາຜູ້ໃຫ້ບໍລິການນອກເຄືອຂ່າຍໄດ້)
- ການບໍລິການ ແລະ ອຸປະກອນສຳລັບການຟື້ນຟູ*
- ເຄື່ອງຊ່ວຍຟັງ
- ການດູແລສຸຂະພາບຢູ່ເຮືອນ*
- ການດູແລຜູ້ປ່ວຍໄລຍະສຸດທ້າຍ*

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ການດູແລທາງການແພດ ແລະ ການຜ່າຕັດສຳລັບຄົນເຈັບໃນ*
- ຫ້ອງແລັບ ແລະ ລັງສີວິທະຍາ*
- ການດູແລໄລຍະຍາວ*
- ການບຳບັດ ແລະ ການບໍລິການທາງສຸຂະພາບຢູ່ເຮືອນໄລຍະຍາວ*
- ການດູແລແມ່ ແລະ ເດັກເກີດໃໝ່
- ການປູກຖ່າຍອະໄວຍະວະສຳຄັນ*
- ກິດຈະກຳບຳບັດ*
- ການອຸປະກອນ/ອົງຄະທຽມ*
- ທະວານທຽມ ແລະ ອຸປະກອນໃຊ້ສຳລັບການຂັບຖ່າຍ
- ການບໍລິການໂຮງໝໍໃຫ້ຄົນເຈັບນອກ*
- ການບໍລິການສຸຂະພາບຈິດສຳລັບຄົນເຈັບນອກ
- ການຜ່າຕັດຄົນເຈັບນອກ*
- ການດູແລແບບປະຄັບປະຄອງ*
- ການໄປພົບ PCP
- ການບໍລິການແພດເດັກ
- ການຍະບຳບັດ*
- ການບໍລິການກ່ຽວກັບຕີນ*
- ການຟື້ນຟູປອດ
- ການກວດລຳດັບຈີໂນມທັງໝົດແບບວ່ອງໄວ
- ການບໍລິການ ແລະ ອຸປະກອນສຳລັບການພັກຟື້ນ*

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ການບໍລິການການ ພະຍາບານທີ່ມີຄວາມ ຊຳນິຊຳນານ*
- ການພົບຊ່ຽວຊານ ສະເພາະທາງ
- ວາຈາບຳບັດ*
- ການບໍລິການຜ່າຕັດ
- ການ ແພດທາງໄກ/ ສາທາລະນະສຸກທາງໄກ
- ການບໍລິການ ແປງ ເພດ*
- ການດູ ແລ ຮີບ ດ່ວນ
- ການບໍລິການ ດ້ານ ສາ ຍ ຕາ*
- ການບໍລິການ ສຸ ຂ ະ ພາ ບ ແ ມ່ ຍິ ງ

ຄຳນິ ຍ າ ມ ແ ລ ະ ຄ ຳ ອ ະ ທິ ບ າ ຍ ກ່ ຽ ວ ກັ ບ ກ ານ ບ ໍ ລ ິ ກ ານ ທ ີ່ ໄ ດ ້ ຮ ັ ບ ການ ຄຸ ້ ມ ຄ ອ ງ ແ ມ ່ ນ ສ າ ມ າ ດ ເ ບ ິ ່ ງ ໄ ດ ້ ໃ ນ ພ າ ກ ທ ີ 8 ວ ່ າ ດ ້ ວ ຍ “ ເ ບ ີ ໂ ທ ລ ະ ສ ັ ບ ແ ລ ະ ຄ ຳ ສ ັ ບ ສ ຳ ຄ ັ ນ ທ ີ ່ ຄ ວ ນ ຮ ູ ້ .”

ໂ ທ ຫ າ ສ ູ ນ ດ ູ ແ ລ ລ ູ ກ ຄ ້ າ ທ ີ ່ ເ ບ ີ **1-800-407-4627 (TTY 711)**. Anthem ໃ ຫ ້ ບ ໍ ລ ິ ກ ານ ວ ັ ນ ຈ ັ ນ ເ ຖ ິ ງ ວ ັ ນ ສ ຸ ກ, ແ ຕ ່ 7 ໂ ມ ງ ເ ຊ ົ້ າ ຫ າ 7 ໂ ມ ງ ແ ລ ງ ຕ າ ມ ເ ວ ລ າ ປ າ ຊ ິ ฟ ิ ก. ການ ໂ ທ ແ ມ ່ ນ ບ ໍ ່ ເ ສ ຍ ຄ ່ າ. ຫ ຼ ື ໂ ທ ຫ າ ສ າ ຍ ຖ ່ າ ຍ ທ ອ ດ ຂ ອ ງ ລ ັ ດ California ທ ີ ່ ເ ບ ີ 711. ເ ຂ ົ້ າ ເ ບ ິ ່ ງ ທ າ ງ ອ ອ ອ ນ ລ າ ຍ ທ ີ ่ **anthem.com/ca/medi-cal**.

ການບໍລິການທີ່ຈຳເປັນທາງດ້ານການແພດ ແມ່ນການບໍລິການທີ່ສົມເຫດສົມຜົນ ແລະ ມີຄວາມຈຳເປັນເພື່ອປົກປ້ອງຊີວິດຂອງທ່ານ, ປ້ອງກັນທ່ານຈາກການເປັນພະຍາດຮ້າຍແຮງ ຫຼື ພິການ ຫຼື ຫຼຸດຜ່ອນຄວາມເຈັບປວດຢ່າງຮຸນແຮງຈາກພະຍາດ, ການເຈັບປ່ວຍ ຫຼື ການບາດເຈັບ.

ການບໍລິການທີ່ຈຳເປັນທາງດ້ານການແພດລວມມີບັນດາການບໍລິການທີ່ຈຳເປັນສຳລັບການຈະເລີນເຕີບໂຕ ແລະ ການພັດທະນາທີ່ເໝາະສົມກັບອາຍຸ ຫຼື ເພື່ອບັນລຸ, ຮັກສາ ຫຼື ຟື້ນຟູຄວາມສາມາດການເຮັດວຽກຂອງຮ່າງກາຍ.

ສຳລັບສະມາຊິກທີ່ມີອາຍຸຕ່ຳກວ່າ 21 ປີ, ການບໍລິການແມ່ນມີຄວາມຈຳເປັນທາງການແພດ ຖ້າຫາກວ່າມັນຈຳເປັນເພື່ອແກ້ໄຂ ຫຼື ຮັກສາຂໍ້ບົກພ່ອງ ແລະ ຄວາມເຈັບປ່ວຍ ຫຼື ອາການທາງຮ່າງກາຍ ແລະ ຈິດໃຈພາຍໃຕ້ສິດທິປະໂຫຍດການກວດຄັດກອງ, ການບົ່ງມະຕິ ແລະ ການປິ່ນປົວແຕ່ຫົວທີ ແລະ ເປັນໄລຍະຂອງລັດຖະບານກາງ (EPSDT). ສິ່ງນີ້ລວມມີການດູແລທີ່ຈຳເປັນເພື່ອແກ້ໄຂ ຫຼື ຊ່ວຍບັນເທົາຄວາມເຈັບປ່ວຍ ຫຼື ອາການທາງຮ່າງກາຍ ຫຼື ຈິດໃຈ ຫຼື ຮັກສາອາການຂອງສະມາຊິກເພື່ອບໍ່ໃຫ້ມັນຮ້າຍແຮງຂຶ້ນ.

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ການບໍລິການທີ່ຈຳເປັນທາງການແພດບໍ່ລວມເອົາ:

- ການປິ່ນປົວທີ່ບໍ່ໄດ້ທົດສອບ ຫຼື ຍັງກຳລັງຖືກທົດສອບຢູ່
- ການບໍລິການ ຫຼື ລາຍການທີ່ບໍ່ໄດ້ຮັບການຍອມຮັບໂດຍທົ່ວໄປວ່າມີປະສິດທິພາບ
- ການບໍລິການນອກຊ່ວງເວລາປົກກະຕິ ແລະ ໄລຍະເວລາຂອງການປິ່ນປົວ ຫຼື ການບໍລິການທີ່ບໍ່ມີຂໍ້ແນະນຳທາງດ້ານຄລີນິກ
- ການບໍລິການເພື່ອຄວາມສະດວກສະບາຍຂອງຜູ້ດູແລ ຫຼື ຜູ້ໃຫ້ບໍລິການ

Anthem ຈະປະສານງານກັບໂຄງການອື່ນໆ ເພື່ອຮັບປະກັນໃຫ້ທ່ານໄດ້ຮັບບໍລິການທາງການແພດທີ່ຈຳເປັນທັງໝົດ, ເຖິງແມ່ນວ່າບໍລິການເຫຼົ່ານັ້ນຈະໄດ້ຮັບການຄຸ້ມຄອງໂດຍໂຄງການອື່ນທີ່ບໍ່ແມ່ນ **Anthem** ກໍຕາມ.

ການບໍລິການທາງການແພດທີ່ຈຳເປັນລວມມີ ການບໍລິການທີ່ໄດ້ຮັບການຄຸ້ມຄອງທີ່ສົມເຫດສົມຜົນ ແລະ ຈຳເປັນ ເພື່ອ:

- ປົກປ້ອງຊີວິດ,
- ປ້ອງກັນການເຈັບປ່ວຍຮຸນແຮງ ຫຼື ຄວາມພິການໜັກ,
- ບັນເທົາອາການເຈັບປວດຮຸນແຮງ,
- ບັນລຸການເຕີບໂຕ ແລະ ພັດທະນາການທີ່ສົມໄວ ຫຼື
- ບັນລຸ, ຮັກສາ ແລະ ການຟື້ນຟູຄວາມສາມາດໃນການເຮັດວຽກຂອງຮ່າງກາຍ

ສຳລັບສະມາຊິກທີ່ມີອາຍຸຕ່ຳກວ່າ 21 ປີ, ການບໍລິການທາງການແພດທີ່ຈຳເປັນ ລວມມີການບໍລິການຄຸ້ມຄອງທັງໝົດທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ ບວກກັບການດູແລສຸຂະພາບທີ່ຈຳເປັນອື່ນໆ, ການບໍລິການວິເຄາະມະຕິພະຍາດ, ການປິ່ນປົວ ແລະ ມາດຕະການອື່ນໆ ເພື່ອແກ້ໄຂຂໍ້ບົກຜ່ອງ ແລະ ຄວາມເຈັບປ່ວຍທາງກາຍ ແລະ ຈິດໃຈ, ຕາມທີ່ສິດທິປະໂຫຍດການກວດຄັດກອງ, ການວິນິດໄສ ແລະ ການປິ່ນປົວແຕ່ຫົວທີ ແລະ ເປັນໄລຍະຂອງລັດຖະບານກາງ (EPSDT).

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

EPSDT ໃຫ້ການບໍລິການປ້ອງກັນ, ວິເຄາະມະຕິພະຍາດ ແລະ ການປິ່ນປົວ ສຳລັບເດັກທາລົກ, ເດັກນ້ອຍ ແລະ ໄວລຸ້ນທີ່ມີລາຍໄດ້ຕ່ຳ ທີ່ມີອາຍຸຕ່ຳກວ່າ 21 ປີ. EPSDT ຄຸ້ມຄອງການບໍລິການ ຫຼາຍກວ່າສິດທິປະໂຫຍດຂອງ Medicaid ສຳລັບຜູ້ໃຫຍ່. ມັນໄດ້ຖືກອອກແບບເພື່ອຮັບປະກັນໃຫ້ເດັກນ້ອຍໄດ້ຮັບການກວດພົບ ແລະ ການດູແລແຕ່ເບື້ອງຕົ້ນ ເພື່ອປ້ອງກັນ ຫຼື ວິເຄາະມະຕິພະຍາດ ແລະ ປິ່ນປົວບັນຫາສຸຂະພາບ. ເປົ້າໝາຍຂອງ EPSDT ແມ່ນເພື່ອຮັບປະກັນໃຫ້ເດັກທຸກຄົນໄດ້ຮັບການດູແລສຸຂະພາບທີ່ເຂົາເຈົ້າຕ້ອງການ ເມື່ອເຂົາເຈົ້າມີຄວາມຕ້ອງການ – ການດູແລທີ່ຖືກຕ້ອງໃຫ້ແກ່ເດັກທີ່ຖືກຕ້ອງໃນເວລາທີ່ຖືກຕ້ອງໃນສະຖານທີ່ທີ່ຖືກຕ້ອງ.

Anthem ຈະປະສານງານກັບໂຄງການອື່ນໆ ເພື່ອຮັບປະກັນໃຫ້ທ່ານໄດ້ຮັບການບໍລິການທີ່ຈຳເປັນທາງການແພດທັງໝົດ, ເຖິງແມ່ນວ່າໂຄງການອື່ນຈະຄຸ້ມຄອງການບໍລິການເຫຼົ່ານັ້ນ ແຕ່ Anthem ບໍ່ຄຸ້ມຄອງກໍຕາມ. ໄປອ່ານຫົວຂໍ້ "ບັນດາໂຄງການ ແລະ ການບໍລິການອື່ນໆຂອງ Medi-Cal" ໃນພາກນີ້.

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ສິດທິປະໂຫຍດຂອງ Medi-Cal ທີ່ໄດ້ຮັບການຄຸ້ມຄອງຈາກ Anthem

ການບໍລິການຄົນເຈັບນອກ (ເຄື່ອນທີ່)

ການສັກຢາປ້ອງກັນພະຍາດສຳລັບຜູ້ໃຫຍ່

ທ່ານສາມາດຮັບການສັກຢາປ້ອງກັນພະຍາດ (ສັກຢາ) ສຳລັບຜູ້ໃຫຍ່ ຈາກຜູ້ໃຫ້ບໍລິການເຄືອຂ່າຍ ໂດຍບໍ່ຕ້ອງຂໍການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ). Anthem ຄຸ້ມຄອງຄ່າສັກຢາຕ່າງໆ ທີ່ໄດ້ຮັບການແນະນຳໂດຍຄະນະກຳມະການໃຫ້ຄຳປຶກສາກ່ຽວກັບແນວທາງການສ້າງພູມຄຸ້ມກັນ (ACIP) ຂອງ ສູນຄວບຄຸມ ແລະ ປ້ອງກັນພະຍາດ (CDC), ລວມທັງການສັກຢາທີ່ທ່ານຕ້ອງການເມື່ອທ່ານເດີນທາງ.

ນອກຈາກນັ້ນ, ທ່ານກໍຍັງສາມາດຮັບການບໍລິການສັກຢາປ້ອງກັນພະຍາດ (ສັກຢາ) ສຳລັບຜູ້ໃຫຍ່ບາງຢ່າງໄດ້ໃນຮ້ານຂາຍຢາຜ່ານ Medi-Cal Rx ອີກດ້ວຍ. ເພື່ອສຶກສາເພີ່ມຕື່ມກ່ຽວກັບ

Medi-Cal Rx, ໃຫ້ໄປອ່ານຫົວຂໍ້ "ບັນດາໂຄງການ ແລະ ການບໍລິການອື່ນໆຂອງ Medi-Cal" ໃນພາກນີ້.

ການດູແລພູມແພ້

Anthem ຄຸ້ມຄອງຄ່າການກວດ ແລະ ການປິ່ນປົວພູມແພ້, ລວມທັງການກຳຈັດອາການພູມແພ້, ການຫຼຸດການໄວຕໍ່ພູມແພ້ ຫຼື ການຮັກສາປິ່ນປົວດ້ວຍການສ້າງພູມຄຸ້ມກັນ.

ການບໍລິການຜູ້ຊ່ຽວຊານການວາງຢາລະງັບປະສາດ

Anthem ຄຸ້ມຄອງການບໍລິການການວາງຢາລະງັບປະສາດທີ່ມີຄວາມຈຳເປັນທາງການແພດເມື່ອທ່ານໄດ້ຮັບການດູແລຄົນເຈັບນອກ. ສິ່ງອາດຈະລວມເຖິງການໃຫ້ຢາຊາສຳລັບຂັ້ນຕອນການຮັກສາແຂ້ວ ເມື່ອສະໜອງໃຫ້ໂດຍແພດຊ່ຽວຊານຢາສະຫຼົບ, ຜູ້ທີ່ອາດຈະຕ້ອງມີການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ).

ການບໍລິການບຳບັດດ້ວຍການຈັດກະດູກ

Anthem ຄຸ້ມຄອງຄ່າການບໍລິການບຳບັດດ້ວຍການຈັບດກະດູກສັນຫຼັງ, ເຊິ່ງຈຳກັດໃສ່ແຕ່ການປິ່ນປົວຮັກສາກະດູກສັນຫຼັງໂດຍການນວດຈັດ. ການບໍລິການບຳບັດດ້ວຍການນວດຈັດກະດູກຈຳກັດໃຫ້ຮັບການບໍລິການໄດ້ແຕ່ 2 ຄັ້ງຕໍ່ເດືອນ ຖ້າບໍ່ມີການໃຊ້ລວມກັບການບໍລິການອື່ນ ຫຼື ມັນຈະເປັນການລວມກັບ 2 ບໍລິການ ຕໍ່ເດືອນ ຈາກການບໍລິການຕໍ່ໄປນີ້: ການບໍລິການຝັງເຂັມ, ໂສຕະວິທະຍາ, ການຍະບຳບັດ ແລະ ວາຈາບຳບັດ. ຂີດຈຳກັດນີ້ ບໍ່ມີຜົນບັງຄັບໃຊ້ກັບເດັກທີ່ອາຍຸຕ່ຳກວ່າ 21 ປີ. Anthem ອາດຈະໃຫ້ການອະນຸມັດການລ່ວງໜ້າແກ່ການບໍລິການອື່ນໆ ຕາມຄວາມຈຳເປັນທາງການແພດ.

ສະມາຊິກຕໍ່ໄປນີ້ ມີເງື່ອນໄຂໄດ້ຮັບການບໍລິການນວດຈັດກະດູກ:

- ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 21 ປີ
- ຄົນຖືພາຈົນເຖິງທ້າຍເດືອນ ໂດຍລວມເຖິງ 60 ວັນຫຼັງຈາກສິ້ນສຸດການຖືພາ

- ຜູ້ຢູ່ອາໄສໃນສະຖານພະຍາບານທີ່ມີທັກສະ, ສະຖານດູແລລະດັບກາງ ຫຼື ສະຖານດູແລ ເຄື່ງກະທັນຫັນ
- ສະມາຊິກທຸກຄົນ ເມື່ອການບໍລິການຖືກສະໜອງໃຫ້ຢູ່ທີ່ພະແນກຄົນ ເຈັບນອກຂອງໂຮງໝໍໃນຄາວຕີ້, ຄລີນິກຄົນ ເຈັບນອກ, ສູນສຸຂະພາບທີ່ຜ່ານການຢັ້ງຢືນຈາກ ລັດຖະບານກາງ (FQHC) ຫຼື ຄຼີນິກສຸຂະພາບ ເຂດ ຊົນນະບົດ (RHC) ຕ່າງໆທີ່ຢູ່ໃນ ເຄືອຂ່າຍຂອງ Anthem. ບໍ່ແມ່ນບັນດາ FQHC, RHC ຫຼື ໂຮງໝໍ ຂອງຄາວຕີ້ທຸກ ແຫ່ງ ຈະມີການບໍລິການນວດ ຈັດກະດູກ.

ການປະເມີນສຸຂະພາບດ້ານການຮັບຮູ້

Anthem ຄຸ້ມຄອງການ ປະ ເມີນ ສຸ ຂະ ພາ ບ ຈິ ດ ດ້ ານ ການ ຮັ ບ ຮູ້ ປະ ຈ ຳ ປີ ສ ຳ ລ ັ ບ ສ ະ ມ າ ຊ ິ ກ ທ ີ່ ມ ີ ອ າ ຍ ຸ 65 ປ ີ ຂ ຶ ້ ນ ໄ ປ ທ ີ່ ອ ີ ກ ດ ້ ານ ໜ ຶ ່ ງ ບ ໍ່ ມ ີ ສ ິ ດ ໄ ດ ້ ຮ ັ ບ ການ ປ ະ ເ ມ ີ ນ ທ ີ່ ຄ ້ າ ຍ ຄ ື ກ ັ ນ ໃ ນ ນ າ ມ ເ ປ ັ ນ ສ ່ ວ ນ ໜ ຶ ່ ງ ຂ ອ ງ ການ ກ ວ ດ ສ ຸ ຂ ະ ພ າ ບ ປ ະ ຈ ຳ ປ ີ ພ າ ຍ ໃ ຕ ້ ໂ ຄ ງ ການ Medicare. ການ ປ ະ ເ ມ ີ ນ ສ ຸ ຂ ະ ພ າ ບ ຈ ິ ດ ດ ້ ານ ການ ຮ ັ ບ ຮ ູ ້ ຈ ະ ກ ວ ດ ຫ າ ສ ັ ນ ຍ າ ນ ຂ ອ ງ ໂ ລ ກ ສ ະ ໝ ອ ງ ເ ສ ື ່ ອ ມ ຫ ຼ ື ໂ ລ ກ ຄ ວ າ ມ ຈ ຳ ເ ສ ື ່ ອ ມ.

ໂ ທ ຫ າ ສ ູ ນ ດ ູ ແ ລ ລ ູ ກ ຄ ້ າ ທ ີ່ ເ ບ ີ **1-800-407-4627 (TTY 711)**. Anthem ໃ ຫ ້ ບ ໍ ລ ິ ການ ວ ັ ນ ຈ ັ ນ ເ ຖ ິ ງ ວ ັ ນ ສ ຸ ກ, ແ ຕ ່ 7 ໂ ມ ງ ເ ຊ ົ ້ າ ຫ າ 7 ໂ ມ ງ ແ ລ ງ ຕ າ ມ ເ ວ ລ າ ປ າ ຊ ິ ຟ ິ ກ. ການ ໂ ທ ແ ມ ່ ນ ບ ໍ ່ ເ ສ ຍ ຄ ່ າ. ຫ ຼ ື ໂ ທ ຫ າ ສ າ ຍ ຖ ່ າ ຍ ທ ອ ດ ຂ ອ ງ ລ ັ ດ California ທ ີ່ ເ ບ ີ 711. ເ ຂ ົ ້ າ ເ ບ ິ ່ ງ ທ າ ງ ອ ອ ອ ນ ລ າ ຍ ທ ີ່ **anthem.com/ca/medi-cal**.

ການບໍລິການພະນັກງານສາທາລະນະສຸກຊຸມຊົນ

Anthem ຄຸ້ມຄອງການບໍລິການພະນັກງານສາທາລະນະສຸກຊຸມຊົນ (CHW) ສຳລັບບຸກຄົນ ເມື່ອແນະນຳໂດຍແພດ ຫຼື ຜູ້ປະຕິບັດການທີ່ມີໃບອະນຸຍາດອື່ນໆ ເພື່ອປ້ອງກັນພະຍາດ, ຄວາມພິການ ແລະ ສະພາວະດ້ານສຸຂະພາບອື່ນໆ ຫຼື ການພັດທະນາການຂອງພວກເຂົາ; ເຮັດໃຫ້ອາຍຸຍືນຍາວ ແລະ ສົ່ງເສີມສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ປະສິດທິພາບ. ການບໍລິການອາດຈະປະກອບມີ:

- ການສຶກສາ ແລະ ການຝຶກອົບຮົມດ້ານສາທາລະນະສຸກ ລວມທັງການຄວບຄຸມ ແລະ ປ້ອງກັນພະຍາດຊຳເຮື້ອ ຫຼື ພະຍາດຕິດຕໍ່; ພາວະດ້ານພຶດຕິກຳ, ສຸຂະພາບແມ່ ເດັກ ແລະ ຊ່ອງປາກ ແລະ ການປ້ອງກັນການບາດເຈັບ
- ການສົ່ງເສີມສຸຂະພາບ ແລະ ຄູຝຶກ, ລວມທັງການວາງເປົ້າໝາຍ ແລະ ສ້າງແຜນປະຕິບັດງານເພື່ອແກ້ໄຂການປ້ອງກັນ ແລະ ຄຸ້ມຄອງພະຍາດ

ການບໍລິການຟອກໝາກໄຂ່ຫຼັງ ແລະ ຟອກເລືອດ

Anthem ຄຸ້ມຄອງການປິ່ນປົວຟອກໝາກໄຂ່ຫຼັງ. ນອກຈາກນັ້ນ Anthem ກໍຍັງຄຸ້ມຄອງການບໍລິການຟອກເລືອດ (ການຟອກໝາກໄຂ່ຫຼັງຊຳເຮື້ອ) ອີກດ້ວຍ ຖ້າທ່ານໝໍຂອງທ່ານໄດ້ສົ່ງຄຳຮ້ອງຂໍ ແລະ Anthem ໃຫ້ການອະນຸມັດແລ້ວ.

ການຄຸ້ມຄອງຂອງ Medi-Cal ບໍ່ລວມ:

- ເວດຊະພັນ, ອຸປະກອນ ແລະ ຄຸນສົມບັດເພື່ອຄວາມສະດວກ, ຄວາມສະບາຍ ຫຼື ຄວາມຫຼູຫຼາ
- ສິ່ງຂອງທີ່ບໍ່ແມ່ນທາງການແພດ ເຊັ່ນ: ເຄື່ອງປັ່ນໄຟ ຫຼື ອຸປະກອນເສີມເພື່ອເຮັດໃຫ້ເຄື່ອງຟອກໝາກໄຂ່ຫຼັງສາມາດພົກພາໄດ້ສຳລັບການເດີນທາງ

ການບໍລິການຜູ້ຊ່ຽວຊານດູແລຄັນ

Anthem ຄຸ້ມຄອງການບໍລິການຜູ້ຊ່ຽວຊານດູແລຄັນໃຫ້ແກ່ສະມາຊິກທີ່ຖືພາ ຫຼື ໄດ້ຖືພາໃນປີຜ່ານມາ ເມື່ອໄດ້ຮັບການແນະນຳຈາກແພດ ຫຼື ຜູ້ປະກອບອາຊີບທີ່ມີໃບອະນຸຍາດ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

Medi-Cal ບໍ່ຄຸ້ມຄອງການບໍລິການຜູ້ຊ່ຽວຊານດູແລຄັນໝົດທຸກຢ່າງ. ຜູ້ຊ່ຽວຊານດູແລຄັນ ແມ່ນພະນັກງານຄອດລູກ ທີ່ໃຫ້ຄວາມຮູ້ດ້ານສຸຂະພາບ, ການຊ່ວຍເຫຼືອ ແລະ ການສະໜັບສະໜູນທາງດ້ານຮ່າງກາຍ, ອາລົມຄວາມຮູ້ສຶກ ແລະ ສິ່ງທີ່ບໍ່ແມ່ນທາງການແພດ ສຳລັບຜູ້ທີ່ຖືພາ ແລະ ຫຼັງຄອດ ກ່ອນ, ໃນລະຫວ່າງ ແລະ ຫຼັງຄອດລູກ, ລວມທັງການສະໜັບສະໜູນໃນຊ່ວງການແທ້ງລູກ, ການຄອດລູກ ແລະ ການລຸລູກ.

ການບໍລິການດູແລແບບຄູ່ກັນ

Anthem ຄຸ້ມຄອງການບໍລິການດູແລ ສຸຂະພາບພຶດຕິກຳແບບຄູ່ກັນ (DBH) ທີ່ຈຳເປັນທາງການແພດ ສຳລັບບັນດາສະມາຊິກ ແລະ ຜູ້ດູແລຂອງພວກເຂົາ. ຄູ່ກັນ ແມ່ນໄດ້ແກ່ ເດັກ ແລະ ພໍ່ແມ່ ຫຼື ຜູ້ດູແລຂອງພວກເຂົາ. ການດູແລແບບຄູ່ກັນ ໃຫ້ບໍລິການພໍ່ແມ່ ຫຼື ຜູ້ເບິ່ງແຍງ ແລະ ເດັກຮ່ວມກັນ. ມັນມຸ່ງເປົ້າໄປທີ່ຄວາມສະຫວັດດີພາບຂອງຄອບຄົວ ເພື່ອສະໜັບສະໜູນການພັດທະນາການ ແລະ ສຸຂະພາບຈິດຂອງເດັກທີ່ມີສຸຂະພາບແຂງແຮງດີ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການບໍລິການການດູແລແບບຄູ່ກັນ ປະກອບດ້ວຍ ການໄປພົບ ເພື່ອຄວາມສະຫວັດດີພາບຂອງ DBH, ການບໍລິການການສະ ໜັບສະໜູນຊຸມຊົນທີ່ຄົບວົງຈອນ, ການບໍລິການດ້ານຈິດຕະສົກ ສາແບບຄູ່ກັນ, ການບໍລິການພໍ່ແມ່ ຫຼື ຜູ້ດູແລເດັກແບບຄູ່ກັນ, ການຝຶກອົບຮົມແກ່ຄອບຄົວແບບຄູ່ກັນ ແລະ ການໃຫ້ຄຳປຶກສາ ສຳລັບການພັດທະນາການຂອງເດັກ ແລະ ການບໍລິການ ສຸຂະພາບຈິດມານດາ.

ການຜ່າຕັດຄົນເຈັບນອກ

Anthem ຄຸ້ມຄອງຂະບວນການຜ່າຕັດສຳລັບຜູ້ຄົນເຈັບນອກ. ສຳລັບຂະບວນການຜ່າຕັດບາງຢ່າງ, ທ່ານຈະຕ້ອງຂໍການ ອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ) ກ່ອນເຂົ້າຮັບ ການບໍລິການເຫຼົ່ານັ້ນ. ຂະບວນການວິເຄາະມະຕິພະບາດ ແລະ ຂະບວນການທາງການແພດ ຫຼື ທາງທັນຕະກຳສຳລັບຄົນ ເຈັບນອກບາງຢ່າງ ແມ່ນຖືວ່າເປັນທາງເລືອກ. ທ່ານຈະຕ້ອງຂໍ ການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ). Anthem ຄຸ້ມຄອງການບໍລິການຈາກແພດ ທີ່ຈຳເປັນທາງການແພດ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການບໍລິການກ່ຽວກັບຕີນ (ເທົ້າ)

Anthem ຄຸ້ມຄອງການບໍລິການກ່ຽວກັບຕີນທີ່ຈຳເປັນທາງການແພດ ສຳລັບການວິເຄາະມະຕິພະຍາດ ແລະ ການປິ່ນປົວທາງການແພດ, ການຜ່າຕັດ, ການນວດຈັດ ແລະ ການປິ່ນປົວດ້ວຍໄຟຟ້າຕ່ຕີນມະນຸດ. ນີ້ລວມເຖິງການປິ່ນປົວຂໍ້ຕີນ ແລະ ເສັ້ນເອັນທີ່ເຊື່ອມຕ່ກັບຕີນ. ນອກຈາກນັ້ນ ກໍຍັງລວມເຖິງການປິ່ນປົວໂດຍບໍ່ຕ້ອງຜ່າຕັດກ້າມເນື້ອ ແລະ ເສັ້ນເອັນຂອງຂາທີ່ຄວບຄຸມການເຮັດວຽກຂອງຕີນອີກດ້ວຍ.

ການບຳບັດປິ່ນປົວ

Anthem ຄຸ້ມຄອງການບຳບັດປິ່ນປົວຫຼາຍຢ່າງທີ່ແຕກຕ່າງກັນ, ລວມທັງ:

- ເຄມີບຳບັດ
- ລັງສີບຳບັດ

ການດູແລແມ່ ແລະ ເດັກເກີດໃໝ່

Anthem ຄຸ້ມຄອງການບໍລິການການດູແລແມ່ ແລະ ເດັກເກີດໃໝ່ ເຫຼົ່ານີ້:

- ການບໍລິການສູນການເກີດ
- ເຄື່ອງປ້ຳນົມ ແລະ ເຄື່ອງໃຊ້
- ການໃຫ້ຄວາມຮູ້ ແລະ ການຊ່ວຍເຫຼືອ ກ່ຽວກັບການລ້ຽງລູກດ້ວຍນົມແມ່
- ພະຍາບານຜະດຸງຄັນທີ່ມີໃບຢັ້ງຢືນ (CNM)
- ການດູແລຕອນເກີດລູກ ແລະ ຫຼັງເກີດລູກ
- ການວິນິດໄສຄວາມຜິດປົກກະຕິທາງກຳມະພັນຂອງເດັກໃນທ້ອງ ແລະ ການໃຫ້ຄຳປຶກສາ
- ການບໍລິການຜູ້ຊ່ຽວຊານດູແລຄັນ
- ໝໍຜະດຸງຄັນທີ່ມີໃບອະນຸຍາດ (LM)
- ການບໍລິການສຸຂະພາບຈິດມານດາ
- ການດູແລເດັກເກີດໃໝ່
- ການດູແລກ່ອນເກີດ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການບໍລິການການແພດທາງໄກ

ການແພດທາງໄກ ແມ່ນວິທີການຮັບບໍລິການໂດຍບໍ່ຕ້ອງຢູ່ໃນສະຖານທີ່ດຽວກັນກັບຜູ້ໃຫ້ບໍລິການຂອງທ່ານ. ການແພດທາງໄກອາດຈະກ່ຽວກັບການສົນທະນາສົດກັບຜູ້ໃຫ້ບໍລິການຂອງທ່ານ. ຫຼື ການແພດທາງໄກອາດຈະກ່ຽວຂ້ອງກັບການແບ່ງປັນຂໍ້ມູນກັບຜູ້ໃຫ້ບໍລິການຂອງທ່ານໂດຍບໍ່ສົນທະນາກັນແບບສົດໆ. ທ່ານສາມາດຮັບການບໍລິການຫຼາກຫຼາຍຜ່ານທາງການແພດທາງໄກ.

ການແພດທາງໄກອາດຈະບໍ່ມີໃຫ້ສຳລັບທຸກການບໍລິການທີ່ຄຸ້ມຄອງ. ທ່ານສາມາດຕິດຕໍ່ ຜູ້ໃຫ້ບໍລິການຂອງທ່ານ ເພື່ອຮຽນຮູ້ວ່າບໍລິການປະເພດໃດແດ່ທີ່ສາມາດໃຊ້ໄດ້ຜ່ານທາງການແພດທາງໄກໄດ້. ສິ່ງສຳຄັນກໍຄືທ່ານ ແລະ ຜູ້ໃຫ້ບໍລິການຂອງທ່ານຕ້ອງເຫັນດີນຳກັນວ່າການໃຊ້ການບໍລິການການແພດທາງໄກສຳລັບການບໍລິການ ແມ່ນເໝາະສົມສຳລັບທ່ານ. ທ່ານມີສິດຈະເຂົ້າຮັບການບໍລິການແບບເຊິ່ງໜ້າໄດ້. ທ່ານບໍ່ຈຳເປັນຕ້ອງໃຊ້ການແພດທາງໄກ ເຖິງວ່າຜູ້ໃຫ້ບໍລິການຂອງທ່ານເຫັນດີວ່າມັນເໝາະສົມສຳລັບທ່ານ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການບໍລິການສຸຂະພາບຈິດ

ການບໍລິການສຸຂະພາບຈິດສຳລັບຄົນເຈັບນອກ

Anthem ຄຸ້ມຄອງສະມາຊິກສຳລັບການປະເມີນສຸຂະພາບຈິດເບື້ອງຕົ້ນ ໂດຍບໍ່ຈຳເປັນຕ້ອງມີການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ). ທ່ານອາດຈະໄດ້ຮັບການປະເມີນສຸຂະພາບຈິດໄດ້ທຸກເວລາຈາກຜູ້ໃຫ້ບໍລິການສຸຂະພາບຈິດທີ່ມີໃບອະນຸຍາດໃນເຄືອຂ່າຍ Anthem ໂດຍບໍ່ຕ້ອງມີການນຳສົ່ງ.

PCP ຫຼື ຜູ້ໃຫ້ບໍລິການສຸຂະພາບຈິດຂອງທ່ານ ຈະເຮັດການນຳສົ່ງໄປກວດສຸຂະພາບຈິດເພີ່ມເຕີມ ນຳຜູ້ຊ່ຽວຊານໃນເຄືອຂ່າຍ Anthem ເພື່ອຕັດສິນລະດັບການດູແລຂອງທ່ານ. ຖ້າຜົນການກວດສຸຂະພາບຈິດຂອງທ່ານກຳນົດວ່າທ່ານມີຄວາມກັງວົນເລັກນ້ອຍ ຫຼື ປານກາງ ຫຼື ມີຄວາມບົກຜ່ອງທາງຈິດ, ອາລົມ ຫຼື ພຶດຕິກຳ, Anthem ສາມາດສະໜອງການບໍລິການສຸຂະພາບຈິດແກ່ທ່ານໄດ້.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

Anthem ຄຸ້ມຄອງການບໍລິການສຸຂະພາບຈິດຕ່າງໆ ເຊັ່ນ:

- ການປະເມີນ ແລະ ການປິ່ນປົວສຸຂະພາບຈິດລາຍບຸກຄົນ ແລະ ກຸ່ມ (ຈິດບຳບັດ)
- ການທົດສອບທາງຈິດຕະວິທະຍາເມື່ອມີການບົ່ງຊີ້ທາງຄລີນິກເພື່ອປະເມີນອາການທາງສຸຂະພາບຈິດ
- ການພັດທະນາທັກສະດ້ານການຮັບຮູ້ເພື່ອປັບປຸງການເອົາໃຈໃສ່, ຄວາມຈຳ ແລະ ການແກ້ໄຂບັນຫາ
- ການບໍລິການຄົນເຈັບນອກສຳລັບຈຸດປະສົງໃນການຕິດຕາມການບຳບັດປິ່ນປົວດ້ວຍຢາ
- ການບໍລິການຫ້ອງທົດລອງສຳລັບຄົນເຈັບນອກ
- ຢາສຳລັບຄົນເຈັບນອກ ທີ່ຍັງບໍ່ທັນໄດ້ຮັບການຄຸ້ມຄອງພາຍໃຕ້ບັນຊີລາຍຊື່ຢາໃນສັນຍາຂອງ Medi-Cal Rx (https://medi-calrx.dhcs.ca.gov/home/), ອຸປະກອນ ແລະ ອາຫານເສີມຕ່າງໆ
- ການໃຫ້ຄຳປຶກສາດ້ານຈິດຕະເວດ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ຄອບຄົວບຳບັດ ທີ່ມີສະມາຊິກຄອບຄົວຢ່າງໜ້ອຍ 2 ຄົນ ເຂົ້າຮ່ວມ. ຕົວຢ່າງຂອງຄອບຄົວບຳບັດ ແມ່ນລວມທັງ, ແຕ່ບໍ່ຈຳກັດສະເພາະພຽງແຕ່:
  - ຈິດບຳບັດສຳລັບເດັກຊຜູ້ປົກຄອງ (ອາຍຸ 0 ຫາ 5 ປີ)
  - ການບຳບັດແບບໂຕ້ຕອບລະຫວ່າງຜູ້ປົກຄອງ ແລະ ເດັກ (ອາຍຸ 2 ຫາ 12 ປີ)
  - ການບຳບັດຄູ່ຜົວເມຍດ້ານສະຕິປັນຍາ-ພຶດຕິກຳ (ຜູ້ໃຫຍ່)

ສຳລັບການຊ່ວຍຊອກຫາຂໍ້ມູນເພີ່ມຕື່ມກ່ຽວກັບການບໍລິການ ສຸຂະພາບຈິດ ທີ່ສະໜອງໃຫ້ໂດຍ Anthem, ໃຫ້ໂທຫາເບີ **1-800-407-4627 (TTY 711)**.

ຖ້າການປິ່ນປົວທີ່ທ່ານຕ້ອງການສຳລັບພາວະຜິດປົກກະຕິດ້ານ ສຸຂະພາບຈິດ ແມ່ນບໍ່ມີຢູ່ໃນເຄືອຂ່າຍ Anthem ຫຼື PCP ຫຼື ຜູ້ໃຫ້ບໍລິການດ້ານສຸຂະພາບຈິດຂອງທ່ານ ບໍ່ສາມາດໃຫ້ການດູ ແລທີ່ທ່ານຕ້ອງການໄດ້ຕາມເວລາທີ່ໄດ້ລະບຸໄວ້ຂ້າງເທິງ ໃນຫົວຂໍ້ "ການເຂົ້າເຖິງການດູແລຢ່າງທັນເວລາ", Anthem ກໍຈະຄຸ້ມ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ຄອງ ແລະ ຊ່ວຍໃຫ້ທ່ານໄດ້ຮັບການບໍລິການນອກເຄືອຂ່າຍ.

ຖ້າການກວດສຸຂະພາບຈິດຂອງທ່ານ ສະແດງໃຫ້ເຫັນວ່າທ່ານອາດຈະມີຄວາມບົກຜ່ອງຢູ່ໃນລະດັບສູງ ແລະ ຕ້ອງການ ການບໍລິການສຸຂະພາບຈິດພິເສດ (SMHS), PCP ຫຼື ຜູ້ໃຫ້ບໍລິການດ້ານສຸຂະພາບຈິດຂອງທ່ານ ຈະສາມາດນຳສົ່ງທ່ານໄປຍັງແຜນສຸຂະພາບຈິດຂອງຄາວຕີ້ ເພື່ອໃຫ້ໄດ້ຮັບການດູແລທີ່ທ່ານຕ້ອງການ. Anthem ອາດຍັງສາມາດຊ່ວຍເຊື່ອມຕໍ່ທ່ານໄປຍັງຄາວຕີ້ຂອງທ່ານ ສຳລັບ SMHS ອີກດ້ວຍ.

ເພື່ອສຶກສາເພີ່ມຕື່ມ, ໃຫ້ໄປອ່ານຫົວຂໍ້ "ບັນດາໂຄງການ ແລະ ການບໍລິການອື່ນໆຂອງ Medi-Cal" ໃນໜ້າ 100 ພາຍໃຕ້ຫົວຂໍ້ "ການບໍລິການສຸຂະພາບຈິດພິເສດ."

ການດູແລສຸກເສີນ

ການບໍລິການຄົນເຈັບໃນ ແລະ ຄົນເຈັບນອກທີ່ຈຳເປັນເພື່ອປິ່ນປົວເຫດສຸກເສີນທາງການແພດ

Anthem ຄຸ້ມຄອງການບໍລິການທັງໝົດທີ່ຈຳເປັນເພື່ອປິ່ນປົວເຫດສຸກເສີນທາງການແພດທີ່ເກີດຂຶ້ນໃນສະຫະລັດ (ລວມທັງ

ເຂດແຄ້ວນຕ່າງໆ ເຊັ່ນ: ບໍໂຕຣິໂກ, ໝູ່ເກາະເວີຈິ້ນຂອງ ສະຫະລັດ ແລະ ອື່ນໆ). ນອກຈາກນັ້ນ Anthem ກໍຍັງ ຄຸ້ມ ຄອງການດູແລສຸກເສີນທີ່ຈຳເປັນຕ້ອງເຂົ້າໂຮງໝໍໃນປະເທດ ການາດາ ຫຼື ປະເທດເມັກຊິໂກອີກດ້ວຍ. ເຫດສຸກເສີນທາງການ ແພດ ແມ່ນພາວະທາງການແພດທີ່ມີຄວາມເຈັບປວດຮຸນແຮງ ຫຼື ການບາດເຈັບຮ້າຍແຮງ. ພາວະນີ້ຈະຮ້າຍແຮງຫຼາຍ, ຖ້າບໍ່ ໄດ້ຮັບການດູແລທາງການແພດໃນທັນທີ, ເຊິ່ງບຸກຄົນທຳມະດາ ທີ່ມີສະຕິ (ມີເຫດຜົນ) (ບໍ່ແມ່ນຜູ້ຊ່ຽວຊານດ້ານການດູແລ ສຸຂະພາບ) ສາມາດຄາດການໄດ້ວ່າຈະສົ່ງຜົນໃຫ້ເກີດມີ:

- ຄວາມສ່ຽງຮ້າຍແຮງຕໍ່ກັບສຸຂະພາບຂອງທ່ານ,
- ອັນຕະລາຍຮ້າຍແຮງຕໍ່ກັບໜ້າທີ່ການທຳງານຮ່າງກາຍ,
- ການເຮັດວຽກຜິດປົກກະຕິຮ້າຍແຮງຂອງອະໄວຍະວະ ຫຼື ສ່ວນຕ່າງໆຂອງຮ່າງກາຍ ຫຼື
- ມີຄວາມສ່ຽງທີ່ຮ້າຍແຮງໃນກໍລະນີທີ່ຜູ້ຖືພາຢູ່ໃນ ລະຫວ່າງການເຈັບທ້ອງຄອດລູກ, ເຊິ່ງໝາຍຄວາມວ່າ ເປັນການຄອດລູກໃນເວລາທີ່ໜຶ່ງໃນສອງສິ່ງຕໍ່ໄປນີ້ຈະ ສາມາດເກີດຂຶ້ນໄດ້:

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ▫ ບໍ່ມີເວລາພຽງພໍເພື່ອຍ້າຍທ່ານຢ່າງປອດໄພໄປຫາໂຮງໝໍອື່ນກ່ອນການເກີດລູກ.
- ▫ ການຍ້າຍອາດຈະກໍ່ໃຫ້ເກີດອັນຕະລາຍຕໍ່ກັບສຸຂະພາບ ຫຼື ຄວາມປອດໄພຂອງທ່ານ ຫຼື ຕໍ່ກັບສຸຂະພາບ ແລະ ຄວາມປອດໄພຂອງເດັກໃນທ້ອງ.

ຖ້າຜູ້ໃຫ້ບໍລິການໃນຫ້ອງສຸກເສີນຂອງໂຮງໝໍຈ່າຍຢາຕາມໃບສັ່ງແພດສຳລັບຄົນເຈັບນອກໃນປະລິມານສຳລັບ 72 ຊົ່ວໂມງໃຫ້ແກ່ທ່ານ ໃນນາມເປັນສ່ວນໜຶ່ງຂອງການປິ່ນປົວຂອງທ່ານ, Anthem ຈະຄຸ້ມຄອງຢາຕາມໃບສັ່ງແພດນັ້ນ ໃນນາມເປັນສ່ວນໜຶ່ງຂອງການບໍລິການສຸກເສີນທີ່ໄດ້ຮັບການຄຸ້ມຄອງຂອງທ່ານ. ຖ້າຜູ້ໃຫ້ບໍລິການໃນຫ້ອງສຸກເສີນຂອງໂຮງໝໍໃຫ້ໃບສັ່ງຢາແກ່ທ່ານ ເຊິ່ງທ່ານຕ້ອງໄດ້ນຳໄປຊື້ຢູ່ຮ້ານຂາຍຢາສຳລັບຄົນເຈັບນອກ, Medi-Cal Rx ຈະຄຸ້ມຄອງໃບສັ່ງຢານັ້ນ.

ຖ້າວ່າເພສັດຊະກອນທີ່ຮ້ານຂາຍຢາສຳລັບຄົນເຈັບນອກໃຫ້ **ການສະໜອງຢາສຸກເສີນ** ແກ່ທ່ານ, ການສະໜອງຢາສຸກເສີນນັ້ນຈະໄດ້ຮັບການຄຸ້ມຄອງໂດຍ Medi-Cal Rx ແລະ ບໍ່ແມ່ນໂດຍ

Anthem. ຖ້າຮ້ານຂາຍຢາຕ້ອງການການຊ່ວຍເຫຼືອໃນການໃຫ້ຢາສຸກເສີນແກ່ທ່ານ, ໃຫ້ຮ້ານ�โทหา Medi-Cal Rx ທີ່ເບີ **1-800-977-2273**.

ການບໍລິການຂົນສົ່ງສຸກເສີນ

Anthem ຄຸ້ມຄອງການບໍລິການລົດຮັບສົ່ງຄົນເຈັບ ເພື່ອຊ່ວຍທ່ານໄປເຖິງສະຖານທີ່ດູແລທີ່ຢູ່ໃກ້ທີ່ສຸດໃນສະຖານະການສຸກເສີນ. ນີ້ໝາຍຄວາມວ່າອາການຂອງທ່ານຮ້າຍແຮງພຽງພໍທີ່ວິທີການອື່ນໃນການໄປເຖິງສະຖານທີ່ດູແລເບິ່ງແຍງອາດຈະເຮັດໃຫ້ສຸຂະພາບ ຫຼື ຊີວິດຂອງທ່ານມີຄວາມສ່ຽງ. ຈະບໍ່ຄຸ້ມຄອງການບໍລິການໃດໆຢູ່ນອກສະຫະລັດ, ຍົກເວັ້ນສຳລັບການບໍລິການສຸກເສີນທີ່ເຮັດໃຫ້ທ່ານຈຳເປັນຕ້ອງເຂົ້າໂຮງໝໍໃນປະເທດການາດາ ຫຼື ເມັກຊິກໂກເທົ່ານັ້ນ. ຖ້າທ່ານໄດ້ຮັບການບໍລິການລົດຂົນສົ່ງສຸກເສີນໃນປະເທດການາດາ ແລະ ເມັກຊິກໂກ ແລະ ທ່ານບໍ່ໄດ້ເຂົ້ານອນໂຮງໝໍໃນຊ່ວງເວລາຂອງການດູແລດັ່ງກ່າວນັ້ນ, Anthem ຈະບໍ່ຄຸ້ມຄອງການບໍລິການລົດຂົນສົ່ງສຸກເສີນຂອງທ່ານ.

? �โทหา ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການ�โทแม่นบໍ່ເສຍຄ່າ. ຫຼື �โทหาสายถ่ายทอดของลัด California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການດູແລຜູ້ປ່ວຍໄລຍະສຸດທ້າຍ ແລະ ການດູແລແບບປະຄັບປະຄອງ

Anthem ຄຸ້ມຄອງການດູແລຜູ້ປ່ວຍໃນໄລຍະສຸດທ້າຍ ແລະ ການດູແລແບບປະຄັບປະຄອງສຳລັບເດັກນ້ອຍ ແລະ ຜູ້ໃຫຍ່, ເຊິ່ງຊ່ວຍຫຼຸດຜ່ອນຄວາມບໍ່ສະບາຍດ້ານຮ່າງກາຍ, ອາລົມ, ສັງຄົມ ແລະ ຈິດໃຈ. ຜູ້ໃຫຍ່ທີ່ມີອາຍຸ 21 ປີຂຶ້ນໄປ ບໍ່ສາມາດຮັບທັງການບໍລິການດູແລຜູ້ປ່ວຍໄລຍະສຸດທ້າຍ ແລະ ການບໍລິການດູແລແບບປະຄັບປະຄອງໃນເວລາດຽວກັນໄດ້.

ການດູແລຜູ້ປ່ວຍໄລຍະສຸດທ້າຍ

ການດູແລຜູ້ປ່ວຍໄລຍະສຸດທ້າຍແມ່ນສິດທິປະໂຫຍດທີ່ຮັບໃຊ້ສະມາຊິກທີ່ເຈັບປ່ວຍໄລຍະສຸດທ້າຍ. ການດູແດຜູ້ປ່ວຍໄລຍະສຸດທ້າຍແມ່ນກຳນົດວ່າຕ້ອງແມ່ນສະມາຊິກທີ່ມີເວລາຢູ່ໄດ້ບໍ່ເກີນ 6 ເດືອນ. ມັນເປັນການແຊກແຊງທີ່ສຸມໄປໃສ່ການຈັດການຄວາມເຈັບປວດ ແລະ ປະຄອງອາການເປັນຫຼັກ ຫຼາຍກວ່າການປິ່ນປົວເພື່ອຍືດອາຍຸ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ການດູແລຜູ້ປ່ວຍໄລຍະສຸດທ້າຍລວມມີ:

- ການບໍລິການພະຍາບານ
- ການບໍລິການກາຍະບຳບັດ, ກິດຈະກຳບຳບັດ ຫຼື ວາຈາບຳບັດ
- ການບໍລິການສັງຄົມສົງເຄາະທາງການແພດ
- ການບໍລິການຜູ້ຊ່ວຍດູແລສຸຂະພາບຢູ່ເຮືອນ ແລະ ການບໍລິການແມ່ບ້ານ
- ອຸປະກອນ ແລະ ເວດຊະພັນທາງການແພດ
- ຢາ ແລະ ການບໍລິການທາງຊີວະພາບບາງຊະນິດ (ບາງຢ່າງອາດຈະມີໃຫ້ຜ່ານ Medi-Cal Rx)
- ການບໍລິການໃຫ້ຄຳປຶກສາ
- ການບໍລິການພະຍາບານຕໍ່ເນື່ອງແບບ 24 ຊົ່ວໂມງ ໃນ ລະຫວ່າງໄລຍະວິກິດ ແລະ ຕາມທີ່ຈຳເປັນ ເພື່ອປະຄອງ ອາການສະມາຊິກທີ່ເຈັບປ່ວຍໄລຍະສຸດທ້າຍຢູ່ເຮືອນ
- ການດູແລປ່ຽນແທນສຳລັບຄົນເຈັບໃນສູງເຖິງຫ້າມື້ ຕິດຕໍ່ກັນໃນເວລາຢູ່ໂຮງໝໍໃນແຕ່ລະຄັ້ງ, ສະຖານດູແລ ພະຍາບານລະດັບຊຳນານ ຫຼື ສະຖານດູແລຜູ້ປ່ວຍ ໄລຍະສຸດທ້າຍ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ການດູແລຄົນເຈັບໃນໄລຍະສັ້ນສຳລັບການຄວບຄຸມການເຈັບ ຫຼື ການຄຸ້ມຄອງອາການຢູ່ໂຮງໝໍ, ສະຖານດູແລພະຍາບານລະດັບຊຳນານ ຫຼື ສະຖານທີ່ດູແລຜູ້ປ່ວຍໄລຍະສຸດທ້າຍ

ການດູແລແບບປະຄັບປະຄອງ

ການດູແລແບບປະຄັບປະຄອງແມ່ນການດູແລທີ່ເນັ້ນໃສ່ຄົນເຈັບ ແລະ ຄອບຄົວທີ່ປັບປຸງຄຸນນະພາບຊີວິດໃຫ້ດີຂຶ້ນໂດຍການຄາດຄະເນ, ປ້ອງກັນ ແລະ ປິ່ນປົວຄວາມທຸກທໍລະມານ. ການດູແລແບບປະຄັບປະຄອງບໍ່ກຳນົດໃຫ້ສະມາຊິກຕ້ອງມີຊ່ວງເວລາການມີຊີວິດທີ່ກາເດືອນລົງມາ. ອາດຈະມີການສະໜອງການດູແລແບບປະຄັບປະຄອງໃຫ້ໃນເວລາດຽວກັນກັບການດູແລປິ່ນປົວ.

ການດູແລແບບປະຄັບປະຄອງປະກອບມີ:

- ການວາງແຜນການດູແລລ່ວງໜ້າ
- ການປະເມີນ ແລະ ການໃຫ້ຄຳປຶກສາກ່ຽວກັບການດູແລແບບປະຄັບປະຄອງ

- ແຜນການດູແລລວມທັງການດູແລແບບປະຄັບປະຄອງ ແລະ ເພື່ອຮັກສາໃຫ້ຫາຍຂາດທີ່ໄດ້ຮັບອະນຸຍາດທັງໝົດ
- ທີມງານແຜນການດູແລລວມມີ, ແຕ່ບໍ່ຈຳກັດພຽງແຕ່:
  - ທ່ານໝໍການແພດ ຫຼື ໝໍທີ່ຮັກສາໂລກກະດູກຜຸຜ່ອຍ
  - ຜູ້ຊ່ວຍແພດ
  - ພະຍາບານທີ່ໄດ້ຮັບການຂຶ້ນທະບຽນ
  - ພະຍາບານວິຊາຊີບທີ່ມີໃບອະນຸຍາດ ຫຼື ພະຍາບານປະຕິບັດການ
  - ນັກສັງຄົມສົງເຄາະ
  - ບາດຫຼວງ
- ການປະສານການດູແລ
- ການຈັດການຄວາມເຈັບປວດ ແລະ ອາການ
- ການບໍລິການສັງຄົມດ້ານສຸຂະພາບຈິດ ແລະ ການແພດ

ຜູ້ໃຫຍ່ທີ່ມີອາຍຸ 21 ປີຂຶ້ນໄປ ບໍ່ສາມາດຮັບທັງການດູແລແບບປະຄັບປະຄອງ ແລະ ການດູແລຜູ້ປ່ວຍໃນໄລຍະສຸດທ້າຍໃນເວລາດຽວກັນໄດ້. ຖ້າທ່ານຕ້ອງການໄດ້ຮັບການດູແລແບບປະຄັບປະຄອງ ແລະ ມີເງື່ອນໄຂໄດ້ຮັບການດູແລຜູ້ປ່ວຍໄລຍະສຸດ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ທ້າຍອີກດ້ວຍ, ທ່ານສາມາດຂໍໃຫ້ປ່ຽນເປັນການດູແລຜູ້ປ່ວຍ ໃນໄລຍະສຸດທ້າຍໄດ້ທຸກເວລາ.

ການເຂົ້ານອນໂຮງໝໍ

ການບໍລິການຜູ້ຊ່ຽວຊານການວາງຢາລະງັບປະສາດ

Anthem ຄຸ້ມຄອງການບໍລິການຜູ້ຊ່ຽວຊານການວາງ ຢາລະງັບປະສາດໃນຊ່ວງໄລຍະການພັກເຊົາຢູ່ໂຮງໝໍທີ່ໄດ້ ຮັບການຄຸ້ມຄອງ. ຜູ້ຊ່ຽວຊານການວາງຢາລະງັບປະສາດ ແມ່ນຜູ້ໃຫ້ບໍລິການທີ່ຊ່ຽວຊານໃນການໃຫ້ຢາລະງັບປະສາດ ຄວາມຮູ້ສຶກແກ່ຄົນເຈັບ. ຢາສະລົບ ແມ່ນຢາຊະນິດໜຶ່ງທີ່ໃຊ້ ໃນບາງຂັ້ນຕອນທາງການແພດ ຫຼື ທັນຕະກຳ.

ການບໍລິການໂຮງໝໍສຳລັບຄົນເຈັບໃນ

Anthem ຄຸ້ມຄອງການດູແລ ເບິ່ງແຍງຢູ່ໂຮງໝໍສຳລັບຄົນ ເຈັບໃນທີ່ມີຄວາມຈຳເປັນທາງການແພດໃນ ເວລາທີ່ທ່ານ ເຂົ້າໂຮງໝໍ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມ ເວລາປາຊີຟິກ. ການໂທ ແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການກວດລຳດັບຈີໂນມທັງໝົດແບບວ່ອງໄວ

ການກວດລຳດັບຈີໂນມທັງໝົດແບບວ່ອງໄວ (RWGS) ແມ່ນສິດທິປະໂຫຍດທີ່ໄດ້ຮັບການຄຸ້ມຄອງສຳລັບສະມາຊິກ Medi-Cal ຜູ້ທີ່ມີອາຍຸໜຶ່ງປີ ຫຼື ຕ່ຳກວ່າ ແລະ ໄດ້ຮັບການບໍລິການໃນໂຮງໝໍສຳລັບຄົນເຈັບໃນ ໃນຫ້ອງມໍລະສຸມ. ມັນປະກອບມີການຈັດລຳດັບພັນທຸກຳຂອງບຸກຄົນ, ການຈັດລຳດັບແບບສາມຄົນສຳລັບພໍ່ແມ່ (ຄົນໃດໜຶ່ງ ຫຼື ທັງສອງ) ແລະ ລູກຂອງພວກເຂົາ ແລະ ການຈັດລຳດັບແບບວ່ອງໄວສຸດ.

RWGS ເປັນວິທີໃໝ່ໃນການວິນິດໄສອາການໃຫ້ທັນເວລາຕໍ່ກັບການດູໃນຫ້ອງມໍລະສຸມ (ICU) ສຳລັບເດັກນ້ອຍອາຍຸໜຶ່ງປີລົງໄປ. ຖ້າລູກຂອງທ່ານມີເງື່ອນໄຂໄດ້ຮັບການບໍລິການເດັກຂອງລັດ California (CCS), CCS ອາດຈະຄຸ້ມຄອງການເຂົ້ານອນໂຮງໝໍ ແລະ RWGS.

ການບໍລິການຜ່າຕັດ

Anthem ຄຸ້ມຄອງຄ່າການຜ່າຕັດທີ່ມີຄວາມຈຳເປັນທາງການແພດທີ່ດຳເນີນຢູ່ໂຮງໝໍ.

ໂຄງການຂະຫຍາຍການດູແລຫຼັງເກີດລູກ (PPCE)

Anthem ຄຸ້ມຄອງການດູແລຫຼັງເກີດ ເປັນເວລາສູງເຖິງ 12 ເດືອນ ຫຼັງຈາກການສິ້ນສຸດການຖືພາ ໂດຍບໍ່ຄຳນຶງເຖິງລາຍໄດ້, ການມີສັນຊາດ ຫຼື ສະຖານະການເຂົ້າເມືອງ. ບໍ່ຈຳເປັນຕ້ອງມີການດຳເນີນການອື່ນໃດອີກ.

ການບໍລິການ ແລະ ອຸປະກອນ ສຳລັບການຟື້ນຟູ ແລະ ປັບສະພາບ (ການບຳບັດ)

ສິດທິປະໂຫຍດນີ້ລວມມີ ການບໍລິການ ແລະ ອຸປະກອນຕ່າງໆ ເພື່ອຊ່ວຍເຫຼືອຜູ້ທີ່ບາດເຈັບ, ພິການ ຫຼື ມີພາວະຊຳເຮື້ອໃຫ້ໄດ້ຮັບ ຫຼື ຟື້ນຟູທັກສະທາງຈິດໃຈ ແລະ ຮ່າງກາຍ.

Anthem ຄຸ້ມຄອງການບໍລິການດ້ານການຟື້ນຟູ ແລະ ປັບສະພາບ ທີ່ໄດ້ອະທິບາຍໄວ້ໃນຫົວຂໍ້ນີ້ ຖ້າທ່ານຜ່ານເງື່ອນໄຂຕໍ່ໄປນີ້ທັງໝົດ:

- ການບໍລິການ ແມ່ນມີຄວາມຈຳເປັນທາງການ ແພດ
- ການບໍລິການ ແມ່ນ ເພື່ອ ຈັດ ການ ພາວະ ທາງ ສຸ ຂະ ພາບ
- ການ ບໍ ລິ ການ ແມ່ນ ເພື່ອ ຊ່ວ ຍ ໃຫ້ ທ່ານ ຮັ ກ ສາ, ຮຽ ນ ຮູ້ ຫຼື ປັ ບ ປຸ ງ ທັ ກ ສະ ແລະ ການ ເຮັ ດ ວຽ ກ ຂ ອ ງ ຮ່ າ ງ ກ າ ຍ ສ ຳ ລັ ບ ການ ດ ຳ ລົ ງ ຊີ ວິ ດ ປະ ຈ ຳ ວັ ນ
- ທ່ານ ໄ ດ້ ຮັ ບ ການ ບ ໍ ລ ິ ການ ຢ ູ່ ໃ ນ ສ ະ ຖ ານ ພ ະ ຍ າ ບ ານ ທ ີ່ ຢ ູ່ ໃ ນ ເ ຄ ືອ ຂ ່ າ ຍ, ຍ ົ ກ ເ ວ້ ນ ແ ຕ ່ ວ ່ າ ທ ່ ານ ຫ ມ ໍ ໃ ນ ເ ຄ ືອ ຂ ່ າ ຍ ຈ ະ ກ ຳ ນ ົ ດ ວ ່ າ ມ ັ ນ ເ ປ ັ ນ ສ ິ ່ ງ ຈ ຳ ເ ປ ັ ນ ທ າ ງ ການ ແ ພ ດ ສ ຳ ລ ັ ບ ທ ່ ານ ທ ີ່ ຈ ະ ໄ ດ ້ ຮ ັ ບ ການ ບ ໍ ລ ິ ການ ໃ ນ ສ ະ ຖ ານ ທ ີ່ ອ ື່ ນ ຫ ຼ ື ສ ະ ຖ ານ ພ ະ ຍ າ ບ ານ ໃ ນ ເ ຄ ືອ ຂ ່ າ ຍ ບ ໍ່ ໄ ດ ້ ໃ ຫ ້ ບ ໍ ລ ິ ການ ໃ ນ ການ ຮ ັ ກ ສ າ ພ າ ວ ະ ດ ້ ານ ສ ຸ ຂ ະ ພ າ ບ ຂ ອ ງ ທ ່ ານ

ໂ ທ ຫ າ ສ ູ ນ ດ ູ ແ ລ ລ ູ ກ ຄ ້ າ ທ ີ່ ເ ບ ີ **1-800-407-4627 (TTY 711)**. Anthem ໃ ຫ ້ ບ ໍ ລ ິ ການ ວ ັ ນ ຈ ັ ນ ເ ຖ ິ ງ ວ ັ ນ ສ ຸ ກ, ແ ຕ ່ 7 ໂ ມ ງ ເ ຊ ົ້ າ ຫ າ 7 ໂ ມ ງ ແ ລ ງ ຕ າ ມ ເ ວ ລ າ ປ າ ຊ ີ ຟ ິ ກ. ການ ໂ ທ ແ ມ ່ ນ ບ ໍ ່ ເ ສ ຍ ຄ ່ າ. ຫ ຼ ື ໂ ທ ຫ າ ສ າ ຍ ຖ ່ າ ຍ ທ ອ ດ ຂ ອ ງ ລ ັ ດ California ທ ີ່ ເ ບ ີ 711. ເ ຂ ົ້ າ ເ ບ ິ່ ງ ທ າ ງ ອ ອ ນ ລ າ ຍ ທ ີ່ **anthem.com/ca/medi-cal**.

Anthem ຄຸ້ມຄອງການບໍລິການຟື້ນຟູ/ປັບສະພາບ ເຫຼົ່ານີ້:

ການຝັງເຂັ້ມ

Anthem ຄຸ້ມຄອງການບໍລິການຝັງເຂັ້ມເພື່ອປ້ອງກັນ, ປ່ຽນແປງ ຫຼື ບັນເທົາອາການເຈັບປວດຮຸນແຮງ, ຍາວນານຕໍ່ເນື່ອງ ທີ່ເກີດຈາກພາວະທາງການແພດທີ່ຖືກຮັບຮູ້ທົ່ວໄປ.

ການບໍລິການຝັງເຂັ້ມສຳລັບຄົນເຈັບນອກ ທີ່ມີ ຫຼື ບໍ່ມີເຂັ້ມກະຕຸ້ນໄຟຟ້າ ແມ່ນຈຳກັດໃຫ້ແຕ່ 2 ຄັ້ງຕໍ່ເດືອນ ໂດຍຮ່ວມກັບການບໍລິການໂສຕະວິທະຍາ, ການນວດຈັດກະດູກ, ກິດຈະກຳບຳບັດ ແລະ ວາຈາບຳບັດ ເມື່ອສະໜອງໃຫ້ໂດຍທ່ານໝໍ, ທັນຕະແພດ, ຜູ້ຊ່ຽວຊານດ້ານຕີນ ຫຼື ນັກຝັງເຂັ້ມ. ຂໍ້ຈຳກັດນີ້ບໍ່ມີຜົນບັງຄັບໃຊ້ກັບເດັກນ້ອຍອາຍຸຕ່ຳກວ່າ 21 ປີ. Anthem ອາດຈະໃຫ້ການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ແກ່ການບໍລິການເພີ່ມຕື່ມຕາມຄວາມຈຳເປັນທາງການແພດ.

ໂສຕະວິທະຍາ (ການໄດ້ຍິນ)

Anthem ຄຸ້ມຄອງການບໍລິການໂສຕະວິທະຍາ. ການບໍລິການໂສຕະວິທະຍາສຳລັບຄົນເຈັບນອກແມ່ນຈຳກັດໃຫ້ທີ່

2 ຄັ້ງຕໍ່ເດືອນ, ໂດຍລວມກັບການບໍລິການຝັງເຂັ້ມ, ການນວດ ຈັດກະດູກ, ກິດຈະກຳບຳບັດ ແລະ ວາຈາບຳບັດ (ຂໍ້ຈຳກັດນີ້ບໍ່ ມີຜົນບັງຄັບໃຊ້ກັບເດັກນ້ອຍອາຍຸຕ່ຳກວ່າ 21 ປີ). Anthem ອາດຈະມີການອະນຸມັດລ່ວງໜ້າ (ການອະນຸຍາດລ່ວງໜ້າ) ໃຫ້ ແກ່ການບໍລິການ ເພີ່ມຕື່ມຕາມຄວາມຈຳເປັນທາງການ ແພດ.

ການປິ່ນປົວສຸຂະພາບພຶດຕິກຳ

Anthem ຄຸ້ມຄອງການບໍລິການ ການປິ່ນປົວສຸຂະພາບພຶດຕິ ກຳ (BHT) ສຳລັບສະມາຊິກທີ່ມີອາຍຸຕ່ຳກວ່າ 21 ປີ ໂດຍຜ່ານ ສິດທິປະໂຫຍດສຳລັບ EPSDT. BHT ປະກອບດ້ວຍບັນດາ ໂຄງການບໍລິການ ແລະ ປິ່ນປົວ ເຊັ່ນ: ການວິເຄາະພຶດຕິກຳ ປະຍຸກ ແລະ ໂຄງການແຊກແຊງພຶດຕິກຳຕາມຫຼັກຖານ ເຊິ່ງ ຈະຊ່ວຍພັດທະນາ ຫຼື ຟື້ນຟູການເຮັດວຽກຂອງບຸກຄົນທີ່ມີ ອາຍຸຕ່ຳກວ່າ 21 ປີ ໃນຂອບເຂດສູງສຸດທີ່ເປັນໄປໄດ້.

ທາງຄາວຕີ້ໃຫ້ການບໍລິການສຳລັບພາວະຜິດປົກກະຕິຈາກການນຳໃຊ້ສານເສບຕິດໃຫ້ແກ່ສະມາຊິກຂອງ Medi-Cal ທີ່ມີເງື່ອນໄຂໄດ້ຮັບການບໍລິການເຫຼົ່ານີ້, ລວມທັງການຮັກສາປິ່ນປົວພາວະຜິດປົກກະຕິຈາກການນຳໃຊ້ສານເສບຕິດໃນລະດັບເຖິງທີ່ຢູ່ອາໄສນຳດ້ວຍ. ສະມາຊິກທີ່ຖືກກຳນົດເຂົ້າຮັບການບໍລິການການປິ່ນປົວພາວະຜິດປົກກະຕິຈາກການນຳໃຊ້ສານເສບຕິດ ແມ່ນຈະຖືກສົ່ງໄປຫາພະແນກການຂອງຄາວຕີ້ຂອງພວກເຂົາ ເພື່ອປິ່ນປົວ. ສຳລັບບັນຊີເບີໂທລະສັບທັງໝົດຂອງຄາວຕີ້ ໃຫ້ເຂົ້າໄປທີ່ https://dhcs.ca.gov/individuals/Pages/SUD_County_Access_Lines.aspx.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

Anthem ຈະສະໜອງ ຫຼື ຈັດແຈງໃຫ້ MAT ໄດ້ຮັບການດູແລ ຈາກແພດປະຈຳ, ໂຮງໝໍສຳລັບຄົນເຈັບໃນ, ພະແນກສຸກເສີນ ແລະ ສະຖານການແພດອື່ນໆ.

ການບໍລິການດ້ານທັນຕະກຳ

ໂຄງການ FFS ທັນຕະກຳຂອງ Medi-Cal ແມ່ນຄືກັນກັບ FFS Medi-Cal ສຳລັບການບໍລິການທັນຕະກຳຂອງທ່ານ. ກ່ອນທີ່ທ່ານຈະໄດ້ຮັບການບໍລິການດ້ານທັນຕະກຳ, ທ່ານຕ້ອງ ສະແດງບັດ BIC ຂອງທ່ານໃຫ້ແກ່ຜູ້ໃຫ້ບໍລິການທັນຕະກຳ. ເຮັດໃຫ້ແນ່ໃຈວ່າຜູ້ໃຫ້ບໍລິການຮັບ FFS Dental ແລະ ທ່ານບໍ່ ໄດ້ເປັນສ່ວນໜຶ່ງຂອງແຜນການດູແລແບບມີການຄຸ້ມຄອງທີ່ຄຸ້ມ ຄອງການບໍລິການດ້ານທັນຕະກຳ.

Medi-Cal ຄຸ້ມການບໍລິການດ້ານທັນຕະກຳທີ່ຫຼາກຫຼາຍໂດຍ ຜ່ານ ໂຄງການທັນຕະກຳຂອງ Medi-Cal, ລວມທັງ:

- ການບໍລິການກວດ ວິເຄາະພະຍາດ ແລະ ປ້ອງກັນແຂ້ວ ເຊັ່ນ: ການກວດ, ສ່ອງລັງສີ ແລະ ທຳ ຄວາມສະອາດແຂ້ວ
- ການບໍລິການສຸກເສີນ ເພື່ອລະງັບ ຄວາມເຈັບປວດ
- ການຖອນແຂ້ວ
- ການອັດແຂ້ວ
- ການປິ່ນປົວຮ່ອງ ຮາກແຂ້ວ (ດ້ານໜ້າ/ ດ້ານຫຼັງ)
- ການຄອບແຂ້ວ (ແຂ້ວສຳເລັດຮູບ/ ຫ້ອງທົດລອງ)
- ການປັບຂະໜາດ ແລະ ການວາງ ແຜນຮາກແຂ້ວ
- ແຂ້ວປອມທັງໝົດ ແລະ ບາງສ່ວນ
- ການດັດແຂ້ວສຳລັບ ເດັກນ້ອຍທີ່ມີ ເງື່ອນໄຂໄດ້ຮັບ
- ຟຣູອໍໄຣສະເພາະທີ່

ຖ້າທ່ານມີຄຳຖາມ ຫຼື ຕ້ອງການທີ່ຈະສຶກສາເພີ່ມຕື່ມ ກ່ຽວກັບ ການບໍລິການດ້ານທັນຕະກຳ, ໃຫ້ໂທຫາ ໂຄງການທັນຕະກຳ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຂອງ Medi-Cal ທີ່ເບີ **1-800-322-6384 (TTY 1-800-735-2922 ຫຼື 711)**. ນອກຈາກນັ້ນ ທ່ານກໍຍັງສາມາດໄປຍັງເວັບໄຊຂອງ ໂຄງການທັນຕະກຳຂອງ Medi-Cal ໄດ້ອີກດ້ວຍ ທີ່ https://www.dental.dhcs.ca.gov/ ຫຼື https://smilecalifornia.org/.

ການບໍລິການເດັກຂອງ California (CCS)

CCS ແມ່ນໂຄງການ Medi-Cal ທີ່ປິ່ນປົວເດັກທີ່ມີອາຍຸຕ່ຳກວ່າ 21 ປີ ທີ່ມີສະພາວະສຸຂະພາບ, ພະຍາດ ຫຼື ບັນຫາສຸຂະພາບຊຳເຮື້ອບາງຢ່າງ ແລະ ຜູ້ທີ່ບັນລຸໄດ້ຕາມກົດລະບຽບຂອງໂຄງການ CCS. ຖ້າ Anthem ຫຼື PCP ຂອງທ່ານ ເຊື່ອວ່າລູກຫຼານຂອງທ່ານມີເງື່ອນໄຂທີ່ເໝາະສົມກັບ CCS, ພວກເຂົາຈະຖືກສົ່ງໄປຫາໂຄງການ CCS ໃນຄາວຕີ້ ເພື່ອກວດສອບການມີເງື່ອນໄຂໄດ້ຮັບ.

ພະນັກງານຂອງໂຄງການ CCS ໃນຄາວຕີ້ຈະເປັນຜູ້ຕັດສິນວ່າລູກຂອງທ່ານມີສິດໄດ້ຮັບການບໍລິການ CCS ຫຼື ບໍ່. Anthem ບໍ່ບໍ່ແມ່ນຜູ້ຕັດສິນການມີສິດໄດ້ຮັບ CCS. ຖ້າລູກຂອງທ່ານມີ

ເງື່ອນໄຂໄດ້ຮັບການດູແລປະເພດນີ້, ຜູ້ໃຫ້ບໍລິການ CCS ຈະ ປິ່ນປົວລາວສຳລັບອາການທີ່ມີສິດໄດ້ຮັບ CCS. Anthem ຈະ ສືບຕໍ່ຄຸ້ມຄອງປະເພດການບໍລິການທີ່ບໍ່ກ່ຽວຂ້ອງກັບສະພາວະ ໃນ CCS ເຊັ່ນ: ການກວດສຸຂະພາບ, ຢາວັກຊີນ ແລະ ການ ກວດເພື່ອຄວາມສະຫວັດດີພາບຂອງເດັກ.

Anthem ບໍ່ຄຸ້ມຄອງການບໍລິການທີ່ໂຄງການ CCS ຄຸ້ມຄອງ. ເພື່ອໃຫ້ CCS ຄຸ້ມຄອງການບໍລິການເຫຼົ່ານີ້, CCS ຕ້ອງ ໃຫ້ການອະນຸມັດແກ່ຜູ້ໃຫ້ບໍລິການ, ການບໍລິການ ແລະ ອຸປະກອນດັ່ງກ່າວ.

CCS ບໍ່ໄດ້ຄຸ້ມຄອງທຸກບັນຫາສຸຂະພາບ. CCS ຄຸ້ມຄອງບັນຫາ ສຸຂະພາບສ່ວນໃຫຍ່ທີ່ມີຄວາມພິການທາງຮ່າງກາຍ ຫຼື ທີ່ຈຳເປັນຕ້ອງໄດ້ຮັບການປິ່ນປົວດ້ວຍຢາ, ການຜ່າຕັດ ຫຼື ການ ບຳບັດ (ການຟື້ນຟູ). ຕົວຢ່າງຂອງສະພາວະທີ່ມີສິດໄດ້ຮັບ CCS ແມ່ນລວມທັງ ແຕ່ບໍ່ຈຳກັດພຽງແຕ່:

- ພະຍາດຫົວໃຈແຕ່ ກຳເນີດ
- ມະເຮັງ
- ເນື້ອງອກ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ພາວະເລືອດໄຫຼບໍ່ຢຸດ
- ພະຍາດເມັດເລືອດ ແດງຮູບກ່ຽວ
- ບັນຫາຕ່ອມໄທຣອຍ
- ເບົາຫວານ
- ບັນຫາໝາກໄຂ່ຫຼັງຊໍາ ເຮື້ອຮ້າຍແຮງ
- ພະຍາດຕັບ
- ພະຍາດລໍາໄສ້
- ສົບ/ເພດານປາກ ແຫວ່ງ
- ຄວາມບົກພ່ອງຂອງ ກະດູກໄຂສັນຫຼັງ
- ການສູນເສຍ ການໄດ້ຍິນ
- ຕໍ້ກະຈົກຕາ
- ສະໝອງພິການ
- ອາການຊັກພາຍໃຕ້ ສະຖານະການ ສະເພາະໃດໜຶ່ງ
- ໂລກໄຂຂໍ້ອັກເສບ
- ໂລກກ້ານເນື້ອເສື່ອມ
- ໂລກເອດ
- ການບາດເຈັບຫົວ, ສະໝອງ ຫຼື ໄຂ ສັນຫຼັງຮຸນແຮງ
- ອາການໄໝ້ຮ້າຍແຮງ
- ແຂ້ວບິດບ້ຽວ ຢ່າງຮຸນແຮງ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

Medi-Cal ຈະຈ່າຍໃຫ້ການບໍລິການຂອງ CCS. ຖ້າລູກຂອງທ່ານບໍ່ມີສິດໄດ້ຮັບການບໍລິການຂອງໂຄງການ CCS, ພວກເຂົາຈະຍັງຄົງໄດ້ຮັບການດູແລທີ່ຈຳເປັນທາງການແພດ ຈາກ Anthem.

ເພື່ອສຶກສາເພີ່ມຕື່ມກ່ຽວກັບ CCS, ໃຫ້ໄປທີ່ https://www.dhcs.ca.gov/services/ccs. ຫຼື ໂທຫາເບີ **1-800-407-4627 (TTY 711)**.

ການຍົກເວັ້ນ ການບໍລິການເຖິງບ້ານ ແລະ ຊຸມຊົນ (HCBS) ຕາມ 1915(c)

ການຍົກເວັ້ນ Medi-Cal ຫົກລາຍການ ຕາມ 1915(c) ຂອງ California ອະນຸຍາດໃຫ້ລັດໃຫ້ບໍລິການແກ່ບຸກຄົນທີ່ຕ້ອງການການດູແລເປັນຢ່າງອື່ນ ໃນສະຖານພະຍາບານ ຫຼື ໂຮງໝໍ ໃນສະຖານທີ່ຕາມຊຸມຊົນ ທີ່ເຂົາເຈົ້າເລືອກ. Medi-Cal ມີຂໍ້ຕົກລົງກັບລັດຖະບານກາງ ທີ່ອະນຸຍາດໃຫ້ມີການຍົກເວັ້ນການບໍລິການ ທີ່ຈະມອບໃຫ້ຢູ່ໃນເຮືອນສ່ວນຕົວ ຫຼື ໃນສະຖານທີ່ຊຸມຊົນທີ່ຄ້າຍຄືກັບເຮືອນ. ການບໍລິການທີ່ສະໜອງໃຫ້ພາຍໃຕ້

ການຍົກເວັ້ນ ຕ້ອງບໍ່ມີຄ່າໃຊ້ຈ່າຍຫຼາຍກ່ວາລະດັບການດູແລ ທາງເລືອກຂອງສະຖາບັນ. ຜູ້ໄດ້ຮັບການຍົກເວັ້ນ HCBS ຕ້ອງມີເງື່ອນໄຂໄດ້ຮັບ Medi-Cal ແບບເຕັມສ່ວນ. ການຍົກເວັ້ນ Medi-Cal ຫົກລາຍການ ຕາມ 1915(c) ແມ່ນໄດ້ແກ່:

- ການຍົກເວັ້ນການດຳລົງຊີວິດແບບມີການຊ່ວຍເຫຼືອ (ALW) ຂອງລັດ California
- ການຍົກເວັ້ນ ໂຄງການກຳນົດດ້ວຍຕົນເອງ (SDP) ຂອງ ລັດ California ສຳລັບບຸກຄົນທີ່ມີຄວາມພິການທາງດ້ານ ການພັດທະນາການ
- ການຍົກເວັ້ນ HCBS ສຳລັບ ຊາວຄາລິຟໍເນຍທີ່ມີຄວາມ ພິການທາງດ້ານການພັດທະນາການ (HCBS-DD)
- ການຍົກເວັ້ນ ທາງເລືອກຕາມບ້ານ ແລະ ຊຸມຊົນ (HCBA)
- ໂຄງການການຍົກເວັ້ນ Medi-Cal (MCWP), ເຊິ່ງໃນ ເມື່ອກ່ອນເອີ້ນວ່າ ເຊື້ອໄວຣັດທຳລາຍລະບົບພູມຄຸ້ມກັນ/ ໂຣກພູມຄຸ້ມກັນບົກພ່ອງເມື່ອໄດ້ຮັບເຊື້ອມາ (HIV/AIDS)
- ໂຄງການບໍລິການຜູ້ອາວຸໂສອະເນກປະສົງ (MSSP)

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ເພື່ອສຶກສາເພີ່ມຕື່ມກ່ຽວກັບການຍົກເວັ້ນ Medi-Cal, ໃຫ້ໄປທີ່ https://www.dhcs.ca.gov/services/Pages/HCBSWaiver.aspx. ຫຼື ໂທຫາເບີ **1-800-407-4627 (TTY 711)**.

ການບໍລິການຊ່ວຍເຫຼືອໃນເຮືອນ (IHSS)

ໂຄງການ ການບໍລິການຊ່ວຍເຫຼືອໃນເຮືອນ (IHSS) ໃຫ້ການຊ່ວຍເຫຼືອ ດູແລສ່ວນຕົວໃນບ້ານ ແກ່ຜູ້ສູງອາຍຸ, ຄົນຕາບອດ ແລະ ຄົນພິການທີ່ມີເງື່ອນໄຂໄດ້ຮັບ ໃນນາມເປັນທາງເລືອກແກ່ການດູແລຢູ່ນອກເຮືອນ. ໂຄງການນີ້ຈະຊ່ວຍໃຫ້ຜູ້ໄດ້ຮັບ ສາມາດຢູ່ໃນເຮືອນຂອງຕົນເອງໄດ້ຢ່າງປອດໄພ.

ເພື່ອສຶກສາເພີ່ມຕື່ມກ່ຽວກັບ IHSS ທີ່ມີຢູ່ໃນຄາວຕີ້ຂອງທ່ານ, ໃຫ້ໄປທີ່ https://www.cdss.ca.gov/inforesources/ihss. ຫຼື ໂທຫາ ໜ່ວຍງານບໍລິການສັງຄົມປະຈຳຄາວຕີ້ໃນທ້ອງຖິ່ນ ຂອງທ່ານ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ການບໍລິການທີ່ທ່ານບໍ່ສາມາດ ໄດ້ຮັບຜ່ານ Anthem ຫຼື Medi-Cal

Anthem ແລະ Medi-Cal ຈະບໍ່ຄຸ້ມຄອງການບໍລິການບາງຢ່າງ. ການບໍລິການທີ່ Anthem ແລະ Medi-Cal ບໍ່ຄຸ້ມຄອງລວມທັງ, ແຕ່ບໍ່ຈຳກັດພຽງແຕ່:

- ການປະຕິສົນທິນອກຮ່າງກາຍ (IVF), ເຊິ່ງລວມທັງ ແຕ່ບໍ່ຈຳກັດພຽງແຕ່ ການສຶກສາກ່ຽວກັບການເປັນໝັນ ຫຼື ຂັ້ນຕອນການວິເຄາະບົ່ງມະຕິ ຫຼື ການປິ່ນປົວການເປັນໝັນ
- ການຮັກສາການຈະເລີນພັນ
- ການບໍລິການທົດລອງ
- ການດັດແປງເຮືອນ
- ການດັດແປງພາຫະນະ
- ການສັນຍະກຳຄວາມງາມ
- ລາຍການທີ່ບໍ່ໄດ້ພິຈາລະນາວ່າເປັນການບໍລການທາງການແພດໂດຍທຳມະຊາດ (ເຊັ່ນ: ໝາບໍລິການ)

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

Anthem ອາດຄຸ້ມຄອງການບໍລິການທີ່ບໍ່ໄດ້ຮັບການຄຸ້ມຄອງ ຖ້າວ່າມີຄວາມຈຳເປັນທາງການແພດ. ຜູ້ໃຫ້ບໍລິການຂອງທ່ານ ຈະຕ້ອງສົ່ງຄຳຮ້ອງຂໍການອະນຸມັດລ່ວງໜ້າ (ການອະນຸຍາດ ລ່ວງໜ້າ) ໃຫ້ Anthem ພ້ອມດ້ວຍເຫດວ່າເປັນຫຍັງສິດທິ ປະໂຫຍດທີ່ບໍ່ໄດ້ຮັບການຄຸ້ມຄອງນັ້ນ ຈຶ່ງມີຄວາມຈຳເປັນ ທາງການແພດ.

ເພື່ອສຶກສາເພີ່ມຕື່ມ ໃຫ້ໂທຫາເບີ **1-800-407-4627 (TTY 711)**.

5. ການດູແລເພື່ອ ຄວາມສະຫວັດດີ ພາບ ຂອງເດັກນ້ອຍ ແລະ ໄວໜຸ່ມ

ສະມາຊິກທີ່ເປັນເດັກນ້ອຍ ແລະ ໄວໜຸ່ມທີ່ມີອາຍຸຕ່ຳກວ່າ 21 ປີ ສາມາດເຂົ້າຮັບບໍລິການສຸຂະພາບພິເສດໄດ້ທັນທີທີ່ລົງທະບຽນເຂົ້າຮ່ວມແລ້ວ. ນີ້ຈະເປັນການຮັບປະກັນໃຫ້ພວກເຂົາໄດ້ຮັບການດູແລສຸຂະພາບເພື່ອເປັນການປ້ອງກັນ, ທັນຕະກຳ, ສຸຂະພາບຈິດ, ລວມທັງການພັດທະນາການ ແລະ ການ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ບໍລິການສະເພາະດ້ານທີ່ເໝາະສົມ. ໃນພາກນີ້ຈະອະທິບາຍ ເຖິງການບໍລິການເຫຼົ່ານີ້.

ການບໍລິການແພດເດັກ (ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 21 ປີ)

ສະມາຊິກທີ່ມີອາຍຸຕ່ຳກວ່າ 21 ປີ ຈະໄດ້ຮັບການຄຸ້ມຄອງ ສຳລັບການດູແລທີ່ຈຳເປັນ. ບັນຊີລາຍຊື່ຕໍ່ໄປນີ້ປະກອບມີການ ບໍລິການທີ່ຈຳເປັນທາງການແພດເພື່ອປິ່ນປົວ ຫຼື ແກ້ໄຂຂໍ້ ບົກພ່ອງ ແລະ ການວິນິດໄສທາງດ້ານຮ່າງກາຍ ຫຼື ຈິດໃຈ. ການບໍລິການທີ່ໄດ້ຮັບການຄຸ້ມຄອງປະກອບມີ, ແຕ່ບໍ່ຈຳ ກັດພຽງແຕ່:

- ການເຂົ້າກວດສຸຂະພາບເພື່ອຄວາມສະຫວັດດີພາບ ຂອງເດັກ ແລະ ໄວລຸ່ນ (ການເຂົ້າພົບສຳຄັນທີ່ເດັກມີ ຄວາມຕ້ອງການ)
- ການສັກຢາປ້ອງກັນພະຍາດ (ສັກຢາ)

- ການປະເມີນຜົນ ແລະ ການປິ່ນປົວສຸຂະພາບພຶດຕິກຳ
- ການປະເມີນຜົນ ແລະ ການປິ່ນປົວສຸຂະພາບຈິດ, ລວມທັງຈິດບຳບັດສຳລັບບຸກຄົນ, ແບບເປັນກຸ່ມ ແລະ ຄອບຄົວ (ການບໍລິການສຸຂະພາບຈິດແບບພິເສດແມ່ນໄດ້ຮັບການຄຸ້ມຄອງໂດຍຄາວຕີ້)
- ການກວດກັ່ນຕອງ ປະສົບການທີ່ບໍ່ເພີ່ງປະສົງໃນ ໄວເດັກ (ACE)
- ການກວດໃນຫ້ອງທົດລອງ, ລວມທັງການກວດຫາສານກົ່ວໃນເລືອດ
- ການໃຫ້ຄວາມຮູ້ດ້ານສຸຂະພາບ ແລະ ການປ້ອງກັນ
- ການບໍລິການດ້ານສາຍຕາ
- ການບໍລິການດ້ານທັນຕະກຳ (ໄດ້ຮັບການຄຸ້ມຄອງພາຍໃຕ້ Medi-Cal Dental)
- ການບໍລິການດ້ານການໄດ້ຍິນ (ໄດ້ຮັບການຄຸ້ມຄອງໂດຍ California Children's Services (CCS) ສຳລັບເດັກທີ່ມີເງື່ອນໄຂໄດ້ຮັບ. Anthem ຈະຄຸ້ມຄອງບໍລິການ ສຳລັບເດັກນ້ອຍທີ່ບໍ່ຜ່ານເງື່ອນໄຂສຳລັບ CCS).

ການບໍລິການເຫຼົ່ານີ້ເອີ້ນວ່າ ການບໍລິການກວດຄັດກອງ, ການປົ້ງກະຕິ ແລະ ການປິ່ນປົວແຕ່ຫົວທີ ແລະ ເປັນໄລຍະ (EPSDT). ການບໍລິການ EPSDT ທີ່ໄດ້ຮັບການແນະນຳໂດຍ ຄຳແນະນຳເພື່ອອະນາທີ່ສົດໃສ (Bright Futures) ຂອງແພດ ເດັກ ເພື່ອຊ່ວຍໃຫ້ທ່ານ ຫຼື ລູກຂອງທ່ານມີສຸຂະພາບດີ ໄດ້ຮັບ ການຄຸ້ມຄອງໂດຍບໍ່ເສຍຄ່າ. ເພື່ອອ່ານຄຳແນະນຳເຫຼົ່ານີ້, ໃຫ້ ໄປທີ່ https://downloads.aap.org/AAP/PDF/periodicity_schedule.pdf.

ການກວດສຸຂະພາບເພື່ອຄວາມສະຫວັດດີພາບ ຂອງເດັກນ້ອຍ ແລະ ການດູແລເຊີງປ້ອງກັນ

ການດູແລເຊີງປ້ອງກັນປະກອບມີ ການກວດສຸຂະພາບເປັນ ປະຈຳ, ການກວດຄັດກອງເພື່ອຊ່ວຍໃຫ້ທ່ານໝໍຂອງທ່ານ ສາມາດພົບບັນຫາໄດ້ໄວ ແລະ ການບໍລິການໃຫ້ຄຳປຶກສາເພື່ອ ກວດຫາຄວາມເຈັບປ່ວຍ, ພະຍາດ ຫຼື ພາວະທາງການແພດ

ກ່ອນພວກມັນຈະກໍ່ໃຫ້ມີບັນຫາ. ການກວດສຸຂະພາບເປັນ ປະຈຳຊ່ວຍໃຫ້ທ່ານ ຫຼື ທ່ານໝໍຂອງລູກຫຼານທ່ານສາມາດພົບ ບັນຫາຕ່າງໆໄດ້. ບັນຫາອາດລວມມີຄວາມຜິດປົກກະຕິທາງ ການແພດ, ດ້ານທັນຕະກຳ, ການເບິ່ງເຫັນ, ການໄດ້ຍິນ, ສຸຂະພາບຈິດ ແລະ ການໃຊ້ສານເສບຕິດ (ເຫຼົ້າ ຫຼື ຢາເສບຕິດ). Anthem ຄຸ້ມຄອງການບໍລິການກວດສຸຂະພາບເພື່ອຄັດກອງ (ລວມເຖິງການປະເມີນລະດັບສານກົ່ວໃນເລືອດ) ເມື່ອໃດກໍໄດ້ທີ່ ຈຳເປັນ, ເຖິງວ່າຈະບໍ່ໄດ້ຢູ່ໃນລະຫว่າງການກວດສຸຂະພາບ ຕາມປົກກະຕິຂອງທ່ານ ຫຼື ຂອງລູກຫຼານຂອງທ່ານກໍຕາມ.

ການດູແລເຊີງປ້ອງກັນສາມາດເປັນວັກຊີນທີ່ທ່ານ ຫຼື ລູກຂອງ ທ່ານຈຳເປັນຕ້ອງຮັບ. Anthem ຈະຕ້ອງກວດສອບເພື່ອ ຮັບປະກັນວ່າ ເດັກນ້ອຍທີ່ລົງທະບຽນທຸກຄົນຕ້ອງໄດ້ຮັບວັກຊີນ ທີ່ຈຳເປັນໃນເວລາເຂົ້າຮັບການດູແລສຸຂະພາບ. ການບໍລິການ ດູແລເຊີງປ້ອງກັນ ແລະ ການຄັດກອງແມ່ນໃຫ້ບໍລິການໂດຍ ບໍ່ເສຍຄ່າ ແລະ ບໍ່ຕ້ອງມີການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ).

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ລູກຂອງທ່ານຄວນໄດ້ຮັບການກວດສຸຂະພາບ ເມື່ອພວກເຂົາ ມີອາຍຸ ດັ່ງຕໍ່ນີ້:

- 2-4 ວັນຫຼັງເກີດ
- 1 ເດືອນ
- 2 ເດືອນ
- 4 ເດືອນ
- 6 ເດືອນ
- 9 ເດືອນ
- 12 ເດືອນ
- 15 ເດືອນ
- 18 ເດືອນ
- 24 ເດືອນ
- 30 ເດືອນ
- ປີລະຄັ້ງ ນັບແຕ່ອາຍຸ 3 ປີ ເຖິງ 20 ປີ

ການກວດສຸຂະພາບ ເພື່ອຄວາມສະຫວັດດີພາບຂອງເດັກນ້ອຍ ປະກອບດ້ວຍ:

- ສອບຖາມປະຫວັດ ແບບຄົບຖ້ວນ ແລະ ກວດຮ່າງກາຍ ແຕ່ຫົວຮອດຕີນ
- ການສັກຢາທີ່ເໝາະສົມກັບອາຍຸ (California ປະຕິບັດ ຕາມກຳນົດການຂອງ ສະຖາບັນ ເພື່ອອະນາຄົດທີ່ ສົດໃສ ຈາກ ແພດ ເດັກ ອາ ເມ ລິ ກາ:

---

https://downloads.aap.org/AAP/PDF/periodicity_schedule.pdf)

- ການກວດໃນຫ້ອງທົດລອງ, ລວມທັງການກວດຫາສານກົ່ວໃນເລືອດ
- ສຸຂະສຶກສາ
- ການກວດສາຍຕາ ແລະ ການໄດ້ຍິນ
- ການກວດສຸຂະພາບປາກ
- ການປະເມີນສຸຂະພາບພຶດຕິກຳ

ຖ້າທ່ານໝໍພົບບັນຫາສຸຂະພາບຮ່າງກາຍ ຫຼື ຈິດໃຈຂອງລູກຂອງທ່ານ ໃນລະຫວ່າງການກວດສຸຂະພາບ ຫຼື ການກວດກັ່ນຕອງ, ທ່ານ ຫຼື ລູກຂອງທ່ານອາດຈະຕ້ອງໄດ້ຮັບການດູແລທາງການແພດ. Anthem ຈະຄຸ້ມຄອງການດູແລນັ້ນ ໂດຍທີ່ທ່ານບໍ່ໄດ້ເສຍຄ່າໃຊ້ຈ່າຍ, ເຊິ່ງປະກອບດ້ວຍ:

- ທ່ານໝໍ, ພະຍາບານອາຊີບ ແລະ ການດູແລຢູ່ໂຮງໝໍ
- ວັກຊີນເພື່ອຮັກສາໃຫ້ທ່ານມີສຸຂະພາບດີ
- ການຍະບຳບັດ, ວາຈາ/ພາສາບຳບັດ ແລະ ກິດຈະກຳບຳບັດ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ການບໍລິການສຸຂະພາບຢູ່ເຮືອນ, ເຊິ່ງລວມທັງເຄື່ອງມື, ອຸປະກອນທາງການແພດ ແລະ ເວດຊະພັນຕ່າງໆ
- ການປິ່ນປົວບັນຫາການເບິ່ງເຫັນ, ລວມທັງແວ່ນຕາ
- ການປິ່ນປົວບັນຫາການໄດ້ຍິນ, ລວມທັງການໃສ່ເຄື່ອງຊ່ວຍຟັງ ເມື່ອພວກມັນບໍ່ໄດ້ຮັບການຄຸ້ມຄອງໂດຍ CCS
- ການປິ່ນປົວສຸຂະພາບພຶດຕິກຳສຳລັບຄວາມຜິດປົກກະຕິດ້ານອໍທິສຕິກຕ່າງໆ ແລະ ຄວາມພິການດ້ານພັດທະນາການອື່ນໆ
- ການຈັດການກໍລະນີ ແລະ ສຸຂະສຶກສາ
- ການຜ່າຕັດປົວແປງຄືນໃໝ່, ເຊິ່ງແມ່ນການຜ່າຕັດເພື່ອແກ້ໄຂ ຫຼື ສ້ອມແປງໂຄງສ້າງທີ່ຜິດປົກກະຕິຂອງຮ່າງກາຍທີ່ເກີດຈາກຄວາມບົກພ່ອງແຕ່ກຳເນີດ, ຄວາມຜິດປົກກະຕິທາງພັດທະນາການ, ການບາດເຈັບ, ການຕິດເຊື້ອ, ຊຶ້ນປ່ຽ ຫຼື ພະຍາດ ເພື່ອປັບປຸງໜ້າທີ່ການ ຫຼື ສ້າງຮູບຮ່າງປົກກະຕິ

ການກວດສານກົ່ວໃນເລືອດ

ເດັກນ້ອຍທຸກຄົນທີ່ລົງທະບຽນໃນ Anthem ຄວນໄດ້ຮັບການກວດສານກົ່ວໃນເລືອດໃນຊ່ວງອາຍຸ 12 ແລະ 24 ເດືອນ ຫຼື ລະຫວ່າງອາຍຸ 36 ແລະ 72 ເດືອນ ຖ້າຫາກພວກເຂົາບໍ່ໄດ້ຮັບການກວດກ່ອນໜ້ານີ້. ນອກຈາກນັ້ນ ເດັກກໍຍັງຄວນໄດ້ຮັບການກວດເມື່ອໃດກໍຕາມທີ່ທ່ານໝໍເຊື່ອວ່າການປ່ຽນແປງຊີວິດໄດ້ເຮັດໃຫ້ເດັກຕົກຢູ່ໃນຄວາມສ່ຽງ.

ການຊ່ວຍໃຫ້ໄດ້ຮັບການດູແລເພື່ອຄວາມສະຫວັດດີພາບຂອງເດັກນ້ອຍ ແລະ ໄວໜຸ່ມ

Anthem ຈະຊ່ວຍໃຫ້ສະມາຊິກທີ່ມີອາຍຸຕ່ຳກວ່າ 21 ປີ ແລະ ຄອບຄົວຂອງພວກເຂົາໄດ້ຮັບການບໍລິການຕາມຄວາມຕ້ອງການ. ປະສານງານການດູແລຂອງ Anthem ຈະ ສາມາດ:

- ບອກທ່ານກ່ຽວກັບການບໍລິການທີ່ມີຢູ່
- ຊ່ວຍຊອກຫາຜູ້ໃຫ້ບໍລິການເຄືອຂ່າຍ ຫຼື ຜູ້ໃຫ້ບໍລິການນອກເຄືອຂ່າຍ, ເມື່ອຕ້ອງການ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ຊ່ວຍເຮັດການນັດໝາຍ
- ຈັດການຂົນສົ່ງທາງການແພດເພື່ອໃຫ້ເດັກນ້ອຍສາມາດ ໄປເຖິງການນັດໝາຍຂອງພວກເຂົາ
- ຊ່ວຍປະສານງານການດູແລສຳລັບການບໍລິການທີ່ມີໃຫ້ຜ່ານ ຄ່າທຳນຽມສຳລັບການບໍລິການ (FFS) Medi-Cal ເຊັ່ນ:
  - ການບໍລິການປິ່ນປົວ ແລະ ການຟື້ນຟູສຳລັບ ສຸຂະພາບຈິດ ແລະ ພາວະຜິດປົກກະຕິຈາກການນຳ ໃຊ້ສານເສບຕິດ
  - ການປິ່ນປົວສຳລັບບັນຫາດ້ານທັນຕະກຳ, ລວມທັງ ການດັດແຂ້ວ

ການບໍລິການອື່ນໆທີ່ທ່ານສາມາດໄດ້ຮັບຜ່ານ ຄ່າທຳນຽມ ສຳລັບການບໍລິການ (FFS) Medi-Cal ຫຼື ໂຄງການອື່ນໆ

ການກວດສຸຂະພາບແຂ້ວ

ຮັກສາເຫືອກຂອງລູກໃຫ້ສະອາດໂດຍການເຊັດເຫືອກຄ່ອຍໆ ດ້ວຍຜ້າເຊັດທຸກໆມື້. ໃນເວລາປະມານສີ່ຫາຫົກເດືອນ, “ການ

ປ່ຽງຂອງແຂ້ວ" ຈະເລີ່ມຂຶ້ນເມື່ອແຂ້ວນ້ຳນົມເດັກເລີ່ມອອກມາ. ທ່ານຄວນເຮັດການນັດໝາຍສຳລັບການເຂົ້າພົບດ້ານທັນຕະກຳສຳລັບລູກຂອງທ່ານທັນທີທີ່ແຂ້ວເຫຼັ້ມທຳອິດອອກມາ ຫຼື ຄົບຮອບວັນເກີດປີທຳອິດຂອງພວກເຂົາ, ແລ້ວແຕ່ວ່າອັນໃດຮອດກ່ອນ.

ການບໍລິການດ້ານທັນຕະກຳຂອງ Medi-Cal ຕໍ່ໄປນີ້ແມ່ນ ບໍລິການບໍ່ເສຍຄ່າ ຫຼື ມີຄ່າໃຊ້ຈ່າຍຕ່ຳ ສຳລັບ:

ເດັກນ້ອຍອາຍຸ 1 ຫາ 4 ປີ

- ການເຂົ້າພົບດ້ານ ທຳຕະກຳທຳອິດ ຂອງເດັກ
- ການກວດແຂ້ວຄັ້ງທຳ ອິດຂອງເດັກ
- ກວດແຂ້ວ (ທຸກໆ 6 ເດືອນ ແລະ ອາດຈະ ເລື້ອຍກວ່ານັ້ນ)
- ການຊ່ອງລັງສີ
- ອະນາໄມແຂ້ວ (ທຸກໆ 6 ເດືອນ ແລະ ອາດຈະ ເລື້ອຍກວ່ານັ້ນ)
- ເຄືອບຟູອໍໄຮ (ທຸກໆ 6 ເດືອນ ແລະ ອາດຈະ ເລື້ອຍກວ່ານັ້ນ)

- ການເສີມຟູອໍໄຣຊ່ອງ ປາກ ເລີ່ມແຕ່ອາຍຸ 6 ເດືອນ ສຳລັບເດັກທີ່ ຂາດສານຟູອໍໄຣ
- ການອັດແຂ້ວ
- ການຖອນແຂ້ວ (ຫຼົ້ກແຂ້ວ)
- ການບໍລິການທັນຕະ ກຳສຸກເສີນ
- *ການລະງັບປະສາດ (ຖ້າມີຄວາມຈຳເປັນ ທາງການແພດ)

ເດັກນ້ອຍອາຍຸ 5-12 ປີ

- ກວດແຂ້ວ (ທຸກໆ 6 ເດືອນ ແລະ ອາດຈະ ເລື້ອຍກວ່ານັ້ນ)
- ການຊ່ອງລັງສີ
- ການເຄືອບຟູອໍໄຣ (ທຸກໆ 6 ເດືອນ, ແລະ ອາດຈະເລື້ອຍກວ່ານັ້ນ)
- ການອະນາໄມແຂ້ວ (ທຸກໆ 6 ເດືອນ ແລະ ອ າດຈະເລື້ອຍກວ່ານັ້ນ)ກ ານອະນາໄມແຂ້ວ (ທຸກ ໆ 6 ເດືອນ ແລະ ອາດ ຈະເລື້ອຍກວ່ານັ້ນ)
- ການເຄືອບແຂ້ວກົກ
- ການອັດແຂ້ວ

- ຮ່ອງຮາກແຂ້ວ
- ການຖອນແຂ້ວ (ຫຼົ້ກແຂ້ວ)
- ການບໍລິການທັນຕະກຳສຸກເສີນ *ການລະງັບປະສາດ (ຖ້າມີຄວາມຈຳເປັນທາງການແພດ)

ເດັກນ້ອຍອາຍຸ 13-20 ປີ

- ກວດແຂ້ວ (ທຸກໆ 6 ເດືອນ ແລະ ອາດຈະເລື້ອຍກວ່ານັ້ນ)
- ການຊ່ອງລັງສີ
- ການເຄືອບຟູອໍໄຣ (ທຸກໆ 6 ເດືອນ, ແລະ ອາດຈະເລື້ອຍກວ່ານັ້ນ)
- ອະນາໄມແຂ້ວ (ທຸກໆ 6 ເດືອນ ແລະ ອາດຈະເລື້ອຍກວ່ານັ້ນ)
- ການດັດແຂ້ວ (ຈັດຟັນ) ສຳລັບຜູ້ທີ່ມີເງື່ອນໄຂ
- ການອັດແຂ້ວ
- ການຄອບຟັນ
- ຮ່ອງຮາກແຂ້ວ
- ການຖອນແຂ້ວ (ຫຼົ້ກແຂ້ວ)
- ການລະງັບປະສາດ ສຳລັບການບໍລິການ ທັນຕະກຳສຸກເສີນ (ຖ້າມີຄວາມຈຳເປັນທາ ງການແພດ)

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

*ຜູ້ໃຫ້ບໍລິການຄວນພິຈາລະນາການລະງັບປະສາດ ແລະ ການວາງຢາມົນທົ່ວໄປ ເມື່ອພວກເຂົາຕັດສິນໃຈ ແລະ ມີເອກະສານວ່າຍ້ອນຫຍັງການວາງຢາລະງັບສະເພາະທີ່ ຈຶ່ງບໍ່ເໝາະສົມ ຫຼື ມີຂໍ້ຫ້າມ ແລະ ການປິ່ນປົວແຂ້ວແມ່ນໄດ້ຮັບການອະນຸມັດລ່ວງໜ້າ ຫຼື ບໍ່ຈຳເປັນຕ້ອງມີການອະນຸມັດລ່ວງໜ້າ (ການຂໍອະນຸຍາດລ່ວງໜ້າ).

ນີ້ແມ່ນເຫດຜົນບາງຢ່າງທີ່ບໍ່ສາມາດໃຊ້ຢາລະງັບປະສາດສະເພາະທີ່ໄດ້ ແລະ ອາດຈະມີການໃຊ້ຢາລະງັບ ຫຼື ຢາມົນທົ່ວໄປແທນ:

- ສະພາວະທາງຮ່າງກາຍ, ພຶດຕິກຳ, ພັດທະນາການ ຫຼື ອາລົມ ກີດກັນຄົນເຈັບຈາກການຕອບສະໜອງຕໍ່ຄວາມພະຍາຍາມຂອງຜູ້ໃຫ້ບໍລິການໃນການດຳເນີນການປິ່ນປົວ
- ຂັ້ນຕອນການຟື້ນຟູ ຫຼື ການຜ່າຕັດຂະໜາດໃຫຍ່
- ເດັກທີ່ບໍ່ຮ່ວມມື
- ການຕິດເຊື້ອແບບກະທັນຫັນຢູ່ບ່ອນສັກຢາ

- ຄວາມລົ້ມແຫຼວໃນການວາງຢາຊາສະເພາະທີ່ ເພື່ອຄວບຄຸມຄວາມເຈັດປວດ

ຖ້າທ່ານມີຄຳຖາມ ຫຼື ຕ້ອງການທີ່ຈະສຶກສາເພີ່ມຕື່ມ ກ່ຽວກັບການບໍລິການດ້ານທັນຕະກຳ, ໃຫ້ໂທຫາ ໂຄງການທັນຕະກຳ ຂອງ Medi-Cal ທີ່ເບີ **1-800-322-6384 (TTY 1-800-735-2922 ຫຼື 711)**. ຫຼື ໄປທີ່ https://smilecalifornia.org/.

ການບໍລິການສົ່ງຕໍ່ໄປຍັງການໃຫ້ຄວາມຮູ້ເພື່ອເປັນການປ້ອງກັນເພີ່ມຕື່ມ

ຖ້າທ່ານເປັນຫ່ວງວ່າລູກຫຼານຂອງທ່ານຈະມີສ່ວນຮ່ວມ ຫຼື ຮຽນຮູ້ທີ່ໂຮງຮຽນໄດ້ຍາກ, ໃຫ້ໂອ້ລົມກັບທ່ານໝໍຜູ້ດູແລຫຼັກຂອງລູກຂອງທ່ານ, ລວມທັງຄູ ຫຼື ຜູ້ບໍລິຫານໃນໂຮງຮຽນ. ນອກຈາກສິດທິປະໂຫຍດທາງການແພດທີ່ຄຸ້ມຄອງໂດຍ Anthem ແລ້ວ, ຍັງມີບໍລິການທີ່ໂຮງຮຽນເຊິ່ງຕ້ອງໄດ້ຈັດກຽມເພື່ອຊ່ວຍໃຫ້ລູກຫຼານຂອງທ່ານໄດ້ຮຽນຮູ້ ແລະ ບໍ່ນຳຫຼັງໝູ່. ການບໍລິການທີ່ອາດມີໃຫ້ເພື່ອຊ່ວຍໃຫ້ລູກຫຼານຂອງທ່ານໃນການຮຽນຮູ້ ປະກອບມີ:

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ການບໍລິການການ ປາກເວົ້າ ແລະ ພາສາ
- ການບໍລິການທາງ ດ້ານຈິດຕະວິທະຍາ
- ການຍະບຳບັດ
- ກິດຈະກຳບຳບັດ
- ເຕັກໂນໂລຊີການ ຊ່ວຍເຫຼືອ
- ການບໍລິການສັງຄົມ ສົ່ງເຄາະ
- ການບໍລິການໃຫ້ ຄຳປຶກສາ
- ການບໍລິການ ພະຍາບານໂຮງຮຽນ
- ການຂົນສົ່ງໄປ ແລະ ກັບຈາກໂຮງຮຽນ

ການບໍລິການເຫຼົ່ານີ້ແມ່ນສະໜອງ ແລະ ຈ່າຍໃຫ້ໂດຍພະແນກ ສຶກສາທິການແຫ່ງລັດ California. ຄຽງຄູ່ກັບທ່ານໝໍ ແລະ ຄູສອນຂອງລູກທ່ານນັ້ນ, ທ່ານຈະສາມາດວາງແຜນແບບ ກຳນົດເອງທີ່ຈະຊ່ວຍລູກຂອງທ່ານໄດ້ດີທີ່ສຸດ.

---

6. ການລາຍງານ ແລະ ການແກ້ໄຂບັນຫາ

ການລາຍງານ ແລະ ການແກ້ໄຂບັນຫາມີສອງວິທີ ຄື:

- ໃຊ້**ການຮ້ອງທຸກ (ການຮ້ອງຮຽນ)** ໃນເວລາທີ່ທ່ານມີບັນຫາ ຫຼື ບໍ່ພໍໃຈກັບ Anthem ຫຼື ຜູ້ໃຫ້ບໍລິການ ຫຼື ກັບການດູແລສຸຂະພາບ ຫຼື ການປິ່ນປົວ ທີ່ທ່ານໄດ້ຮັບຈາກຜູ້ໃຫ້ບໍລິການ.
- ໃຊ້**ການອຸທອນ** ໃນເວລາທີ່ທ່ານບໍ່ເຫັນດີກັບການຕັດສິນຂອງ Anthem ເພື່ອປ່ຽນແປງບໍລິການຂອງທ່ານ ຫຼື ບໍ່ຄຸ້ມຄອງການບໍລິການດັ່ງກ່າວ.

ທ່ານມີສິດຍື່ນຄຳຮ້ອງຮຽນ ແລະ ການອຸທອນກັບ Anthem ເພື່ອແ
ຈ້ງໃຫ້ພວກເຮົາຮູ້ກ່ຽວກັບບັນຫາຂອງທ່ານ. ສິ່ງນີ້ບໍ່ໄດ້ຕັດຮອນສິດ
ທິ ແລະ ວິທີແກ້ໄຂທາງກົດໝາຍໃດໆຂອງທ່ານ. ພວກເຮົາຈະບໍ່ເ

ລິ້ອກປະຕິບັດ ຫຼື ຕອບໂຕ້ທ່ານ, ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດ ຫຼື ຜູ້ໃຫ້ບໍລິການ ສຳລັບການຍື່ນຄຳຮ້ອງທຸກຕໍ່ພວກເຮົາ ຫຼື ການລາຍງານບັນຫາຕ່າງໆ. ການແຈ້ງໃຫ້ພວກເຮົາຮູ້ກ່ຽວກັບບັນຫາຂອງທ່ານຈະຊ່ວຍພວກເຮົາປັບປຸງການດູແລສະມາຊິກທຸກຄົນ.

ທ່ານຄວນຕິດຕໍ່ຫາ Anthem ກ່ອນສະເໝີ ເພື່ອແຈ້ງໃຫ້ພວກເຮົາຮູ້ກ່ຽວກັບບັນຫາຂອງທ່ານ. ໂທຫາພວກເຮົາລະຫວ່າງ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ ທີ່ເບີ **1-800-407-4627 (TTY 711)**. ບອກພວກເຮົາກ່ຽວກັບບັນຫາຂອງທ່ານ.

ຖ້າຄຳຮ້ອງຮຽນ ຫຼື ການອຸທອນຂອງທ່ານຍັງບໍ່ໄດ້ຮັບການແກ້ໄຂ ຫຼັງຈາກຜ່ານໄປ 30 ວັນ ຫຼື ທ່ານບໍ່ພໍໃຈກັບຜົນໄດ້ຮັບ, ທ່ານສາມາດໂທຫາ ພະແນກການດູແລສຸຂະພາບ ແບບມີການຄຸ້ມຄອງຂອງລັດຄາລິຟໍເນຍ (DMHC) ໄດ້. ຂໍໃຫ້ພະພແນກກວດສອບຄຳຮ້ອງທຸກຂອງທ່ານ ຫຼື ດຳເນີນການ ການກວດສອບທາງການແພດອິດສະຫຼະ (IMR). ຖ້າເລື່ອງຂອງທ່ານເປັນເລື່ອງຮີບດ່ວນ ເຊັ່ນວ່າ ເລື່ອງທີ່ກ່ຽວຂ້ອງກັບໄພຂົ່ມຂູ່ຮ້າຍແຮງ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຕໍ່ສຸຂະພາບຂອງທ່ານ, ທ່ານສາມາດຈະໂທຫາ DMHC ໄດ້ໃນ ທັນທີໂດຍບໍ່ຕ້ອງຍື່ນຄຳຮ້ອງທຸກ ຫຼື ການອຸທອນກັບ Anthem. ທ່ານສາມາດໂທຫາ DMHC ໄດ້ໂດຍບໍ່ເສຍຄ່າທີ່ເບີ **1-888-466-2219 (TTY 1-877-688-9891)**. ຫຼື ໄປທີ່: https://www.dmhc.ca.gov/.

ນອກຈາກນັ້ນ ແລ້ວ Ombudsman ສຳລັບການດູແລແບບມີການຄຸ້ມຄອງຂອງ Medi-Cal ຂອງ ພະແນກບໍລິການການດູແລສຸຂະພາບຂອງລັດ California (DHCS) ກໍຍັງສາມາດຊ່ວຍໄດ້ອີກດ້ວຍ. ພວກເຂົາສາມາດຊ່ວຍໄດ້ ຖ້າທ່ານມີບັນຫາໃນການເຂົ້າຮ່ວມ, ປ່ຽນແປງ ຫຼື ອອກຈາກແຜນປະກັນສຸຂະພາບ. ນອກຈາກນັ້ນແລ້ວ, ພວກເຂົາກໍຍັງສາມາດຊ່ວຍໄດ້ອີກດ້ວຍ ຖ້າທ່ານຍົກຍ້າຍໄປ ແລະ ມີບັນຫາໃນການໂອນ Medi-Cal ຂອງທ່ານໄປຍັງຄາວຕີ້ໃໝ່ຂອງທ່ານ. ທ່ານສາມາດໂທຫາ Ombudsman ໄດ້ແຕ່ວັນຈັນ ເຖິງ ວັນສຸກ, ເວລາ 8 ໂມງ ເຊົ້າ ຫາ 5 ໂມງແລງ ທີ່ເບີ **1-888-452-8609**. ການໂທ ແມ່ນບໍ່ເສຍຄ່າ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ນອກຈາກນັ້ນແລ້ວ ທ່ານກໍຍັງສາມາດຍື່ນຄຳຮ້ອງຮຽນຕໍ່ຫ້ອງການຄຸ້ມຄອງການມີສິດໄດ້ຮັບຂອງຄາວຕີ້ ກ່ຽວກັບການມີສິດໄດ້ຮັບ Medi-Cal ຂອງທ່ານໄດ້ອີກດ້ວຍ. ຖ້າທ່ານບໍ່ແນ່ໃຈວ່າທ່ານຈະສາມາດຍື່ນຄຳຮ້ອງທຸກຂອງທ່ານຕໍ່ໃຜ, ໃຫ້ໂທຫາເບີ **1-800-407-4627 (TTY 711)**.

ເພື່ອລາຍງານຂໍ້ມູນທີ່ບໍ່ຖືກຕ້ອງກ່ຽວກັບການປະກັນສຸຂະພາບຂອງທ່ານ, ໃຫ້ໂທຫາ Medi-Cal ວັນຈັນ ເຖິງ ວັນສຸກ, ແຕ່ 8 ໂມງເຊົ້າຫາ 5 ໂມງແລງ ທີ່ເບີ **1-800-541-5555**.

ການຮ້ອງທຸກ

ການຮ້ອງທຸກ (ການຮ້ອງຮຽນ) ແມ່ນໃນເວລາທີ່ທ່ານມີບັນຫາ ຫຼື ບໍ່ພໍໃຈກັບການບໍລິການທີ່ທ່ານໄດ້ຮັບຈາກ Anthem ຫຼື ຜູ້ໃຫ້ບໍລິການ. ບໍ່ມີຂີດຈຳກັດເວລາໃນການຍື່ນຄຳຮ້ອງທຸກ. ທ່ານສາມາດຍື່ນຄຳຮ້ອງທຸກຕໍ່ Anthem ໄດ້ທຸກເວລາ ທາງໂທລະສັບ, ທາງຈົດໝາຍ ຫຼື ທາງອອນລາຍ. ນອກຈາກນັ້ນ ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດ ຫຼື ຜູ້ໃຫ້ບໍລິການຂອງທ່ານ ກໍຍັງສາມາດຍື່ນຄຳຮ້ອງທຸກໃຫ້ທ່ານໄດ້ອີດດ້ວຍ ໂດຍໄດ້ຮັບການອະນຸຍາດຂອງທ່ານ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- **ທາງໂທລະສັບ:** ໂທຫາ Anthem ທີ່ເບີ **1-800-407-4627 (TTY 711)** ລະຫວ່າງ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງ ເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ໃຫ້ບອກໝາຍ ເລກບັດ ID ແຜນປະກັນສຸຂະພາບຂອງທ່ານ, ຊື່ຂອງທ່ານ ແລະ ເຫດຜົນສຳລັບການຮ້ອງທຸກຂອງທ່ານ.
- **ທາງໄປສະນີ:** ໂທຫາ Anthem ທີ່ເບີ **1-800-407-4627 (TTY 711)** ແລະ ຂໍໃຫ້ສົ່ງແບບຟອມມາໃຫ້ທ່ານ. ເມື່ອ ທ່ານໄດ້ຮັບແບບຟອມແລ້ວ, ໃຫ້ຕື່ມຂໍ້ມູນໃສ່ໃຫ້ຄົບຖ້ວນ. ຢ່າລືມຂຽນຊື່, ໝາຍເລກບັດ ID ແຜນປະກັນສຸຂະພາບ ຂອງທ່ານ ແລະ ເຫດຜົນສຳລັບການຮ້ອງທຸກຂອງທ່ານ. ບອກໃຫ້ພວກເຮົາຮູ້ວ່າເກີດຫຍັງຂຶ້ນ ແລະ ພວກເຮົາຈະ ສາມາດຊ່ວຍທ່ານໄດ້ແນວໃດ.

  ສົ່ງແບບຟອມທາງໄປສະນີຫາ:
  Attn: Grievance Coordinator
  Anthem Blue Cross
  P.O. Box 60007
  Los Angeles, CA 90060-0007

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຫ້ອງການທ່ານໝໍຂອງທ່ານຈະມີແບບຟອມການຮ້ອງທຸກໃ ຫ້ທ່ານ.

- **ທາງອອນລາຍ:** ໄປທີ່ເວັບໄຊຂອງ Anthem ທີ່ **anthem.com/ca/medi-cal**.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຍື່ນຄຳຮ້ອງທຸກ, ພວກເຮົາຈະສາມາດຊ່ວຍທ່ານໄດ້. ພວກເຮົາສາມາດໃຫ້ການບໍລິການດ້ານພາສາໂດຍບໍ່ເສຍຄ່າແກ່ທ່ານ. ໂທຫາເບີ **1-800-407-4627 (TTY 711)**.

ພາຍໃນ 5 ວັນຕາມປະຕິທິນນັບແຕ່ໄດ້ຮັບຄຳຮ້ອງທຸກຂອງທ່ານ, ພວກເຮົາຈະສົ່ງຈົດໝາຍແຈ້ງໃຫ້ທ່ານຮູ້ວ່າພວກເຮົາໄດ້ຮັບແລ້ວ. ພາຍໃນ 30 ວັນ, ພວກເຮົາຈະສົ່ງຈົດໝາຍອີກສະບັບໜຶ່ງໃຫ້ທ່ານ ເຊິ່ງບອກໃຫ້ທ່ານຮູ້ວ່າພວກເຮົາແກ້ໄຂບັນຫາຂອງທ່ານແນວໃດ. ຖ້າທ່ານ�โທຫາ Anthem ກ່ຽວກັບການຮ້ອງທຸກທີ່ບໍ່ກ່ຽວກັບການຄຸ້ມຄອງການດູແລສຸຂະພາບ, ຄວາມຈຳເປັນດ້ານການແພດ ຫຼື ການປິ່ນປົວທີ່ທົດລອງ ຫຼື ຕິດຕາມຢູ່ ແລະ ການຮ້ອງທຸກຂອງທ່ານໄດ້ຮັບການແກ້ໄຂໃນຕອນທ້າຍຂອງມື້ເຮັດວຽກຖັດໄປ, ທ່ານອາດຈະບໍ່ໄດ້ຮັບຈົດໝາຍ.

? �โທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການ�โທແມ່ນບໍ່ເສຍຄ່າ. ຫຼື �โທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານມີເລື່ອງຮີບດ່ວນທີ່ກ່ຽວຂ້ອງກັບບັນຫາສຸຂະພາບທີ່ຮ້າຍແຮງ, ພວກເຮົາຈະເລີ່ມການກວດສອບໂດຍດ່ວນ (ວ່ອງໄວ). ພວກເຮົາຈະໃຫ້ຄຳຕັດສິນພາຍໃນ 72 ຊົ່ວໂມງ. ຫາກຕ້ອງການຂໍຮັບການກວດສອບດ່ວນ, ໃຫ້ໂທຫາພວກເຮົາທີ່ເບີ **1-800-407-4627 (TTY 711)**.

ພາຍໃນ 72 ຊົ່ວໂມງຫຼັງຈາກໄດ້ຮັບຄຳຮ້ອງທຸກຂອງທ່ານ, ພວກເຮົາຈະຕັດສິນໃຈວ່າພວກເຮົາຈະຄົ້ນຄວ້າຄຳຮ້ອງທຸກຂອງທ່ານຄືແນວໃດ ແລະ ພວກເຮົາຈະຄົ້ນຄວ້າໂດຍໄວ ຫຼື ບໍ່. ຖ້າພວກເຫັນວ່າ ພວກຈະບໍ່ຄົ້ນຄວ້າຄຳຮ້ອງທຸກຂອງທ່ານໂດຍໄວ, ພວກເຮົາຈະແຈ້ງໃຫ້ທ່ານຮູ້ວ່າ ພວກເຮົາຈະແກ້ໄຂຄຳຮ້ອງທຸກຂອງທ່ານພາຍໃນ 30 ວັນ. ທ່ານສາມາດຕິດຕໍ່ DMHC ໂດຍກົງໄດ້ດ້ວຍເຫດຜົນໃດກໍຕາມ, ລວມທັງຖ້າທ່ານເຊື່ອວ່າຄວາມກັງວົນຂອງທ່ານມີຄຸນສົມບັດສຳລັບການກວດສອບດ່ວນ ຫຼື Anthem ບໍ່ຕອບກັບຫາທ່ານພາຍໃນໄລຍະເວລາ 72 ຊົ່ວໂມງ.

ຄຳຮ້ອງທຸກທີ່ກ່ຽວຂ້ອງກັບສິດຜົນປະໂຫຍດຂອງຮ້ານຂາຍຢາຂອງ Medi-Cal Rx ແມ່ນບໍ່ຂຶ້ນກັບຂະບວນການຮ້ອງທຸກຂອງ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

Anthem ຫຼື ບໍ່ມີສິດໄດ້ຮັບການກວດສອບດ້ານການແພດແບບອິດສະຫຼະ. ບັນດາສະມາຊິກສາມາດຍື່ນຄຳຮ້ອງທຸກກ່ຽວກັບສິດທິປະໂຫຍດສຳລັບຮ້ານຂາຍຢາຂອງ Medi-Cal Rx ໄດ້ໂດຍການໂທຫາເບີ **1-800-977-2273 (TTY 1-800-977-2273) ແລະ ກົດ 7 ຫຼື 711**. ຫຼື ໄປທີ່ https://medi-calrx.dhcs.ca.gov/home/.

ການຮ້ອງທຸກທີ່ກ່ຽວຂ້ອງກັບສິດທິປະໂຫຍດຮ້ານຂາຍຢາທີ່ບໍ່ຂຶ້ນກັບ Medi-Cal Rx ອາດຈະມີສິດໄດ້ຮັບການກວດສອບດ້ານການແພດແບບອິດສະຫຼະ. ເບີໂທລະສັບໂທຟຣີຂອງ DMHC ແມ່ນ **1-888-466-2219 (TTY 1-877-688-9891)**. ທ່ານສາມາດຂອກຫາແບບຟອມການກວດສອບດ້ານການແພດແບບອິດສະຫຼະ/ການຮ້ອງທຸກ ແລະ ຄຳແນະນຳທາງຕ່າງໆທາງອອນລາຍໃນເວັບໄຊຂອງ DMHC ທີ່: https://www.dmhc.ca.gov/.

ການອຸທອນ

ການອຸທອນແມ່ນແຕກຕ່າງຈາກການຮ້ອງທຸກ. ການອຸທອນແມ່ນການຮ້ອງຂໍໃຫ້ພວກເຮົາທົບທວນຄືນ ແລະ ປ່ຽນແປງການຕັດສິນ

ໃຈທີ່ພວກເຮົາໄດ້ຕັດສິນໄປແລ້ວ ກ່ຽວກັບການບໍລິການຂອງທ່ານ. ຖ້າພວກເຮົາສົ່ງຈົດໝາຍ ແຈ້ງການກ່ຽວກັບການດຳເນີນການ (NOA) ໄປແຈ້ງບອກໃຫ້ທ່ານຮູ້ວ່າພວກເຮົາຈະປະຕິເສດ, ຖ່ວງເວລາ, ປ່ຽນ ຫຼື ສິ້ນສຸດການບໍລິການ ແລະ ທ່ານບໍ່ເຫັນດີນຳຄຳຕັດສິນຂອງພວກເຮົາ, ທ່ານສາມາດຍື່ນການອຸທອນໄດ້. ນອກຈາກນັ້ນແລ້ວ, ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດ ຫຼື ຜູ້ໃຫ້ບໍລິການອື່ນໆຂອງທ່ານ ກໍຍັງສາມາດຍື່ນການອຸທອນໃຫ້ທ່ານໄດ້ອີກດ້ວຍ ໂດຍມີການອະນຸຍາດເປັນລາຍລັກອັກສອນຈາກທ່ານ.

ທ່ານຕ້ອງຍື່ນຄຳອຸທອນພາຍໃນ 60 ວັນ ນັບຈາກວັນທີ່ໃນ NOA ທີ່ທ່ານໄດ້ຮັບຈາກພວກເຮົາ. ຖ້າພວກເຮົາຕັດສິນໃຈທີ່ຈະຫຼຸດ, ໂຈະ ຫຼື ຢຸດການບໍລິການທີ່ທ່ານໄດ້ຮັບໃນຕອນນີ້, ທ່ານສາມາດສືບຕໍ່ຮັບການບໍລິການນັ້ນໃນຂະນະທີ່ທ່ານລໍຖ້າການອຸທອນຂອງທ່ານເພື່ອຕັດສິນ. ນີ້ແມ່ນເອີ້ນວ່າ: ການຊ່ວຍເຫຼືອທີ່ອອກໃຫ້ລະຫວ່າງລໍຖ້າການດຳເນີນການ. ເພື່ອຮັບການຊ່ວຍເຫຼືອທີ່ອອກໃຫ້ລະຫວ່າງລໍຖ້າການດຳເນີນການ, ທ່ານຕ້ອງຍື່ນອຸທອນກັບພວກເຮົາພາຍໃນ 10 ມື້ນັບຈາກວັນທີ່ຢູ່ໃນ NOA ຫຼື ກ່ອນວັນທີທີ່

ພວກເຮົາບອກວ່າການບໍລິການຂອງທ່ານຈະຢຸດ, ແລ້ວແຕ່ວ່າ ອັນໃດເກີດຂຶ້ນຕາມຫຼັງ. ເມື່ອທ່ານຮ້ອງຂໍ ການຊ່ວຍເຫຼືອທີ່ອອກ ໃຫ້ລະຫວ່າງລໍຖ້າການດຳເນີນການ ພາຍໃຕ້ສະຖານະການເຫຼົ່າ ນີ້, ການບໍລິການຈະສືບຕໍ່.

ທ່ານສາມາດຍື່ນການອຸທອນທາງໂທລະສັບ, ທາງຈົດໝາຍ ຫຼື ທາງອອນລາຍໄດ້:

- **ທາງໂທລະສັບ:** ໂທຫາ Anthem ທີ່ເບີ **1-800-407-4627 (TTY 711)** ລະຫວ່າງ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ຂຽນຊື່, ໝາຍເລກບັດ ID ແຜນປະກັນສຸຂະພາບ ຂອງທ່ານ ແລະ ການບໍລິການທີ່ທ່ານຈະຂໍອຸທອນ.
- **ທາງໄປສະນີ:** ໂທຫາ Anthem ທີ່ເບີ **1-800-407-4627 (TTY 711)** ແລະ ຂໍໃຫ້ສົ່ງແບບຟອມມາໃຫ້ທ່ານ. ເມື່ອ ທ່ານໄດ້ຮັບແບບຟອມແລ້ວ, ໃຫ້ຕື່ມຂໍ້ມູນໃສ່ໃຫ້ຄົບຖ້ວນ. ຢ່າລືມຂຽນຊື່, ໝາຍເລກບັດ ID ແຜນປະກັນສຸຂະພາບ ຂອງທ່ານ ແລະ ການບໍລິການທີ່ທ່ານຈະຂໍອຸທອນ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

ສົ່ງແບບຟອມທາງໄປສະນີຫາ:

Attn: Grievance Coordinator
Anthem Blue Cross
P.O. Box 60007
Los Angeles, CA 90060-0007

ຫ້ອງການທ່ານໝໍຂອງທ່ານຈະມີແບບຟອມອຸທອນໃຫ້ທ່ານ.

- **ທາງອອນລາຍ:** ເຂົ້າໄປທີ່ເວັບໄຊຂອງ Anthem. ໄປທີ່ **anthem.com/ca/medi-cal**.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຍື່ນອຸທອນ ຫຼື ການຊ່ວຍເຫຼືອທີ່ອອກໃຫ້ລະຫວ່າງລໍຖ້າການດຳເນີນການ, ພວກເຮົາສາມາດຊ່ວຍທ່ານໄດ້. ພວກເຮົາສາມາດໃຫ້ການບໍລິການດ້ານພາສາໂດຍບໍ່ເສຍຄ່າແກ່ທ່ານ. ໂທຫາເບີ **1-800-407-4627 (TTY 711)**.

ພາຍໃນ 5 ວັນນັບແຕ່ໄດ້ຮັບຄຳຮ້ອງຂໍອຸທອນຂອງທ່ານ, ພວກເຮົາຈະສົ່ງຈົດໝາຍແຈ້ງໃຫ້ທ່ານຮູ້ວ່າພວກເຮົາໄດ້ຮັບແລ້ວ. ພາຍໃນ 30 ວັນ, ພວກເຮົາຈະບອກທ່ານກ່ຽວກັບການຕັດສິນການອຸທອນຂອງພວກເຮົາ ແລະ ສົ່ງຈົດໝາຍ ແຈ້ງການກ່ຽວ

ກັບການຕັດສິນຕໍ່ການອຸທອນ (NAR) ໄປໃຫ້ທ່ານ. ຖ້າພວກເຮົາບໍ່ໃຫ້ຄຳຕັດສິນອຸທອນຂອງພວກເຮົາແກ່ທ່ານພາຍໃນ 30 ວັນ, ທ່ານສາມາດຮ້ອງຂໍການໄຕ່ສວນຂອງລັດຈາກ ພະແນກບໍລິການສັງຄົມແຫ່ງລັດຄາລິຟໍເນຍ (CDSS) ແລະ ການກວດສອບດ້ານການແພດແບບອິດສະຫຼະ IMR ຈາກ DMHC ໄດ້. ແຕ່ຖ້າທ່ານຂໍຮັບການໄຕ່ສວນຂອງລັດກ່ອນ ແລະ ການໄຕ່ສວນໄດ້ເກີດຂຶ້ນແລ້ວ, ທ່ານຈະບໍ່ສາມາດຂໍ IMR ກັບ DMHC ໄດ້. ໃນກໍລະນີນີ້, ການໄຕ່ສວນຂອງລັດ ຈະເປັນການຕັດສິນສຸດທ້າຍ

ຖ້າທ່ານ ຫຼື ທ່ານໝໍຂອງທ່ານຕ້ອງການໃຫ້ພວກເຮົາເຮັດການຕັດສິນທີ່ວ່ອງໄວ ເນື່ອງຈາກເວລາທີ່ໃຊ້ໃນການຕັດສິນການອຸທອນຂອງທ່ານຈະເຮັດໃຫ້ຊີວິດ, ສຸຂະພາບ ຫຼື ຄວາມສາມາດໃນການເຮັດວຽກຕົກຢູ່ໃນອັນຕະລາຍ, ທ່ານສາມາດຂໍໃຫ້ມີການກວດສອບດ່ວນ (ໄວ) ໄດ້. ຫາກຕ້ອງການຂໍຮັບການກວດສອບດ່ວນ, ໃຫ້ໂທຫາເບີ **1-800-407-4627 (TTY 711)**. ພວກເຮົາຈະຕັດສິນໃຈພາຍໃນ 72 ຊົ່ວໂມງນັບຈາກເວລາໄດ້ຮັບການອຸທອນຂອງທ່ານ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ສິ່ງທີ່ຕ້ອງເຮັດຖ້າທ່ານບໍ່ເຫັນດີກັບຄຳຕັດສິນ ການອຸທອນ

ຖ້າທ່ານຮ້ອງຂໍອຸທອນ ແລະ ໄດ້ຮັບຈົດໝາຍ NAR ທີ່ແຈ້ງບອກທ່ານວ່າພວກເຮົາບໍ່ໄດ້ປ່ຽນແປງການຕັດສິນໃຈຂອງພວກເຮົາ ຫຼື ທ່ານບໍ່ເຄີຍໄດ້ຮັບຈົດໝາຍ NAR ເລີຍ ແລະ ໄດ້ການ 30 ວັນແລ້ວ, ທ່ານສາມາດ:

- ຂໍ**ການໄຕ່ສວນຂອງລັດ**ຈາກ ພະແນກບໍລິການສັງຄົມແຫ່ງລັດຄາລິຟໍເນຍ (CDSS) ແລະ ຜູ້ພິພາກສາຈະກວດສອບຄະດີຂອງທ່ານ. ໝາຍເລກໂທລະສັບໂທຟຣີຂອງCDSS ແມ່ນ **1-800-743-8525 (TTY 1-800-952-8349)**. ນອກຈາກນັ້ນ ທ່ານກໍຍັງສາມາດຮ້ອງຂໍການໄຕ່ສວນຂອງລັດໄດ້ທາງອອນລາຍອີກດ້ວຍ ທີ່ https://www.cdss.ca.gov.
- ຍື່ນ ແບບຟອມການກວດສອບທາງການແພດ ອິດສະຫຼະ/ແບບຟອມການຮ້ອງທຸກ ຕໍ່ ພະແນກການດູແລສຸຂະພາບແບບມີການຄຸ້ມຄອງ (DMHC) ເພື່ອ

ໃຫ້ທົບທວນຄຳຕັດສິນຂອງ Anthem. ຫຼື ຂໍ **ການກວດສອບທາງການແພດອິດສະຫຼະ (IMR)** ຈາກ DMHC. ຖ້າຄຳຮ້ອງທຸກຂອງທ່ານມີເງື່ອນໄຂໄດ້ຮັບຂະບວນການ ການກວດສອບທາງການແພດອິດສະຫຼະ (IMR) ຂອງ DMHC, ແພດຈາກພາຍນອກທີ່ບໍ່ແມ່ນສະມາຊິກຂອງ Anthem ຈະມາທົບທວນກໍລະນີຂອງທ່ານ ແລະ ລົງຄຳຕັດສິນທີ່ Anthem ຕ້ອງປະຕິບັດຕາມ. ໝາຍເລກໂທລະສັບໂທຟຣີຂອງ DMHC ແມ່ນ **1-888-466-2219 (TTY 1-877-688-9891)**. ທ່ານສາມາດຂອກທາແບບຟອມ ການກວດສອບທາງການແພດອິດສະຫຼະ/ແບບຟອມການຮ້ອງທຸກ ແລະ ຄຳແນະນຳທາງຕ່າງໆທາງອອນລາຍໃນເວັບໄຊຂອງ DMHC ທີ່: https://www.dmhc.ca.gov.

ທ່ານຈະບໍ່ຈຳເປັນຕ້ອງຈ່າຍເງິນສຳລັບການໄຕ່ສວນຂອງລັດ ຫຼື IMR.

ທ່ານມີສິດໄດ້ຮັບທັງການໄຕ່ສວນຂອງລັດ ແລະ IMR. ແຕ່ຖ້າທ່ານຂໍຮັບການໄຕ່ສວນຂອງລັດກ່ອນ ແລະ ການໄຕ່ສວນໄດ້

ເກີດຂຶ້ນແລ້ວ, ທ່ານຈະບໍ່ສາມາດຂໍ IMR ໄດ້ແລ້ວ. ໃນກໍລະນີນີ້, ການໄຕ່ສວນຂອງລັດ ຈະເປັນຄຳຕັດສິນຂັ້ນສຸດທ້າຍ.

ຫົວຂໍ້ຂ້າງລຸ່ມນີ້ມີຂໍ້ມູນເພີ່ມເຕີມກ່ຽວກັບວິທີການຮ້ອງຂໍການໄຕ່ສວນຂອງລັດ ແລະ IMR.

ການຮ້ອງທຸກ ແລະ ການອຸທອນທີ່ກ່ຽວຂ້ອງກັບສິດທິປະໂຫຍດຮ້ານຂາຍຢາຂອງ Medi-Cal Rx ແມ່ນບໍ່ໄດ້ຮັບການຈັດການໂດຍ Anthem. ບັນດາສະມາຊິກສາມາດຍື່ນຄຳຮ້ອງທຸກ ແລະ ການອຸທອນກ່ຽວກັບສິດທິປະໂຫຍດສຳລັບຮ້ານຂາຍຢາຂອງ Medi-Cal Rx ໄດ້ໂດຍການໂທຫາເບີ **1-800-977-2273 (TTY 1-800-977-2273) ແລະ ກົດ 7 ຫ 711**. ການຮ້ອງທຸກ ແລະ ການອຸທອນທີ່ກ່ຽວຂ້ອງກັບສິດທິປະໂຫຍດຮ້ານຂາຍຢາທີ່ບໍ່ຂຶ້ນກັບ Medi-Cal Rx ອາດຈະມີສິດໄດ້ຮັບການກວດສອບດ້ານການແພດແບບອິດສະຫຼະ (IMR).

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ຖ້າທ່ານບໍ່ເຫັນດີກັບການຕັດສິນໃຈທີ່ກ່ຽວຂ້ອງກັບສິດທິປະໂຫຍດຮ້ານຂາຍຢາຂອງ Medi-Cal Rx ຂອງທ່ານ, ທ່ານສາມາດຂໍການໄຕ່ສວນຂອງລັດໄດ້. ທ່ານບໍ່ສາມາດຂໍ DMHC ສໍາລັບ IMR ສໍາລັບການຕັດສິນກ່ຽວກັບສິດທິປະໂຫຍດຮ້ານຂາຍຢາຂອງ Medi-Cal Rx.

ການຮ້ອງທຸກ ແລະ ການກວດສອບທາງການແພດອິດສະຫຼະ (IMR) ຕໍ່ ພະແນກການເບິ່ງແຍງດູແລສຸຂະພາບແບບມີການຄຸ້ມຄອງ (DMHC)

IMR ແມ່ນເມື່ອທ່ານໝໍຈາກພາຍນອກທີ່ບໍ່ກ່ຽວຂ້ອງກັບແຜນປະກັນສຸຂະພາບຂອງທ່ານ ຈະມາກວດກາເບິ່ງກໍລະນີຂອງທ່ານ. ຖ້າທ່ານຕ້ອງການ IMR, ທໍາອິດ ທ່ານຈະຕ້ອງຍື່ນອຸທອນກັບ Anthem ກ່ອນ. ຖ້າທ່ານບໍ່ໄດ້ຮັບແຈ້ງຈາກແຜນສຸຂະພາບຂອງທ່ານພາຍໃນ 30 ວັນປະຕິທິນ ຫຼື ຖ້າທ່ານບໍ່ພໍໃຈກັບການຕັດສິນໃຈຂອງແຜນສຸຂະພາບຂອງທ່ານ, ແລ້ວທ່ານສາມາດຮ້ອງຂໍ IMR

ໄດ້. ທ່ານຕ້ອງຮ້ອງຂໍ IMR ພາຍໃນ 6 ເດືອນ ນັບຈາກວັນທີ່ໃນ ແຈ້ງການທີ່ບອກທ່ານກ່ຽວກັບການຕັດສິນການອຸທອນ, ແຕ່ວ່າ ທ່ານມີເວລາພຽງແຕ່ 120 ວັນເທົ່ານັ້ນ ໃນການຮ້ອງຂໍການໄຕ່ ສວນຂອງລັດ, ດັ່ງນັ້ນ ຖ້າທ່ານຕ້ອງການ IMR ແລະ ການໄຕ່ ສວນຂອງລັດ, ໃຫ້ຍື່ນຄຳຮ້ອງທຸກຂອງທ່ານທັນທີທີ່ທ່ານສາມາດ ເຮັດໄດ້. ຂໍ້ຄວນຈື່, ຖ້າທ່ານຂໍການໄຕ່ສວນຂອງລັດກ່ອນ ແລະ ການ ໄຕ່ສວນໄດ້ເກີດຂຶ້ນແລ້ວ, ທ່ານຈະບໍ່ສາມາດຂໍ IMR ໄດ້ແລ້ວ. ໃນ ກໍລະນີນີ້, ການໄຕ່ສວນຂອງລັດ ຈະເປັນຄຳຕັດສິນຂັ້ນສຸດທ້າຍ.

ທ່ານອາດຈະສາມາດໄດ້ຮັບ IMR ໃນທັນທີ ໂດຍບໍ່ຕ້ອງຍື່ນການ ອຸທອນຕໍ່ Anthem ກ່ອນກໍໄດ້. ນີ້ແມ່ນໃນກໍລະນີທີ່ຂໍ້ກັງວົນດ້ານ ສຸຂະພາບຂອງທ່ານເປັນເລື່ອງຮີບດ່ວນ ເຊັ່ນວ່າ: ເລື່ອງທີ່ເປັນ ໄພຂົ່ມຂູ່ຮ້າຍແຮງຕໍ່ສຸຂະພາບຂອງທ່ານ.

ຖ້າຄຳຮ້ອງທຸກຂອງທ່ານຕໍ່ DMHC ບໍ່ມີເງື່ອນໄຂໄດ້ຮັບ IMR, ທາງ DMHC ຈະຍັງກວດສອບຄຳຮ້ອງທຸກຂອງທ່ານ ເພື່ອໃຫ້ແນ່ ໃຈວ່າ Anthem ໄດ້ຕັດສິນໃຈຖືກຕ້ອງ ເມື່ອທ່ານຍື່ນອຸທອນການ ປະຕິເສດການບໍລິການ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ພະແນກການ ເບິ່ງແຍງດູແລສຸຂະພາບ ແບບມີການຄຸ້ມຄອງ ແຫ່ງລັດ California ເປັນຜູ້ຮັບຜິດຊອບໃນການຄຸ້ມຄອງ ແຜນການບໍລິການການ ເບິ່ງແຍງດູແລສຸຂະພາບ. ຖ້າທ່ານມີຄຳ ຮ້ອງທຸກຕໍ່ແຜນສຸຂະພາບຂອງທ່ານ, ກ່ອນອື່ນໝົດ ທ່ານຄວນ ໂທລະສັບຫາ ແຜນສຸຂະພາບຂອງທ່ານທີ່ເບີ **1-800-407-4627 (TTY 711)** ແລະ ໃຊ້ຂັ້ນຕອນການຮ້ອງທຸກຂອງ ແຜນສຸຂະພາບ ຂອງທ່ານກ່ອນທີ່ຈະຕິດຕໍ່ພະແນກ. ການໃຊ້ຂັ້ນຕອນການ ຮ້ອງທຸກນີ້ບໍ່ໄດ້ເປັນການຫ້າມສິດ ຫຼື ວິທີແກ້ໄຂທາງກົດໝາຍທີ່ ເປັນໄປໄດ້ທີ່ອາດມີໃຫ້ແກ່ທ່ານ. ຖ້າທ່ານຕ້ອງການຄວາມ ຊ່ວຍເຫຼືອໃນ ເລື່ອງການຮ້ອງທຸກທີ່ກ່ຽວຂ້ອງກັບ ເຫດສຸກເສີນ, ການຮ້ອງທຸກທີ່ບໍ່ໄດ້ຮັບການ ແກ້ໄຂ ໃຫ້ເປັນ ທີ່ພໍໃຈ ຈາກ ແຜນ ສຸຂະພາບ ຂອງ ທ່ານ ຫຼື ການ ຮ້ອງ ທຸ ກ ທີ່ ຍັ ງ ບໍ່ ໄ ດ້ ຮັ ບ ການ ແ ກ້ ໄ ຂ ເ ປັ ນ ເ ວ ລ າ ຫ ຼ າ ຍ ກ ວ່ າ 30 ວ ັ ນ, ທ່ ານ ສ າ ມ າ ດ ໂ ທ ຫ າ ພ ະ ແ ນ ກ ເ ພ ື່ ອ ຂ ໍ ຄ ວ າ ມ ຊ ່ ວ ຍ ເ ຫ ຼ ື ອ ໄ ດ້ . ນ ອ ກ ຈ າ ກ ນ ັ ້ ນ ທ່ ານ ຍ ັ ງ ອ າ ດ ຈ ະ ມ ີ ສ ິ ດ ໄ ດ້ ຮ ັ ບ ການ ກ ວ ດ ສ ອ ບ ທ າ ງ ການ ແ ພ ດ ອ ິ ດ ສ ະ ຫ ຼ ະ (IMR) ໄ ດ້ ອ ີ ກ ດ ້ ວ ຍ. ຖ ້ າ ທ ່ ານ ມ ີ ສ ິ ດ ໄ ດ ້ ຮ ັ ບ IMR, ຂ ະ ບ ວ ນ ການ IMR ຈ ະ ໃ ຫ ້ ການ ກ ວ ດ ສ ອ ບ ຢ ່ າ ງ ເ ປ ັ ນ ອ ິ ດ ສ ະ ຫ ຼ ະ ຈ າ ກ ຄ ຳ ຕ ັ ດ ສ ິ ນ ທ າ ງ ການ ແ ພ ດ ທ ີ່ ເ ຮ ັ ດ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າ ຫາ 7 ໂມງແລງ ຕາມ ເວລາ ປາຊີ ຟິ ກ. ການ ໂ ທ ແ ມ່ ນ ບໍ່ ເ ສ ຍ ຄ່ າ. ຫ ຼ ື ໂ ທ ຫ າ ສ າ ຍ ຖ ່ າ ຍ ທ ອ ດ ຂ ອ ງ ລ ັ ດ California ທ ີ່ ເ ບ ີ 711. ເ ຂ ົ້ າ ເ ບ ິ່ ງ ທ າ ງ ອ ອ ນ ລ າ ຍ ທ ີ່ **anthem.com/ca/medi-cal**.

ໂດຍແຜນສຸຂະພາບທີ່ກ່ຽວຂ້ອງກັບຄວາມຈຳເປັນທາງການແພດ ຂອງການບໍລິການ ຫຼື ການປິ່ນປົວທີ່ສະເໜີ, ການຕັດສິນເລື່ອງ ຄວາມຄຸ້ມຄອງປະກັນໄພສຳລັບການປິ່ນປົວທີ່ມີລັກສະນະດ້ານ ການທົດລອງ ຫຼື ສຶກສາວິໄຈ ແລະ ຂໍ້ຂັດແຍ່ງເລື່ອງການຈ່າຍ ເງິນສຳລັບການບໍລິການທາງການແພດສຸກເສີນ ຫຼື ຮີບດ່ວນ. ນອກຈາກນັ້ນ ພະແນກກໍຍັງມີເລກໝາຍໂທລະສັບໂທຟຣີ **1-888-466-2219** ແລະ ສາຍ TDD (**1-877-688-9891**) ສຳລັບຄົນທີ່ມີຄວາມບົກຜ່ອງທາງຫູ ແລະ ການປາກເວົ້າອີກ ດ້ວຍ. ເວັບໄຊເທິງອິນເຕີເນັດຂອງພະແນກ **dmhc.ca.gov/** ມີແບບຟອມຮ້ອງທຸກ, ແບບຟອມຂໍ IMR ແລະ ຄຳແນະນຳອື່ນໆ ທາງອອນລາຍ.

ການໄຕ່ສວນຂອງລັດ

ການໄຕ່ສວນຂອງລັດ ແມ່ນການປະຊຸມກັບ Anthem ແລະ ຜູ້ພິພາກສາມາຈາກ CDSS. ຜູ້ພິພາກສາດັ່ງກ່າວຈະຊ່ວຍທ່ານ ແກ້ໄຂບັນຫາຂອງທ່ານ ແລະ ບອກທ່ານວ່າພວກເຮົາໄດ້ຕັດສິນ

ໃຈຢ່າງຖືກຕ້ອງແລ້ວ ຫຼື ບໍ່. ທ່ານມີສິດຮ້ອງຂໍການໄຕ່ສວນຂອງລັດໄດ້ ຖ້າທ່ານໄດ້ຍື່ນການອຸທອນກັບພວກເຮົາແລ້ວ ແລະ ທ່ານຍັງບໍ່ພໍໃຈກັບການຕັດສິນດັ່ງກ່າວ ຫຼື ຖ້າທ່ານບໍ່ໄດ້ຮັບການຕັດສິນກ່ຽວກັບການອຸທອນຂອງທ່ານຫຼັງຈາກ 30 ວັນ.

ທ່ານຕ້ອງຮ້ອງຂໍການໄຕ່ສວນຂອງລັດພາຍໃນ 120 ວັນ ນັບຈາກວັນທີຢູ່ໃນຈົດໝາຍ NAR ຂອງພວກເຮົາ. ແນວໃດກໍຕາມ, ຖ້າພວກເຮົາໃຫ້ ການຊ່ວຍເຫຼືອທີ່ອອກໃຫ້ລະຫວ່າງລໍຖ້າການດຳເນີນການ ໃນລະຫວ່າງການອຸທອນຂອງທ່ານ ແລະ ທ່ານຕ້ອງການໃຫ້ມັນດຳເນີນຕໍ່ໄປຈົນກວ່າຈະມີການຕັດສິນກ່ຽວກັບການໄຕ່ສວນຂອງລັດ, ທ່ານຕ້ອງຮ້ອງຂໍໃຫ້ມີການໄຕ່ສວນຂອງລັດພາຍໃນ 10 ວັນ ຫຼັງວັນອອກຈົດໝາຍ NAR ຂອງພວກເຮົາ ຫຼື ກ່ອນວັນທີທີ່ພວກເຮົາໄດ້ບອກว່ການບໍລິການຂອງທ່ານຈະຢຸດ, ຂຶ້ນກັບວ່າອັນໃດຮອດຕາມຫຼັງ.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອເພື່ອເຮັດໃຫ້ແນ່ໃຈວ່າ ການຊ່ວຍເຫຼືອທີ່ອອກໃຫ້ລະຫວ່າງລໍຖ້າການດຳເນີນການ ຈະສືບຕໍ່ຈົນກວ່າຈະມີການຕັດສິນຂັ້ນສຸດທ້າຍກ່ຽວກັບການໄຕ່ສວນຂອງ

ລັດ, ກະລຸນາຕິດຕໍ່ Anthem ລະຫວ່າງ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ ໂດຍການໂທຫາເບີ **1-800-407-4627 (TTY 711)**. ຖ້າທ່ານບໍ່ສາມາດໄດ້ຍິນ ຫຼື ເວົ້າບໍ່ໄດ້ດີ, ໃຫ້ໂທຫາ **711**. ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດ ຫຼື ຜູ້ໃຫ້ບໍລິການຂອງທ່ານ ກໍສາມາດຂໍການໄຕ່ສວນຂອງລັດໃຫ້ທ່ານໄດ້ອີກດ້ວຍ ໂດຍມີການອະນຸຍາດເປັນລາຍລັກອັກສອນຈາກທ່ານ.

ບາງຄັ້ງທ່ານສາມາດຮ້ອງຂໍການໄຕ່ສວນຂອງລັດໄດ້ໂດຍບໍ່ຕ້ອງດຳເນີນຕາມຂະບວນການອຸທອນຂອງພວກເຮົາໃຫ້ສຳເລັດກ່ອນ. ຕົວຢ່າງ, ຖ້າພວກເຮົາບໍ່ໄດ້ແຈ້ງໃຫ້ທ່ານຮູ້ຢ່າງຖືກຕ້ອງ ຫຼື ທັນເວລາ ກ່ຽວກັບການບໍລິການຂອງທ່ານ, ທ່ານສາມາດຮ້ອງຂໍການພິຈາລະນາຄະດີຂອງລັດໄດ້ໂດຍບໍ່ຈຳເປັນຕ້ອງດຳເນີນການຕາມຂະບວນການອຸທອນຂອງພວກເຮົາໃຫ້ສຳເລັດ. ນີ້ແມ່ນເອີ້ນວ່າ: ການຖືວ່າສິ້ນສຸດທົນທາງແລ້ວ. ນີ້ແມ່ນບາງຕົວຢ່າງຂອງການສິ້ນສຸດທົນທາງ:

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ພວກເຮົາບໍ່ໄດ້ສ້າງຈົດໝາຍ NOA ຫຼື NAR ທີ່ມີ ໃຫ້ແກ່ທ່ານ ເປັນພາສາທີ່ທ່ານຕ້ອງການ
- ພວກເຮົາໄດ້ເຮັດຜິດພາດ ເຊິ່ງມີຜົນກະທົບຕໍ່ສິດໃດໜຶ່ງ ຂອງທ່ານ
- ພວກເຮົາບໍ່ໄດ້ໃຫ້ຈົດໝາຍ NOA ແກ່ທ່ານ
- ພວກເຮົາບໍ່ໄດ້ໃຫ້ຈົດໝາຍ NAR ແກ່ທ່ານ
- ພວກເຮົາ ເຮັດຜິດພາດ ໃນ ຈົດໝາຍ NAR ຂອງ ພວກ ເຮົາ
- ພວກ ເຮົາ ບໍ່ ໄດ້ ຕັດ ສິນ ການ ອຸ ທອ ນ ຂ ອ ງ ທ່ ານ ພ າ ຍ ໃ ນ 30 ວັ ນ. ພ ວ ກ ເ ຮົ າ ຕັ ດ ສິ ນ ວ່ າ ກ ໍ ລ ະ ນີ ຂ ອ ງ ທ່ ານ ແ ມ່ ນ ຮີ ບ ດ ່ ວ ນ, ແ ຕ ່ ບ ໍ ່ ໄ ດ ້ ໃ ຫ ້ ຄ ໍ າ ຕ ອ ບ ຕ ໍ ່ ການ ອ ຸ ທ ອ ນ ຂ ອ ງ ທ ່ ານ ພ າ ຍ ໃ ນ 72 ຊົ ່ ວ ໂ ມ ງ

ທ່ານ ສ າ ມ າ ດ ຮ ້ ອ ງ ຂ ໍ ກ ານ ໄ ຕ ່ ສ ອ ນ ຂ ອ ງ ລ ັ ດ ໄ ດ ້ ດ ້ ວ ຍ ຊ ່ ອ ງ ທ າ ງ ຕ ່ ໄ ປ ນ ີ້:

- **ທາງ ອ ອ ນ ລ າ ຍ:** ຮ ້ ອ ງ ຂ ໍ ກ ານ ໄ ຕ ່ ສ ອ ນ ທ າ ງ ອ ອ ນ ລ າ ຍ ທ ີ່ https://www.cdss.ca.gov

- **ແຟັກ:** ຕື່ມຂໍ້ມູນໃສ່ແບບຟອມທີ່ສົ່ງມາພ້ອມກັບແຈ້ງການ ກ່ຽວກັບການແກ້ໄຂການອຸທອນຂອງທ່ານ ແລະ ແຟັກໄປ ໃຫ້ ພະແນກການໄຕ່ສວນຂອງລັດ ທີ່ເບີ **1-833-281-0905**
- **ທາງໂທລະສັບ:** ໂທຫາ ພະແນກການໄຕ່ສວນຂອງລັດ ທີ່ເບີ **1-800-743-8525 (TTY 1-800-952-8349 ຫຼື 711)**
- **ທາງໄປສະນີ:** ຕື່ມຂໍ້ມູນໃສ່ແບບຟອມທີ່ໃຫ້ມາກັບແຈ້ງການ ກ່ຽວກັບການແກ້ໄຂການອຸທອນຂອງທ່ານ ແລະ ສົ່ງໄປຫາ:

  California Department of Social Services
  State Hearings Division
  P.O. Box 944243, MS 09-17-442
  Sacramento, CA 94244-2430

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຂໍການາໄຕ່ສວນຂອງ ລັດ, ພວກເຮົາສາມາດຊ່ວຍທ່ານໄດ້. ພວກເຮົາສາມາດໃຫ້ການ ບໍລິການດ້ານພາສາໂດຍບໍ່ເສຍຄ່າແກ່ທ່ານ. ໂທຫາເບີ **1-800-407-4627 (TTY 711)**.

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

ໃນລະຫວ່າງການພິຈາລະນາຄະດີ, ທ່ານຈະໃຫ້ຂໍ້ມູນໃນເບື້ອງ ຂອງທ່ານ. ພວກເຮົາຈະໃຫ້ຂໍ້ມູນໃນເບື້ອງຂອງພວກເຮົາ. ມັນ ອາດໃຊ້ເວລາຈົນເຖິງ 90 ວັນເພື່ອໃຫ້ຜູ້ພິພາກສາຕັດສິນກໍລະນີ ຂອງທ່ານ. Anthem ຕ້ອງປະຕິບັດຕາມສິ່ງທີ່ຜູ້ພິພາກສາຕັດສິນ.

ຖ້າທ່ານຕ້ອງການໃຫ້ CDSS ຕັດສິນໃຈຢ່າງວ່ອງໄວ ເພາະວ່າ ເວລາທີ່ຈະຕ້ອງໃຊ້ສໍາລັບການໄຕ່ສວນຂອງລັດຈະເຮັດໃຫ້ຊີວິດ, ສຸຂະພາບ ຫຼື ຄວາມສາມາດໃນການທໍາງານຂອງຮ່າງກາຍ ຂອງທ່ານຕົກຢູ່ໃນອັນຕະລາຍ, ທ່ານ ຫຼື ຜູ້ຕາງໜ້າທີ່ໄດ້ຮັບ ອະນຸຍາດຂອງທ່ານສາມາດຕິດຕໍ່ CDSS ແລະ ຮ້ອງຂໍການໄຕ່ ສວນແບບເລັ່ງດ່ວນ (ໄວ) ໄດ້. CDSS ຈະຕ້ອງຕັດສິນໃຈບໍ່ເກີນ 3 ວັນລັດຖະການ ຫຼັງຈາກທີ່ຕົນໄດ້ຮັບເອກະສານກໍລະນີຢ່າງ ຄົບຖ້ວນຂອງທ່ານ ຈາກ Anthem.

ການສໍ້ໂກງ, ການສົ້ນເປືອງ ແລະ ການສວຍໃຊ້

ຖ້າທ່ານສົງໄສວ່າຜູ້ໃຫ້ບໍລິການ ຫຼື ບຸກຄົນທີ່ໄດ້ຮັບ Medi-Cal ໄດ້ກະທໍາການສໍ້ໂກງ, ເຮັດໃຫ້ສົ້ນເປືອງ ຫຼື ສວຍໃຊ້, ທ່ານມີ

ພັນທະທີ່ຈະລາຍງານມັນ ໂດຍການໂທຫາເບີໂທລະສັບໂທຟຣີ ທີ່ເປັນຄວາມລັບທີ່ເບີ **1-800-822-6222 (TTY 711)** ຫຼື ສົ່ງຄຳຮ້ອງທຸກທາງອອນລາຍທີ່ https://www.dhcs.ca.gov/.

ການສໍ້ໂກງ, ການສິ້ນເປືອງ ແລະ ການສວຍໃຊ້ ຂອງຜູ້ໃຫ້ບໍລິການ ປະກອບດ້ວຍ:

- ການປອມແປງບັນທຶກທາງການແພດ
- ການສັ່ງຢາຫຼາຍເກີນກວ່າທີ່ມີຄວາມຈຳເປັນທາງການແພດ
- ການໃຫ້ການບໍລິການດູແລສຸຂະພາບເກີນກວ່າຄວາມຈຳເປັນທາງການແພດ
- ການຮຽກເກັບເງິນສຳລັບການບໍລິການທີ່ບໍ່ໄດ້ໃຫ້
- ການຮຽກເກັບເງິນສຳລັບການບໍລິການຂອງຜູ້ຊ່ຽວຊານ ເມື່ອຜູ້ຊ່ຽວຊານບໍ່ໄດ້ໃຫ້ການບໍລິການ
- ການສະເໜີລາຍການ ແລະ ການບໍລິການທີ່ບໍ່ເສຍຄ່າ ຫຼື ຫຼຸດລາຄາໃຫ້ແກ່ສະມາຊິກເພື່ອພະຍາຍາມໂນ້ມນ້າວໃຫ້ສະມາຊິກເລືອກຜູ້ໃຫ້ບໍລິການໃດໜຶ່ງ

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ການປ່ຽນແພດປະຈຳຂອງສະມາຊິກໂດຍສະມາຊິກບໍ່ໄດ້ຮັບຮູ້

ການສໍ້ໂກງ, ການສົ້ນເປືອງ ແລະ ການສວຍໃຊ້ ໂດຍບຸກຄົນທີ່ໄດ້ຮັບສິດທິປະໂຫຍດ ແມ່ນລວມທັງ, ແຕ່ບໍ່ຈຳກັດພຽງແຕ່:

- ການໃຫ້ຢືມ, ການຂາຍ ຫຼື ການໃຫ້ບັດ ID ແຜນປະກັນສຸຂະພາບ ຫຼື ບັດປະຈຳຕົວສິດທິປະໂຫຍດ (BIC) ຂອງ Medi-Cal ແກ່ບຸກຄົນອື່ນ
- ໄດ້ຮັບການປິ່ນປົວ ຫຼື ຢາປົວພະຍາດ ທີ່ຄ້າຍຄືກັນ ຫຼື ອັນດຽວກັນ ຈາກຜູ້ໃຫ້ບໍລິການຫຼາຍກວ່າໜຶ່ງຄົນ
- ການໄປປິ່ນປົວທີ່ຫ້ອງສຸກເສີນ ໃນເວລາທີ່ມັນບໍ່ແມ່ນການເຈັບເປັນສຸກເສີນ
- ການໃຊ້ໝາຍເລກ ປະກັນສັງຄົມ ຫຼື ເລກບັດ ID ແຜນປະກັນສຸຂະພາບຂອງບຸກຄົນອື່ນ
- ການນຳໃຊ້ໂດຍສານຂົນສົ່ງທາງການແພດ ແລະ ທີ່ບໍ່ແມ່ນທາງການແພດສຳລັບການບໍລິການທີ່ບໍ່ກ່ຽວຂ້ອງກັບການດູແລສຸຂະພາບ, ສຳລັບການບໍລິການທີ່ບໍ່ໄດ້

ຮັບການຄຸ້ມຄອງໂດຍ Medi-Cal ຫຼື ໃນເວລາທີ່ທ່ານບໍ່ມີການນັດໝາຍທາງການແພດ ຫຼື ໄປຮັບໃບສັ່ງຢາ

ເພື່ອລາຍງານການສໍ້ໂກງ, ການສິ້ນເປືອງ ແລະ ການປະສວຍໃຊ້, ໃຫ້ຊຶ່ງນຊື່, ທີ່ຢູ່ ແລະ ໝາຍເລກບັດ ID ຂອງບຸກຄົນຜູ້ທີ່ກະທຳການສໍ້ໂກງ, ການສິ້ນເປືອງ ຫຼື ການສວຍໃຊ້. ໃຫ້ຂໍ້ມູນຫຼາຍເທົ່າທີ່ທ່ານສາມາດໃຫ້ໄດ້ກ່ຽວກັບບຸກຄົນດັ່ງກ່າວ ເຊັ່ນ: ເບີໂທລະສັບ ຫຼື ຄວາມຊ່ຽວຊານສະເພາະດ້ານ ຖ້າເປັນຜູ້ໃຫ້ບໍລິການ. ລະບຸວັນທີຂອງເຫດການ ແລະ ສັງລວມວ່າເກີດຫຍັງຂຶ້ນແທ້.

ສົ່ງລາຍງານຂອງທ່ານຫາ:

ທາງໄປສະນີ: Attn: Special Investigations Unit (SIU)
Anthem Blue Cross
21215 Burbank Blvd.
Woodland Hills, CA 91367

ທາງໂທລະສັບ: ສາຍຮັບແຈ້ງການສໍ້ໂກງຂອງ SIU ຂອງ Anthem**: 1-888-231-5044 (TTY 711)**

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

7. ສິດທິ ແລະ ຄວາມຮັບຜິດຊອບຕ່າງໆ

ໃນຖານະສະມາຊິກຂອງ Anthem, ທ່ານມີສິດ ແລະ ຄວາມຮັບຜິດຊອບທີ່ແນ່ນອນຈຳນວນໜຶ່ງ. ພາກນີ້ອະທິບາຍເຖິງສິດທິ ແລະ ຄວາມຮັບຜິດຊອບ ເຫຼົ່ານີ້. ນອກຈາກນັ້ນ, ໃນພາກນີ້ກໍຍັງລວມມີແຈ້ງການດ້ານກົດໝາຍ ທີ່ທ່ານມີສິດໄດ້ຮັບໃນຖານະເປັນສະມາຊິກຂອງ Anthem ອີກດ້ວຍ.

ສິດຂອງທ່ານ

ຕໍ່ໄປນີ້ແມ່ນສິດຂອງທ່ານໃນຖານະສະມາຊິກຂອງ Anthem:

- ເພື່ອໃຫ້ໄດ້ຮັບການປະຕິບັດດ້ວຍຄວາມເຄົາລົບ ແລະ ໃຫ້ກຽດ, ໂດຍຄຳນຶງເຖິງສິດໃນຄວາມເປັນສ່ວນຕົວຂອງທ່ານ

ແລະ ຄວາມຈຳເປັນໃນການຮັກສາຄວາມລັບຂອງຂໍ້ມູນ ທາງການແພດຂອງທ່ານ

- ເພື່ອໃຫ້ຂໍ້ມູນກ່ຽວກັບແຜນປະກັນ ແລະ ການບໍລິການ ລວມທັງການບໍລິການທີ່ໄດ້ຮັບຄວາມຄຸ້ມຄອງ, ຜູ້ປະຕິບັດງານ ແລະ ສິດ ແລະ ຄວາມຮັບຜິດຊອບຂອງ ສະມາຊິກ
- ເພື່ອຮັບເອົາຂໍ້ມູນສະມາຊິກທີ່ແປຄົບຖ້ວນ ເປັນພາສາທີ່ ທ່ານຕ້ອງການ, ລວມທັງແຈ້ງການກ່ຽວກັບການ ຮ້ອງທຸກ ແລະ ການອຸທອນທັງໝົດ
- ເພື່ອໃຫ້ຄຳແນະນຳກ່ຽວກັບນະໂຍບາຍວ່າດ້ວຍສິດ ແລະ ຄວາມຮັບຜິດຊອບຂອງສະມາຊິກ ຂອງ Anthem
- ເພື່ອໃຫ້ສາມາດເລືອກຜູ້ໃຫ້ບໍລິການດູແລຮັກສາຫຼັກພາຍ ໃນເຄືອຂ່າຍຂອງ Anthem
- ເພື່ອໃຫ້ສາມາດເຂົ້າເຖິງຜູ້ໃຫ້ບໍລິການ ເຄືອຂ່າຍໄດ້ ທັນເວລາ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າ ເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ເພື່ອເຂົ້າຮ່ວມໃນການຕັດສິນໃຈກັບຜູ້ໃຫ້ບໍລິການກ່ຽວກັບການດູແລສຸຂະພາບຂອງທ່ານເອງ, ລວມທັງສິດທີ່ຈະປະຕິເສດການປິ່ນປົວ
- ເພື່ອຮ້ອງທຸກບໍ່ວ່າຈະເປັນທາງວາຈາ ຫຼື ເປັນລາຍລັກອັກສອນ, ກ່ຽວກັບອົງກອນ ຫຼື ການດູແລທີ່ທ່ານໄດ້ຮັບ
- ເພື່ອຮູ້ເຫດຜົນທາງການແພດສຳລັບການຕັດສິນໃຈຂອງ Anthem ທີ່ຈະປະຕິເສດ, ເລື່ອນ, ຍຸດຕິ ຫຼື ປ່ຽນຄຳຮ້ອງຂໍການດູແລຮັກສາທາງການແພດ
- ເພື່ອໄດ້ຮັບການປະສານການດູແລ
- ເພື່ອຂໍການອຸທອນຂອງການຕັດສິນໃຈຕໍ່ການປະຕິເສດ, ເລື່ອນ ຫຼື ຈຳກັດການບໍລິການ ຫຼື ສິດທິປະໂຫຍດ
- ເພື່ອໃຫ້ໄດ້ຮັບການບໍລິການແປພາສາທີ່ບໍ່ມີຄ່າໃຊ້ຈ່າຍສຳລັບພາສາຂອງທ່ານ
- ເພື່ອໃຫ້ໄດ້ຮັບຄວາມຊ່ວຍເຫຼືອດ້ານກົດໝາຍໂດຍບໍ່ເສຍຄ່າທີ່ຫ້ອງການຊ່ວຍເຫຼືອດ້ານກົດໝາຍ ທ້ອງຖິ່ນຂອງທ່ານ ຫຼື ກຸ່ມອື່ນໆ
- ເພື່ອສ້າງຄຳສັ່ງເສຍໄວ້ລ່ວງໜ້າ

ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອນລາຍທີ່ **anthem.com/ca/medi-cal**.

- ເພື່ອຂໍການໄຕ່ສວນຂອງລັດ ຖ້າການບໍລິການ ຫຼື ສິດທິປະໂຫຍດຖືກປະຕິເສດ ແລະ ທ່ານໄດ້ຍື່ນອຸທອນກັບ Anthem ແລ້ວ, ແຕ່ທ່ານຍັງບໍ່ພໍໃຈກັບການຕັດສິນດັ່ງກ່າວ ຫຼື ຖ້າທ່ານບໍ່ໄດ້ຮັບການຕັດສິນກ່ຽວກັບການອຸທອນຂອງທ່ານຫຼັງຈາກ 30 ວັນ, ລວມທັງຂໍ້ມູນກ່ຽວກັບສະພາບການຕ່າງໆພາຍໃຕ້ເງື່ອນໄຂວ່າເປັນໄປໄດ້ທີ່ຈະມີການໄຕ່ສວນເລັ່ງດ່ວນ
- ເພື່ອຖອນຕົວ (ອອກ) ຈາກການລົງທະບຽນເຂົ້າໃນ Anthem ແລະ ປ່ຽນເປັນແຜນສຸຂະພາບອື່ນໃນຄາວຕີ້ຕາມການຮ້ອງຂໍ
- ເພື່ອເຂົ້າເຖິງການບໍລິການທີ່ໄດ້ຮັບຄວາມຍິນຍອມໂດຍເດັກນ້ອຍ
- ເພື່ອຮັບເອກະສານຂໍ້ມູນສະມາຊິກທີ່ເປັນລາຍລັກອັກສອນໃນຮູບແບບທາງອື່ນໆ (ເຊັ່ນ: ອັກສອນນູນສຳລັບຄົນຕາບອດ, ການພິມຂະໜາດໃຫຍ່, ຮູບແບບຟັງສຽງໄດ້ ແລະ ເຂົ້າເຖິງໄດ້ທາງອີເລັກໂຕຣນິກ) ຕາມການຮ້ອງຂໍ ແລະ ທັນເວລາທີ່ເໝາະສົມກັບຮູບແບບທີ່ຖືກຮຽກຮ້ອງ

ແລະ ສອດຄ່ອງກັບປະມວນກົດໝາຍສະຫວັດດີການ ແລະ ສະຖາບັນ ມາດຕາ 14182 (b)(12)

- ເພື່ອພົ້ນຈາກທຸກຮູບແບບຂອງການຈຳກັດ ຫຼື ການເກັບຕົວທີ່ໃຊ້ເປັນວິທີການບັງຄັບ, ການລົງ�โທດ, ຄວາມສະດວກ ຫຼື ການແກ້ແຄ້ນ
- ເພື່ອປຶກສາຫາລືຢ່າງຈິງຈັງກ່ຽວກັບຂໍ້ມູນກ່ຽວກັບທາງເລືອກໃນການປິ່ນປົວທີ່ມີຢູ່ ແລະ ທາງເລືອກໃນການປິ່ນປົວ, ນຳສະເໜີໃນແບບທີ່ເໝາະສົມກັບອາການ ແລະ ຄວາມສາມາດຂອງທ່ານທີ່ຈະເຂົ້າໃຈ, ໂດຍບໍ່ກ່ຽວຂ້ອງກັບຄ່າໃຊ້ຈ່າຍ ຫຼື ການຄຸ້ມຄອງດູແລ
- ເພື່ອໃຫ້ສາມາດເຂົ້າເຖິງ ແລະ ໄດ້ຮັບສຳເນົາຂອງບັນທຶກທາງການແພດຂອງທ່ານ ແລະ ຂໍໃຫ້ປັບປຸງ ຫຼື ແກ້ໄຂ, ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍກົດລະບຽບລັດຖະບານກາງ (CFR) 45 ມາດຕາ 164.524 ແລະ 164.526

- ເສລີພາບໃນການໃຊ້ສິດເຫຼົ່ານີ້ໂດຍບໍ່ສົ່ງຜົນກະທົບທາງລົບຕໍ່ວິທີການທີ່ທ່ານໄດ້ຮັບການປະຕິບັດນຳໂດຍ Anthem, ຜູ້ໃຫ້ບໍລິການຂອງທ່ານ ຫຼື ລັດ
- ເພື່ອການເຂົ້າເຖິງການບໍລິການວາງແຜນຄອບຄົວ, ສູນການບໍລິການການກຳເນີດແບບອິດສະຫຼະ, ສູນສຸຂະພາບທີ່ຜ່ານການຢັ້ງຢືນຈາກລັດຖະບານກາງ, ຄລີນິກສຸຂະພາບອິນເດຍ, ການບໍລິການຜະດຸງຄັນ, ສຸກສາລາຊົນນະບົດ, ບໍລິການການຕິດເຊື້ອພະຍາດຕິດຕໍ່ທາງເພດສຳພັນ ແລະ ການບໍລິການສຸກເສີນຢູ່ນອກເຄືອຂ່າຍຂອງ Anthem ຕາມກົດໝາຍຂອງລັດຖະບານກາງ

ຄວາມຮັບຜິດຊອບຂອງທ່ານ

ສະມາຊິກຂອງ Anthem ມີຄວາມຮັບຜິດຊອບ ດັ່ງຕໍ່ໄປນີ້:

- ຕິດຕໍ່ PCP ຂອງທ່ານໃນທັນທີ ເພື່ອກຳນົດ ການປະເມີນສຸຂະພາບເບື້ອງຕົ້ນ (ພາຍໃນ 120 ວັນນັບຈາກການລົງທະບຽນ) ສຳລັບທ່ານ ຫຼື ລູກຂອງທ່ານ.

- ໃຫ້ຂໍ້ມູນທີ່ຈຳເປັນເພື່ອຊ່ວຍໃຫ້ທ່ານໄດ້ຮັບການດູແລທີ່ດີທີ່ສຸດທີ່ເປັນໄປໄດ້ ແລະ ໄດ້ຮັບສິດທິປະໂຫຍດທັງຫມົດທີ່ທ່ານມີສິດໄດ້ຮັບ ໃຫ້ແກ່ພວກເຮົາ, ທ່ານໝໍຂອງທ່ານ ແລະ ຜູ້ໃຫ້ບໍລິການດ້ານການດູແລສຸຂະພາບອື່ນໆ.
- ທຳຄວາມເຂົ້າໃຈບັນຫາສຸຂະພາບຂອງທ່ານໃຫ້ດີທີ່ສຸດເທົ່າທີ່ທ່ານສາມາດເຮັດໄດ້ ແລະ ເຮັດວຽກຮ່ວມກັບທ່ານໝໍ ຫຼື ຜູ້ໃຫ້ບໍລິການດ້ານສຸຂະພາບອື່ນໆ ເພື່ອສ້າງແຜນການປິ່ນປົວທີ່ພວກທ່ານຫມົດທຸກຄົນຕົກລົງເຫັນດີ.
- ປະຕິບັດຕາມ ແຜນການດູແລທີ່ທ່ານໄດ້ຕົກລົງກັນໄວ້ ກັບ ທ່ານໝໍຂອງທ່ານ ແລະ ຜູ້ໃຫ້ບໍລິການດ້ານການດູແລ ສຸຂະພາບອື່ນໆ.
- ປະຕິບັດຕາມຄຳແນະນຳຂອງທ່ານໝໍ ກ່ຽວກັບການດູແລ ຕົວທ່ານເອງ.
- ໃຊ້ແຫຼ່ງການດູແລທີ່ຖືກຕ້ອງ.
- ຖືບັດ ID ຂອງ Anthem ຂອງທ່ານຕິດຕົວໄປນຳທ່ານ ໃນ ເວລາທ່ານໄປພົບທ່ານໝໍ.

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ປະຕິບັດຕໍ່ທ່ານໝໍ ແລະ ຜູ້ເບິ່ງແຍງດູແລຄົນອື່ນໆ ດ້ວຍຄວາມເຄົາລົບ.
- ທຳຄວາມເຂົ້າໃຈແຜນປະກັນສຸຂະພາບນີ້.
- ຮັບຮູ້ ແລະ ປະຕິບັດຕາມກົດລະບຽບຂອງແຜນປະກັນສຸຂະພາບນີ້.
- ຮູ້ກົດໝາຍທີ່ຄຸ້ມຄອງແຜນປະກັນສຸຂະພາບນີ້ ແລະ ປະເພດການບໍລິການທີ່ທ່ານໄດ້ຮັບ.
- ຮູ້ວ່າພວກເຮົາບໍ່ສາມາດຈຳແນກຕໍ່ທ່ານໄດ້ ເນື່ອງຈາກ ອາຍຸ, ເພດ, ເຊື້ອຊາດ, ຊາດກຳເນີດ, ວັດທະນະທຳ, ຄວາມຕ້ອງການດ້ານພາສາ, ລົດສະນິຍົມທາງເພດ ຫຼື ສຸຂະພາບຂອງທ່ານ.

ແຈ້ງການກ່ຽວກັບການບໍ່ຈຳແນກ

ການຈຳແນກແມ່ນຜິດຕໍ່ກົດໝາຍ. Anthem Blue Cross ປະຕິບັດຕາມບັນດາກົດໝາຍວ່າດ້ວຍສິດທິພົນລະເຮືອນຂອງ ລັດ ແລະ ລັດຖະບານກາງ. Anthem ບໍ່ມີການຈຳແນກ, ລະ

ເວັ້ນບຸກຄົນຢ່າງຜິດກົດໝາຍ ຫຼື ປະຕິບັດຕໍ່ເຂົາເຈົ້າແບບແຕກຕ່າງກັນ ຍ້ອນ ເພດ, ເຊື້ອຊາດ, ສີຜິວ, ສາສະໜາ, ເຊື້ອສາຍ, ຊາດກຳເນີດ, ການເປັນກຸ່ມຊົນເຜົ່າສ່ວນໜ້ອຍ, ອາຍຸ, ຄວາມພິການທາງຈິດໃຈ, ຄວາມພິການທາງຮ່າງກາຍ, ສະພາວະທາງການແພດ, ຂໍ້ມູນພັນທຸກຳ, ສະຖານະພາບການແຕ່ງງານ, ເພດ, ຮູບປະພັນທາງເພດ ຫຼື ລົດສະນິຍົມທາງເພດ.

Anthem ໃຫ້:

- ການໃຫ້ການຊ່ວຍເຫຼືອ ແລະ ການບໍລິການໂດຍບໍ່ໄດ້ຄິດຄ່າ ແກ່ຄົນເສຍອົງຄະເພື່ອຊ່ວຍໃຫ້ພວກເຂົາສາມາດສື່ສານໄດ້ດີຂຶ້ນ ເຊັ່ນວ່າ:
  - ລ່າມແປພາສາໃບ້ທີ່ມີຄຸນສົມບັດຄົບຖ້ວນ
  - ຂໍ້ມູນເປັນລາຍລັກອັກສອນໃນຮູບແບບອື່ນໆ (ຕົວພິມໃຫຍ່, ສຽງບັນທຶກ, ຮູບແບບທີ່ເຂົ້າເຖິງໄດ້ທາງເອເລັກໂຕນິກ ແລະ ຮູບແບບອື່ນໆອີກ)
- ການບໍລິການດ້ານພາສາໂດຍບໍ່ເສຍຄ່າໃຫ້ແກ່ຜູ້ທີ່ມີພາສາຫຼັກທີ່ບໍ່ແມ່ນພາສາອັງກິດ ເຊັ່ນ:

? ໂທຫາ ສູນດູແລລູກຄ້າ ທີ່ເບີ **1-800-407-4627 (TTY 711)**. Anthem ໃຫ້ບໍລິການ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງເຊົ້າຫາ 7 ໂມງແລງ ຕາມເວລາປາຊີຟິກ. ການໂທແມ່ນບໍ່ເສຍຄ່າ. ຫຼື ໂທຫາສາຍຖ່າຍທອດຂອງລັດ California ທີ່ເບີ 711. ເຂົ້າເບິ່ງທາງອອອນລາຍທີ່ **anthem.com/ca/medi-cal**.

- ລ່ານ ແປພາສາທີ່ມີຄຸນວຸດທິ
- ຂໍ້ມູນທີ່ເປັນລາຍລັກອັກສອນ ເປັນພາສາອື່ນ

ຖ້າທ່ານຕ້ອງການການບໍລິການ ເຫຼົ່ານີ້, ຕິດຕໍ່ Anthem ລະຫວ່າງ ວັນຈັນ ເຖິງ ວັນສຸກ, ແຕ່ 7 ໂມງ ເຊົ້າ ຫາ 7 ໂມງ ແລງ ຕາມ ເວລາ ປາຊີຟິກ ໂດຍການ ໂທ ຫາ **1-800-407-4627 (TTY 711)**. ຫຼື ຖ້າທ່ານ ບໍ່ສາມາດ ໄດ້ຍິນ ຫຼື ເວົ້າ ບໍ່ ໄດ້ດີ, ກະລຸນາ ໂທ ຫາ **711** ເພື່ອ ໃຊ້ ການ ບໍລິການ ຖ່າຍ ທອດ ຂອງ ລັດ California.

ວິທີ ການ ຍື່ນ ເລື່ອງ ຮ້ອງ ທຸກ

ຖ້າ ທ່ານ ເຊື່ອ ວ່າ Anthem ບໍ່ ສາ ມາ ດ ໃຫ້ ບໍ ລິ ການ ເຫຼົ່ານີ້ ຫຼື ມີ ການ ຈໍ ແນ ກ ຢ່ າ ງ ຜິ ດ ກົ ດ ໝ າ ຍ ໄ ປ ໃ ນ ທ າ ງ ອື່ ນ ບ ົ ນ ພື ້ ນ ຖ ານ ເ ພ ດ , ເ ຊ ື ້ ອ ຊ າ ດ , ສ ີ ຜ ິ ວ , ສ າ ສ ະ ຫ ນ າ , ບ ັ ນ ພ ະ ບ ຸ ລ ຸ ດ , ຊ າ ດ ກ ຳ ເ ນ ີ ດ , ການ ລ ະ ບ ຸ ກ ຸ ່ ມ ຊ ົ ນ ເ ຜ ົ ່ າ , ອ າ ຍ ຸ , ຄ ວ າ ມ ພ ິ ກ ານ ທ າ ງ ຈ ິ ດ ໃ ຈ , ຄ ວ າ ມ ພ ິ ກ ານ ທ າ ງ ຮ ່ າ ງ ກ າ ຍ , ພ າ ວ ະ ທ າ ງ ກ ານ ແ ພ ດ , ຂ ໍ ້ ມ ູ ນ ກ ຳ ມ ະ ພ ັ ນ , ສ ະ ຖ ານ ະ ການ ແ ຕ ່ ງ ງ ານ , ເ ພ ດ , ເ ອ ກ ະ ລ ັ ກ ທ າ ງ ເ ພ ດ ຫ ຼ ື ລ ິ ດ ສ ະ ນ ິ ຍ ົ ມ ທ າ ງ ເ ພ ດ , ທ່ ານ ສ າ ມ າ ດ ຍ ື ່ ນ ຄ ຳ ຮ ້ ອ ງ ທ ຸ ກ ກ ັ ບ ຜ ູ ້ ປ ະ ສ ານ ງ ານ

